ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

18- 27 ກໍລະກົດ 2023
ປີທີ 12
ສະບັບທີ 931
ລາຍສັປະດາ

## ກອງປະຊຸມສະໄໝສາມັນເທື່ອທີ 5 ສະພາແຫ່ງຊາດ ຊຸດທີ IX ໄດ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ



(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ສຳເລັດລົງດ້ວຍໝາກຜົນອັນຈົບງາມ ແລະ ໄດ້ອັດລົງຢ່າງເປັນທາງການ ພາຍຫຼັງດຳເນີນມາເປັນເວລາ 17 ໃນຕອນບ່າຍຂອງວັນທີ 18 ກໍລະກົດ 2023 ພາຍໃຕ້ການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປ ລາວ; ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ; ມີການນຳພັກ-ລັດ, ສະມາຊິກສະພາແຫ່ງຊາດ (ສສຊ), ອະດີດການນຳພັກ-ລັດ, ພະນັກງານອາວຸໂສບຳນານ, ອະດີດ ສສຊ, ຕາງໜ້າຈາກອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍຜູ້ຕາງໜ້າຈາກພາກສ່ວນຕ່າງໆ ແລະ ແຂກຖືກເຊີນ.

ຕະຫລອດ 17 ວັນຂອງການດຳເນີນກອງປະຊຸມ, ຄະນະປະທານໄດ້ຜັດປ່ຽນກັນເປັນປະທານກອງປະຊຸມ, ຮັບຟັງການລາຍງານ, ຄຳຊີ້ແຈງຈາກພາກສ່ວນຕ່າງໆ; ພ້ອມດຽວກັນນີ້, ບັນດາ ສສຊ ປະຈຳເຂດເລືອກຕັ້ງທົ່ວປະເທດ ໄດ້ສຸມໃສ່ຄົ້ນຄວ້າພິຈາລະນາ ແລະ ເຫັນດີຮັບຮອງບາງບັນຫາສຳຄັນຕ່າງໆຂອງຊາດ.

ໃນລະຫວ່າງວັນທີ 10-17 ກໍລະກົດ 2023 ທີ່ປະຊຸມໄດ້ຮັບຟັງ, ປະກອບຄຳເຫັນ ແລະ ພິຈາລະນາໃສ່ບັນດາຮ່າງກົດໝາຍສ້າງໃໝ່ ແລະ ປັບປຸງ ພ້ອມທັງໄດ້ລົງຄະແນນສຽງຮັບຮອງຮ່າງກົດໝາຍ ຈຳນວນ 10 ສະບັບ ດ້ວຍຄະແນນສຽງເຫັນດີຈຳນວນຫຼາຍ ແລະ ລົງຄະແນນສຽງບໍ່ເຫັນດີຕໍ່ບາງມາດຕາຂອງກົດໝາຍຄື: ກົດໝາຍວ່າດ້ວຍອາກອນທີ່ດິນ (ສ້າງໃໝ່) ຄະແນນສຽງເຫັນດີ 93,47% ບໍ່ເຫັນດີ 5,79% ບໍ່ອອກສຽງ 0,72%; ກົດໝາຍວ່າດ້ວຍເຍົາວະຊົນລາວ (ສ້າງໃໝ່) ຄະແນນສຽງເຫັນດີ

ອ່ານຕໍ່ໜ້າ 7

## ສູນທອນພົດ

### ຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ກ່າວປິດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX




ຮຽນ: - ທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

- ບັນດາທ່ານ ຜູ້ນຳຂັ້ນສູງ, ອະດີດຜູ້ນຳຂັ້ນສູງຂອງພັກ-ລັດ ທີ່ນັບຖື.

- ທ່ານ ນາຍົກລັດຖະມົນຕີ, ສະມາຊິກລັດຖະບານ ທີ່ຮັກແພງ.

- ບັນດາທ່ານສະມາຊິກສະພາແຫ່ງຊາດ, ແຂກທີ່ມີກຽດທີ່ນັບຖື ແລະ ຮັກແພງທັງຫຼາຍ.

ພາຍຫຼັງດຳເນີນມາເປັນເວລາ 17 ວັນ, ນັບແຕ່ວັນທີ 26 ມິຖຸນາ ຫາ ວັນທີ 18 ກໍລະກົດ 2023 ດ້ວຍຄວາມເຄັ່ງຮ້ອນ, ເຕັມໄປດ້ວຍຄວາມຮັບຜິດຊອບສູງ, ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ມາຮອດມື້ນີ້ ໄດ້ບັນລຸຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້. ກອງປະຊຸມຕີລາຄາສູງທີ່ສະມາຊິກສະພາແຫ່ງຊາດ, ສະມາຊິກລັດຖະບານ, ຜູ້ແທນກອງປະຊຸມຈາກພາກສ່ວນທີ່ກ່ຽວຂ້ອງ ໄດ້ພ້ອມກັນທຸ່ມເທເຫື່ອແຮງ, ສະຕິປັນຍາ ແລະ ເສີມຂະຫຍາຍສິດປະຊາທິປະໄຕເຂົ້າໃສ່ການຄົ້ນຄວ້າ, ພິຈາລະນາ ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ແລະ ບັນຫາສຳຄັນພື້ນຖານຂອງປະເທດຊາດ ເຊິ່ງເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມຄົບຄະນະ ຄັ້ງທີ 6 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ເຂົ້າສູ່ວຽກງານຕົວຈິງ ອັນໄດ້ເຮັດໃຫ້ປະ

ອ່ານຕໍ່ໜ້າ 2

## ສະພາແຫ່ງຊາດ ຖະແຫຼງຜົນການພິຈາລະນາຮັບຮອງເອົາກົດໝາຍ



(ສພຊ) ວັນທີ 17 ກໍລະກົດ 2023, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນການພິຈາລະນາ ແລະ ຮັບຮອງເອົາກົດໝາຍ ໃຫ້ປະຊາຊົນລາວບັນດາເຜົ່າພາຍໃນປະເທດ ແລະ ພີ່ນ້ອງຊາວລາວຢູ່ຕ່າງປະເທດ ໄດ້ຮັບຊາບຢ່າງທົ່ວເຖິງກັນວ່າ: ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນມາແຕ່ວັນທີ 26 ມິຖຸນາ 2023 ເປັນເວລາ 22 ວັນ, ກອງປະຊຸມໄດ້ຄົ້ນຄວ້າພິຈາລະນາຮັບຮອງເອົາເນື້ອໃນທີ່ສຳຄັນຫຼາຍບັນຫາ ເຊິ່ງບັນດາທ່ານຮອງປະທານສະພາແຫ່ງຊາດ ທີ່ຊີ້ນຳແຕ່ລະຂົງເຂດ ໄດ້ຖະແຫຼງຂ່າວໃຫ້ຊາບແລ້ວ ແລະ ເລີ່ມແຕ່ວັນທີ 6-14 ກໍລະກົດ 2023 ກອງປະຊຸມໄດ້ສຸມໃສ່ພິຈາລະນາປະກອບຄຳເຫັນໃສ່ເນື້ອໃນແຕ່ລະຮ່າງກົດໝາຍຢ່າງລະອຽດຖີ່ຖ້ວນ; ຫຼັງຈາກນັ້ນ, ຄະນະຮັບຜິດຊອບແຕ່ລະຮ່າງກົດໝາຍ ໄດ້ປັບປຸງຮ່າງກົດໝາຍ ຕາມຄຳເຫັນຂອງບັນດາ

ອ່ານຕໍ່ໜ້າ 11

## ຖະແຫຼງຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX

(ສພຊ) ວັນທີ 18 ກໍລະກົດ 2023, ທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ ໃນນາມຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ວ່າ: ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນເປັນເວລາ 17 ວັນ ພາຍໃຕ້ການນຳພາຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ,



ປະທານຄະນະປະຈຳສະພາແຫ່ງຊາດ ແລະ ການສຸມເຫື່ອແຮງສະຕິປັນຍາຂອງບັນດາທ່ານສະມາຊິກສະພາແຫ່ງຊາດ, ການປະກອບສ່ວນຂອງລັດຖະບານ, ອົງການ, ກະຊວງ, ຂະແໜງການຕ່າງໆ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເຂົ້າໃນການກະກຽມ ແລະ ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເຮັດໃຫ້ການພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງຊາດ ຕາມສິດ

ອ່ານຕໍ່ໜ້າ 9

## ຜົນການພິຈາລະນາ ການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ

(ສພຊ) ວັນທີ 17 ກໍລະກົດ 2023 ທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ ໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນການພິຈາລະນາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ວ່າ: ໃນວັນທີ 4-5 ກໍລະກົດ 2023 ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຮັບຟັງ ແລະ ພິຈາລະນາບົດລາຍງານຂອງສານປະຊາຊົນ



ສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ປະກອບມີເນື້ອໃນ ດັ່ງນີ້:

1. ບົດລາຍງານ ຂອງສານປະຊາຊົນສູງສຸດ ກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ເຊິ່ງສະເໜີໂດຍທ່ານ ນາງ ວຽງທອງ ສີພັນດອນ ຄະນະເລຂາທິການສູນກາງພັກ, ປະທານສານປະຊາຊົນສູງສຸດ.

2. ບົດລາຍງານ ຂອງ

ອ່ານຕໍ່ໜ້າ 3

**ຊົມເຊີຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!**

ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON



## ສູນທອນຜົດ...

(ຕໍ່ຈາກໜ້າ 1)

ເທດຊາດສືບຕໍ່ມີສະຖຽນລະພາບທາງການເມືອງທີ່ໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໄດ້ຮັບການແກ້ໄຂເທື່ອລະກ້າວ, ເສດຖະກິດສືບຕໍ່ຂະຫຍາຍຕົວ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງດີຂຶ້ນ.

ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023; ກອງປະຊຸມສະແດງຄວາມຊົມເຊີຍຕໍ່ຄວາມພະຍາຍາມຂອງລັດຖະບານໃນການບໍລິຫານ, ບັນຊາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ດ້ວຍການວາງມາດຕະການຕ່າງໆເຮັດໃຫ້ເສດຖະກິດສາມາດຂະຫຍາຍຕົວໃນລະດັບ 4,8%, ການຊຸກຍູ້ການຜະລິດເພື່ອຊ່ວຍພາຍໃນ ແລະ ຂາອອກ ໄດ້ມີໜໍ່ແໜງໃໝ່ຈຳນວນໜຶ່ງ, ການເກັບລາຍຮັບມີການເພີ່ມຂຶ້ນ, ການປະຕິບັດບັນດາຄາດໝາຍໃນດ້ານຕ່າງໆ ກໍມີຄວາມຄືບໜ້າ. ແຕ່ກອງປະຊຸມສະເໜີໃຫ້ລັດຖະບານ ເພີ່ມທະວີຄວາມເອົາໃຈໃສ່ໃນການແກ້ໄຂບັນຫາທີ່ສັງຄົມເປັນຫ່ວງ ເຊັ່ນ: ການແກ້ໄຂບັນຫາເງິນເຟີ້, ອັດຕາແລກປ່ຽນເໜັງຕີງແຮງ, ຄ່າຄອງຊີບສູງຂຶ້ນ ເຊິ່ງສົ່ງຜົນກະທົບໂດຍກົງຕໍ່ຊີວິດການເປັນຢູ່ຂອງພະນັກງານ, ທະຫານ, ຕຳຫຼວດ ກໍຄື ປະຊາຊົນບັນດາເຜົ່າ; ແກ້ໄຂບັນຫາການຈັດສັນການລົງທຶນຂອງລັດໃຫ້ທັນເວລາ; ການແກ້ໄຂບັນຫາຂອງຄູ, ແພດອາສາສະໝັກ, ບັນຫາຄຸນນະພາບການສຶກສາ, ສາທາລະນະສຸກ, ບັນຫາສະຫວັດດີການສັງຄົມ, ບັນຫາແຮງງານ, ບັນຫາການຂຸດຄົ້ນແຮ່ທາດແບບທົດລອງ ແລະ ອື່ນໆ. ທັງໝົດນັ້ນແມ່ນສືບຕໍ່ຈະຕ້ອງສຸມໃສ່ປັບປຸງ, ແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ເປັນບັນຫາເຄັ່ງຮ້ອນໃນປັດຈຸບັນໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ.

ກອງປະຊຸມ ໄດ້ພິຈາລະນາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ. ກອງປະຊຸມ ເຫັນວ່າດ້ວຍຄວາມບຸກບືນ, ສູ້ຊົນຂອງລັດຖະບານ ເຮັດໃຫ້ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໄດ້ຮັບຜົນສຳເລັດຫຼາຍດ້ານ, ການປະຕິບັດວິໄນແຜນການ-ການເງິນ ຢູ່ຂົງເຂດວຽກງານຕ່າງໆ ມີຄວາມເຂັ້ມງວດຂຶ້ນກວ່າເກົ່າ; ການແກ້ໄຂບັນຫາຢາເສບຕິດ ໄດ້ເປັນຂະບວນການຢ່າງກວ້າງຂວາງ; ພ້ອມກັນນັ້ນ, ກອງປະຊຸມມອບໃຫ້ລັດຖະບານ ເພີ່ມທະວີການຄຸ້ມຄອງການຂຸດຄົ້ນທ່າແຮງບົ່ມຊ້ອນທາງດ້ານເສດຖະກິດຢ່າງສົມເຫດສົມຜົນ, ປະຢັດ, ມີປະສິດທິພາບ, ປະສິດທິຜົນ ແລະ ເຂັ້ມງວດຕາມກົດໝາຍ ແລະ ສາມຫຼັກການ ເຂັ້ມງວດ, ໂປ່ງໃສ ແລະ ມືອາຊີບ, ໃຫ້ແກ້ໄຂປັບປຸງໂຄງການເຮັດທົດລອງການຂຸດຄົ້ນແຮ່ທາດໂດຍໄວ, ແນໃສ່ຮັບປະກັນຜົນປະໂຫຍດລວມຂອງຊາດ; ເພີ່ມທະວີການຄົ້ນຄວ້າສ້າງນິຕິກຳໃຫ້ຄົບຖ້ວນ ເພື່ອເປັນເຄື່ອງມືໃຫ້ແກ່ການລົງໂທດຕໍ່ຜູ້ກະທຳຜິດໃນການນຳໃຊ້ຢາເສບຕິດຊະນິດໃໝ່ໃຫ້ສອດຄ່ອງກັບລະດັບຄວາມເປັນອັນຕະລາຍຕໍ່ສັງຄົມ, ການດຳເນີນຄະດີກ່ຽວກັບຢາເສບຕິດ ຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດ, ເພີ່ມການສະໜອງງົບປະມານ, ເຄື່ອງມືໃຫ້ແກ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ.

ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາວິໄສທັດຮອດປີ 2040 ແລະ ຍຸດທະສາດການພັດທະນາແຮ່ທາດ ຮອດປີ 2030. ກອງປະຊຸມຕີລາຄາວ່າ ວິໄສທັດ ແລະ ຍຸດທະສາດການພັດທະນາແຮ່ທາດ ມີຄວາມສຳຄັນດ້ານຍຸດທະສາດລະດັບຊາດ ເປັນການຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ລັດ ໃຫ້ເປັນແນວທາງການຈັດຕັ້ງປະຕິບັດແນໃສ່ສ້າງການສະສົມທຶນຮອນເພື່ອຫັນປະເທດໃຫ້ເປັນອຸດສາຫະກຳທັນສະໄໝ, ກອງປະຊຸມມອບໃຫ້ລັດຖະບານເອົາໃຈໃສ່ການຄຸ້ມຄອງການຂຸດຄົ້ນແຮ່ທາດໃນເງື່ອນໄຂທີ່ປະເທດເຮົາ ຍັງມີຂໍ້ຈຳກັດຄວາມຮູ້ດ້ານເຕັກນິກ, ວິຊາການດ້ານທໍລະນີສາດ-ແຮ່ທາດ; ກຳນົດການຈັດສັນປະເພດແຮ່ທາດທີ່ມີຄຸນຄ່າສູງ ແລະ ຫາຍາກ, ການກຳນົດເຂດຫວງຫ້າມ, ການແບ່ງເຂດຍຸດທະສາດທີ່ຈະຮັກສາໄວ້ຍາວນານ, ຄົ້ນຄວ້າການແບ່ງຂັ້ນພິຈາລະນາອະນຸມັດໂຄງການລົງທຶນແຮ່ທາດໃຫ້ສອດຄ່ອງກັບສະພາບຕົວຈິງຕື່ມ ເປັນຕົ້ນ ໂຄງການລະດັບໃດຈະຕ້ອງໄດ້ຜ່ານການພິຈາລະນາອະນຸມັດຈາກສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ບັນຫາອື່ນໆ ຈຶ່ງໃຫ້ລັດຖະບານນຳເອົາແຜນຍຸດທະສາດດັ່ງກ່າວ ໄປປັບປຸງຕາມຄຳເຫັນຂອງກອງປະຊຸມໃຫ້ເປັນສະບັບສົມບູນ.

ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ເຊິ່ງເຫັນວ່າໄລຍະຜ່ານມາ ລັດຖະບານໄດ້ມີຄວາມພະຍາຍາມຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ເຮັດໃຫ້ປະຊາຊົນສາມາດເຂົ້າເຖິງການບໍລິການປິ່ນປົວສຸຂະພາບຂັ້ນພື້ນຖານ, ຜູ້ປະກັນຕົນ ແລະ ສະມາຊິກ ໄດ້ຮັບການອຸດໜູນຈາກກອງທຶນປະກັນສັງຄົມ ແລະ ກອງທຶນປະກັນສຸຂະພາບໃນລະດັບທີ່ແນ່ນອນ, ໄດ້ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕຕາມຄວາມສາມາດຕົວຈິງຂອງລັດຖະບານ; ກອງປະຊຸມມອບໃຫ້ລັດຖະບານສືບຕໍ່ຄົ້ນຄວ້າປັບປຸງກອງທຶນປະກັນສຸຂະພາບ ແລະ ກອງທຶນປະກັນສັງຄົມ ໃຫ້ມີຄວາມຄ່ອງຕົວ ແລະ ເຂັ້ມແຂງ; ປັບປຸງການບໍລິການ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ລວມທັງການປັບປຸງດ້ານຈັນຍາບັນ, ຈັນຍາທຳຂອງບຸກຄະລາກອນ ໃນການຮັບໃຊ້ຊາດ, ຮັບໃຊ້ປະຊາຊົນຢ່າງແທ້ຈິງ ແລະ ສືບຕໍ່ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ, ຄຸນງາມຄວາມດີຕໍ່ພາລະກິດປະຕິວັດໃຫ້ສຳເລັດໂດຍໄວ.

ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາວິໄສທັດຮອດປີ 2040 ແລະ ຍຸດທະສາດການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030. ກອງປະຊຸມຕີລາຄາວ່າ ຍຸດທະສາດການຄຸ້ມຄອງນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ມີຄວາມສຳຄັນລະດັບຊາດ ແລະ ເອກະສານດັ່ງກ່າວ ເປັນບ່ອນອີງໃນການຄຸ້ມຄອງນຳໃຊ້ນ້ຳ, ຊັບພະຍາກອນນ້ຳ, ການປົກປັກຮັກສາ ແລະ ການຟື້ນຟູນ້ຳໃຫ້ມີຄວາມຍືນຍົງ; ພ້ອມກັນນັ້ນ, ມອບໃຫ້ລັດຖະບານ ນຳເອົາຮ່າງວິໄສທັດ ແລະ ຍຸດທະສາດດັ່ງກ່າວ ໄປປັບປຸງຕາມຄຳເຫັນຂອງກອງປະຊຸມ ໃຫ້ມີຄວາມສົມບູນ ແລະ ສອດຄ່ອງກັບສະພາບຕົວຈິງ.

ກອງປະຊຸມ ໄດ້ພິຈາລະນາ, ຮັບຮອງເອົາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດຍຸຕິທຳ 4 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ. ກອງປະຊຸມ ຕີລາຄາວ່າ ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໄດ້ມີຄວາມພະຍາຍາມ ໃນການຈັດຕັ້ງປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ຕາມແຜນການທີ່ວາງໄວ້, ສາມາດຊອກໃຫ້ເຫັນດ້ານຕັ້ງໜ້າ ແລະ ບັນຫາຄົງຄ້າງ ໃນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳທັງ 4 ສະບັບ. ກອງປະຊຸມມອບໃຫ້ທັງສອງອົງການນຳເອົາຜົນຂອງການປະເມີນໃນເທື່ອນີ້ ເປັນຂໍ້ມູນໃນການປັບປຸງກົດໝາຍທີ່ກ່ຽວຂ້ອງ ໃຫ້ມີຄວາມຮັດກຸມຂຶ້ນຕື່ມ, ແກ້ໄຂຈຸດອ່ອນ ແລະ ຊ່ອງຫວ່າງໃນການຈັດຕັ້ງປະຕິບັດຕົວຈິງ, ປັບປຸງ ແລະ ຍົກສູງຄຸນນະພາບໃນການຈັດຕັ້ງ ແລະ ເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງສານ ແລະ ອົງການໄອຍະການປະຊາຊົນ ເຮັດໃຫ້ການດຳເນີນຄະດີຕາມຂະບວນຍຸຕິທຳມີຄວາມສັກສິດ ແລະ ເຂັ້ມງວດຕາມກົດໝາຍ.

ກອງປະຊຸມ ໄດ້ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 10 ສະບັບ; ໃນນີ້, ມີກົດໝາຍສ້າງໃໝ່ 4 ສະບັບ ຄື: ກົດໝາຍວ່າດ້ວຍວຽກງານສາທາລະນະສຸກ, ກົດໝາຍວ່າດ້ວຍການຈັດຫາງານ, ກົດໝາຍວ່າດ້ວຍອາກອນທີ່ດິນ, ກົດໝາຍວ່າດ້ວຍເຍົາວະຊົນລາວ ແລະ ກົດໝາຍສະບັບປັບປຸງຈຳນວນ 6 ສະບັບ ຄື: ກົດໝາຍວ່າດ້ວຍທະນາຄານທຸລະກິດ, ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ, ກົດໝາຍວ່າດ້ວຍສັດປ່າ, ກົດໝາຍວ່າດ້ວຍການພິມຈຳໜ່າຍ, ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແລະ ກົດໝາຍວ່າດ້ວຍສານທະຫານ ເຊິ່ງເນື້ອແທ້ກໍແມ່ນຄວາມພະຍາຍາມໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ໃຫ້ເປັນອັນລະອຽດ, ເປັນການປະກອບສ່ວນສຳຄັນເຂົ້າໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ, ທັງເປັນການປັບປຸງ ແລະ ເພີ່ມທະວີເຄື່ອງມືຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ເພື່ອຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຊາດ, ຂອງລັດ, ລວມໝູ່, ນິຕິບຸກຄົນ ແລະ ປະຊາຊົນລາວບັນດາເຜົ່າ ທັງເປັນການຮັບປະກັນໃຫ້ແກ່ການສ້າງລັດປະຊາທິປະໄຕປະຊາຊົນຂອງພວກເຮົາ ໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍ ເປັນລັດຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນ ເທື່ອລະກ້າວ.

ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 4 ຫາ ເທື່ອທີ 5 ແລະ ທິດທາງແຜນການເຄື່ອນໄຫວວຽກງານຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX. ກອງປະຊຸມ ຕີລາຄາວ່າ ໃນໄລຍະ 6 ເດືອນ ຕົ້ນປີ 2023 ດ້ວຍຄວາມເອົາໃຈໃສ່ນຳພາ-ຊີ້ນຳຂອງສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ, ຄວາມເປັນເຈົ້າການຂອງກົງຈັກເສນາທິການຂອງສະພາແຫ່ງຊາດ ກໍຄືບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ເຮັດໃຫ້ການເຄື່ອນໄຫວປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ໄດ້ຮັບຜົນສຳເລັດຫຼາຍດ້ານ, ເຮັດໃຫ້ບົດບາດຂອງສະພາແຫ່ງຊາດ ໄດ້ຮັບການເຊີດຊູນັບມື້ສູງຂຶ້ນ, ໄດ້ຮັບຄວາມເຊື່ອໝັ້ນຈາກອົງການຈັດຕັ້ງລັດຂັ້ນຕ່າງໆ ແລະ ປະຊາຊົນຜູ້ມີສິດເລືອກຕັ້ງນັບມື້ນັບກວ້າງຂວາງ. ກອງປະຊຸມໄດ້ເນັ້ນໜັກຕື່ມຕໍ່ການສ້າງ ແລະ ປັບປຸງກົດໝາຍ ຕ້ອງສອດຄ່ອງກັບຄວາມຮຽກຮ້ອງຕ້ອງການໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ, ເອົາໃຈໃສ່ການທາບທາມຮ່າງກົດໝາຍໃຫ້ກວ້າງຂວາງທົ່ວເຖິງ, ຕ້ອງຍົກສູງຄຸນນະພາບໃນການພິຈາລະນາ, ຕົກລົງບັນຫາສຳຄັນພື້ນຖານຂອງຊາດ; ເພີ່ມທະວີການປະຕິບັດພາລະບົດບາດຕິດຕາມກວດກາຢ່າງມີຈຸດສຸມ, ຮ່ວມກັບລັດຖະບານ ເພື່ອແກ້ໄຂບັນຫາຕ່າງໆຢ່າງທັນການ ລວມທັງການນຳເອົາຜົນສຳເລັດຂອງກອງປະຊຸມສະພາແຫ່ງຊາດກໍຄືນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ລັດ ໄປເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງທົ່ວປະເທດຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງຂວາງ ເພື່ອເຂົ້າຮ່ວມການຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ.

ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາຜົນການເລືອກຕັ້ງແທນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ທີ່ວ່າງລົງ ແລະ ກອງປະຊຸມໄດ້ພິຈາລະນາ ຮັບຮອງເອົາການສະເໜີຂອງປະທານສານປະຊາຊົນສູງສຸດ ກ່ຽວກັບການແຕ່ງຕັ້ງສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ ເຊິ່ງປະກອບດ້ວຍບຸກຄະລາກອນທີ່ມີມາດຕະຖານ, ເງື່ອນໄຂຄົບຖ້ວນ ແລະ ມີປະສົບການໃນວຽກງານຕົວຈິງ ຈຳນວນ 4 ທ່ານ ເພື່ອເຮັດໃຫ້ອົງການຕຸລາການ ມີຄວາມເຂັ້ມແຂງ, ເປັນລະບົບຄົບຊຸດຂຶ້ນຕື່ມ ທັງເຮັດໃຫ້ການເຄື່ອນໄຫວວຽກງານຂອງສານປະຊາຊົນແຕ່ລະຂັ້ນ ມີບາດກ້າວຫັນປ່ຽນທີ່ດີຂຶ້ນປະກອບສ່ວນເຂົ້າໃນການປັບປຸງລະບົບຍຸຕິທຳ ຂອງພວກເຮົາໃຫ້ໜັກແໜ້ນຂຶ້ນ ເພື່ອສ້າງຄວາມເຊື່ອໝັ້ນແກ່ໃຫ້ປະຊາຊົນລາວບັນດາເຜົ່າ.

ກອງປະຊຸມ ໄດ້ຮັບຟັງການຊີ້ແຈງຕໍ່ຄຳຊັກຖາມ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ແລະ 2 ວາລະແຫ່ງຊາດ, ວຽກງານຂົງເຂດສານ ແລະ ອົງການໄອຍະການປະຊາຊົນ ເຊິ່ງສະມາຊິກສະພາແຫ່ງຊາດ ກໍຄືປະຊາຊົນບັນດາເຜົ່າ ທັງພາຍໃນ ແລະ ຢູ່ຕ່າງປະເທດ ໃຫ້ຄວາມສົນໃຈຫຼາຍຈາກທ່ານນາຍົກລັດຖະມົນຕີ, ທ່ານຮອງນາຍົກລັດຖະມົນຕີ-ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ລັດຖະມົນຕີກະຊວງການເງິນ, ລັດຖະມົນຕີກະຊວງກະສິກຳແລະປ່າໄມ້, ລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ, ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ, ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ; ນອກຈາກນັ້ນ, ຍັງໄດ້ຮັບຟັງການໃຫ້ຄວາມກະຈ່າງແຈ້ງຈາກທ່ານປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດຕື່ມອີກ.

ກອງປະຊຸມ ຕີລາຄາສູງ ແລະ ມີຄວາມເຊື່ອໝັ້ນວ່າ ແຕ່ລະພາກສ່ວນຈະນຳເອົາຄຳຊີ້ແຈງຂອງຕົນ ທີ່ໄດ້ໃຫ້ຄຳໝາຍໝັ້ນຕໍ່ສະພາແຫ່ງຊາດ ກໍຄື ປະຊາຊົນບັນດາເຜົ່າ ໄປຈັດຕັ້ງປະຕິບັດ, ແກ້ໄຂບັນຫາທີ່ເຄັ່ງຮ້ອນຕ່າງໆທີ່ເກີດຂຶ້ນໃນສັງຄົມປັດຈຸບັນໃຫ້ມີຜົນສຳເລັດຕົວຈິງ; ພ້ອມກັນນັ້ນ, ໄດ້ສະເໜີໃຫ້ສະມາຊິກສະພາແຫ່ງຊາດ ຖືເອົາຄຳຊີ້ແຈງຂອງແຕ່ລະພາກສ່ວນ ເປັນຂໍ້ມູນບ່ອນອີງໃນການຕິດຕາມກວດກາບັນຫາຕ່າງໆ ທີ່ພາກສ່ວນກ່ຽວຂ້ອງໄດ້ຊີ້ແຈງຕໍ່ກອງປະຊຸມສະພາແຫ່ງຊາດ ໃນຄັ້ງນີ້.

ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ເຂົ້າສູ່ຊີວິດຕົວຈິງ, ແມ່ນໝາກຜົນແຫ່ງລວມສູນສະຕິປັນຍາ, ສິດປະຊາທິປະໄຕ ກໍຄືການຍົກສູງຄວາມຮັບຜິດຊອບທາງການເມືອງຂອງບັນດາທ່ານສະມາຊິກສະພາແຫ່ງຊາດ, ການຕັດສິນໃຈສູງຂອງລັດຖະບານ, ອົງການທີ່ກ່ຽວຂ້ອງໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໃຫ້ຕົກໄປເທື່ອລະກ້າວ ເພື່ອພັດທະນາປະເທດຊາດໃຫ້ມີຄວາມໜັກແໜ້ນຂຶ້ນເລື້ອຍໆ.

ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຮັບຜົນສຳເລັດຢ່າງຈົບງາມ ກໍຍ້ອນມີການຊີ້ນຳຢ່າງໃກ້ຊິດຈາກກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ, ຍ້ອນຄວາມຮັບຜິດຊອບສູງຂອງລັດຖະບານ, ບັນດາກະຊວງ, ບັນດາອົງການທີ່ກ່ຽວຂ້ອງ ແລະ ຂະແໜງການກ່ຽວຂ້ອງທີ່ໃຫ້ການຮ່ວມມື ແລະ ສະໜັບສະໜູນ.

ຕາງໜ້າຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງກົມການ

ອ່ານຕໍ່ໜ້າ 3...

## ສູນທອນພົດ...

(ຕໍ່ຈາກໜ້າ 2)

ເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ທີ່ຍາມໃດກໍໄດ້ໃຫ້ການຊີ້ນຳຢ່າງໃກ້ຊິດຕໍ່ສະພາແຫ່ງຊາດໂດຍຕະຫຼອດມາ, ຂໍສະແດງຄວາມຂອບໃຈ ເປັນຢ່າງສູງມາຍັງບັນດາຜູ້ນຳພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ແລະ ຂອບໃຈມາຍັງປະຊາຊົນລາວບັນດາເຜົ່າ ຢູ່ພາຍໃນ ແລະ ຊາວລາວທີ່ຢູ່ຕ່າງປະເທດ ທີ່ໄດ້ຕິດຕາມກອງປະຊຸມຂອງພວກເຮົາໃນຄັ້ງນີ້ ຢ່າງຈົດຈໍ່ ແລະ ສົ່ງຄຳຄິດເຫັນຜ່ານໂທລະສັບສາຍດ່ວນມາຍັງກອງປະຊຸມຢ່າງຫຼວງຫຼາຍ.

ຂໍສະແດງຄວາມຂອບໃຈ ຕໍ່ທຸກພາກສ່ວນກ່ຽວຂ້ອງ ທີ່ໄດ້ປະກອບສ່ວນເຂົ້າໃນຜົນສຳເລັດຂອງກອງປະຊຸມຄັ້ງນີ້ ເປັນຕົ້ນກອງເລຂາກອງປະຊຸມ ທີ່ຮັບໃຊ້ກອງປະຊຸມສະໄໝສາມັນເທື່ອນີ້ຢ່າງຫ້າວຫັນ ແລະ ມີຄວາມຮັບຜິດຊອບສູງ; ຂໍສະແດງຄວາມຂອບໃຈຕໍ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ເອົາໃຈໃສ່ວຽກງານການປ້ອງກັນຄວາມສະຫງົບ, ຄວາມປອດໄພໃຫ້ກອງປະຊຸມຄັ້ງນີ້ ແລະ ຂອບໃຈຕໍ່ບັນດາສື່ມວນຊົນທີ່ໄດ້ນຳສະເໜີຂ່າວສານ ໂດຍການຖ່າຍທອດສົດຂ່າວຜ່ານວິທະຍຸ, ໂທລະພາບ ແລະ ສື່ເອເລັກໂຕຣນິກ ເຊິ່ງໄດ້ອຳນວຍຄວາມສະດວກໃຫ້ສັງຄົມໄດ້ຕິດຕາມການດຳເນີນກອງປະຊຸມໄດ້ທັນສະພາບການ ແທດຕົວຈິງ ແລະ ຕໍ່ເນື່ອງ.

ເພື່ອສືບຕໍ່ຈັດຕັ້ງຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມຄັ້ງນີ້, ກອງປະຊຸມຮຽກຮ້ອງມາຍັງຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ, ລັດຖະບານ, ອົງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ຜັນຂະຫຍາຍມະຕິກອງປະຊຸມຄັ້ງນີ້ ເຂົ້າໃນການປະຕິບັດວຽກງານໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ສຸດທ້າຍນີ້, ຂ້າພະເຈົ້າ ຕາງໜ້າໃຫ້ກອງປະຊຸມສະພາແຫ່ງຊາດ ຂໍອວຍພອນໄຊອັນປະເສີດມາຍັງທ່ານເລຂາທິການໃຫຍ່, ປະທານປະເທດ ຈົ່ງມີພາລານາໄມສົມບູນ, ມີຄວາມຜາສຸກໃນຊີວິດຄອບຄົວມີຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າໃນການຊີ້ນຳ-ນຳພາປະເທດຊາດ ກ້າວຂຶ້ນຢ່າງໜັກແໜ້ນ.

ຂໍອວຍພອນໃຫ້ບັນດາຜູ້ນຳຂັ້ນສູງພັກ-ລັດ, ອະດີດຜູ້ນຳພັກ-ລັດ, ສະມາຊິກສະພາແຫ່ງຊາດ ຕະຫຼອດຮອດພະນັກງານ, ທະຫານຕຳຫຼວດ ແລະ ປະຊາຊົນລາວ ບັນດາເຜົ່າໃນທົ່ວປະເທດ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມສຸກໃນຄອບຄົວ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນມີກຽດຂອງຕົນ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າ ຂໍປະກາດອັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງເປັນທາງການນັບແຕ່ເວລານີ້ເປັນຕົ້ນໄປ.

## ຜົນການ...

(ຕໍ່ຈາກໜ້າ 1)

ອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະເໜີໂດຍທ່ານ ໄຊຊະນະ ໂຄດພູທອນ ກຳມະການສູນກາງພັກ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ;

3. ບົດປະກອບຄຳເຫັນຂອງຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ສະເໜີໂດຍທ່ານ ຄຳແພງ ວິລະພັນ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການຍຸຕິທຳ;

4. ພາຍຫຼັງຮັບຟັງການລາຍງານ ຂອງສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ການປະກອບຄຳເຫັນຂອງຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ແລະ ປະທານກອງປະຊຸມໄດ້ເຈາະຈີ້ມ ເພື່ອເປັນບ່ອນອີງໃຫ້ແກ່ບັນດາທ່ານສະມາຊິກສະພາແຫ່ງຊາດ ປະກອບຄຳເຫັນ; ຈາກນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ສຸມໃສ່ຄົ້ນຄວ້າປະກອບຄຳເຫັນດ້ວຍບັນຍາກາດຟົດຟື້ນ ແລະ ມີຄວາມຮັບຜິດຊອບການເມືອງສູງ ເຊິ່ງມີຜູ້ປະກອບຄຳເຫັນທັງໝົດ ຈຳນວນ 54 ທ່ານ, ຍິງ 8 ທ່ານ.

ກອງປະຊຸມ ຕີລາຄາສູງຕໍ່ການຈັດຕັ້ງປະຕິບັດກົດໝາຍ 4 ສະບັບດັ່ງກ່າວ ເຫັນວ່າໄດ້ກາຍເປັນນິຕິກຳພື້ນຖານສຳຄັນໃຫ້ແກ່ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ບັນດາອົງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເພື່ອປົກປ້ອງສິດ, ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ຂອງພົນລະເມືອງ ຕາມທີ່ກົດໝາຍໄດ້ກຳນົດໄວ້.

ຄຽງຄູ່ກັບດ້ານດີທີ່ຕັ້ງໜ້າ ກອງປະຊຸມເຫັນວ່າຫຼາຍດ້ານຈະຕ້ອງປັບປຸງ, ແກ້ໄຂ ເປັນຕົ້ນ ການໂຄສະນາເຜີຍແຜ່ກົດໝາຍຂົງເຂດຍຸຕິທຳ ທັງ 4 ສະບັບ ຍັງບໍ່ທັນກວ້າງຂວາງ, ເລິກເຊິ່ງ ແລະ ທົ່ວເຖິງ ທຸກເປົ້າໝາຍໃນສັງຄົມ; ການຜັນຂະຫຍາຍມາດຕາຂອງກົດໝາຍທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍຍັງຊັກຊ້າ, ບາງກົດໝາຍການຜັນຂະຫຍາຍຍັງບໍ່ທັນສຳເລັດ; ການປັບປຸງກົງຈັກການຈັດຕັ້ງ, ການປະກອບບຸກຄະລາກອນ, ການກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການທີ່ຮັບຜິດຊອບດຳເນີນຄະດີຕາມຂະບວນການຍຸຕິທຳຍັງບໍ່ທັນຈະແຈ້ງ ແລະ ເປັນລະບົບຄົບຊຸດ, ການປະຕິບັດຫຼັກການ ແລະ ກົນໄກດຳເນີນຄະດີຈຳນວນໜຶ່ງ ຍັງບໍ່ທັນຄົບຖ້ວນ, ຮອບດ້ານ, ຖືກຕ້ອງ ແລະ ເຂັ້ມງວດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ; ການຕິດຕາມກວດກາ ແລະ ການປະສານສົມທົບກັນໃນການແກ້ໄຂຄະດີຂອງບັນດາອົງການໃນລະບົບການດຳເນີນຄະດີຕາມຂະບວນຍຸຕິທຳ ຍັງບໍ່ທັນແຂງແຮງ, ສານປະຊາຊົນ, ສານທະຫານແຕ່ລະຂັ້ນຕັດສິນ ແລະ ພິພາກສາຄະດີໄປແລ້ວ ແຕ່ຄູ່ຄວາມຍັງຂໍອຸທອນແລະຂໍລົບລ້າງຈຳນວນບໍ່ໜ້ອຍ, ຄຳຕັດສີ ນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ມີຈຳນວນຫຼາຍ ແຕ່ການຈັດຕັ້ງປະຕິບັດຍັງຊັກຊ້າ, ບາງກໍລະນີບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມກົດໝາຍ ແລະ ຄຳຕົກລົງຂອງສານ.

ນອກຈາກນັ້ນ, ກອງປະຊຸມ ຍັງໄດ້ຮັບຟັງການຊີ້ແຈງຂອງທ່ານປະທານສານປະຊາຊົນສູງສຸດ ກ່ຽວກັບການດຳເນີນຄະດີຂອງສານ ສາມຂັ້ນ ຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງ ແລະ ທ່ານຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໄດ້ຊີ້ແຈ້ງກ່ຽວກັບການນຳໃຊ້ 7 ມາດຕະການສະກັດກັ້ນ ຂອງອົງການສືບສວນ-ສອບສວນ.

ຜ່ານການພິຈາລະນາປະກອບຄຳເຫັນ ກອງປະຊຸມໄດ້ເຫັນດີເປັນເອກະພາບຕໍ່ບົດລາຍງານ ແລະ ການຊີ້ແຈງຂອງສອງອົງການ, ພ້ອມກັນນັ້ນກອງປະຊຸມຍັງໄດ້ສະເໜີໃຫ້ສອງອົງການ ນຳໄປປັບປຸງ ແລະ ແກ້ໄຂໃຫ້ເປັນຮູບປະທຳຫຼາຍຂຶ້ນ ເຊັ່ນ:

1. ເພີ່ມທະວີການໂຄສະນາເຜີຍແຜ່ກົດໝາຍທັງ 4 ສະບັບດັ່ງກ່າວ ໂດຍເນັ້ນໃສ່ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໃຫ້ກວ້າງຂວາງ, ເລິກເຊິ່ງ, ທົ່ວເຖິງ ແລະ ແທດເໝາະກັບແຕ່ລະປະເພດເປົ້າໝາຍໃນສັງຄົມ;

2. ຮີບຮ້ອນປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າຜັນຂະຫຍາຍບັນດາມາດຕາ ຂອງກົດໝາຍທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍໂດຍໄວ ລວມທັງບັນດາມາດຕາຂອງກົດໝາຍທີ່ເຫັນວ່າມີຄວາມຈຳເປັນຕ້ອງໄດ້ຜັນຂະຫຍາຍອອກເປັນຄຳສັ່ງ ແລະ ຄຳແນະນຳ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດຕົວຈິງໃຫ້ມີຄວາມເປັນເອກະພາບ. ມາດຕາຂອງແຕ່ລະກົດໝາຍທີ່ເຫັນວ່າບໍ່ສອດຄ່ອງ ຫຼື ຊ້ຳຊ້ອນກັນ ເພື່ອເຮັດໃຫ້ບັນດາກົດໝາຍດັ່ງກ່າວມີເນື້ອໃນຄົບຖ້ວນ, ຮັດກຸມ, ຈະແຈ້ງ, ສອດຄ່ອງ, ກົມກຽວ ແລະ ສາມາດນຳໄປຈັດຕັ້ງປະຕິບັດໄດ້.

3. ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ຕ້ອງເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງແຕ່ລະຂັ້ນ, ບຳລຸງສ້າງພະນັກງານໃຫ້ມີຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ, ຈັນຍາທຳ ໜັກແໜ້ນ ແລະ ສືບຕໍ່ປັບປຸງກົນໄກການດຳເນີນຄະດີໃຫ້ຮັບປະກັນຄວາມຖືກຕ້ອງ, ຮອບດ້ານ, ຄົບຖ້ວນ, ພາວະວິໄສ, ມີຄວາມໂປ່ງໃສ ແລະ ເປັນທຳ. ພ້ອມທັງຍົກສູງຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານ, ສະກັດກັ້ນພະຍາດອາດຍາສິດ, ການສວຍໃຊ້ໜ້າທີ່ຕຳແໜ່ງໃນການດຳເນີນຄະດີ ເພື່ອຫາຜົນປະໂຫຍດສ່ວນຕົວ, ແກ້ໄຂທາງສຽງ ແລະ ປາກົດການຫຍໍ້ທໍ້ທີ່ເກີດຂຶ້ນພາຍໃນໃຫ້ເຂັ້ມງວດ ແລະ ເດັດຂາດ.

ກອງປະຊຸມ ຍັງເຫັນດີຮັບຮອງເອົາຂໍ້ສະເໜີ ແລະ ມາດຕະການສະເພາະ ທີ່ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດໄດ້ລາຍງານຕໍ່ກອງປະຊຸມເພີ່ມຕື່ມດັ່ງນີ້:

1. ກົດໝາຍສານປະຊາຊົນ

- ຜັນຂະຫຍາຍ ມາດຕາ 63 ກ່ຽວກັບດັດສະນີຂັ້ນເງິນເດືອນສະເພາະຂອງຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ ແລະ ຈ່າສານ ໃຫ້ເປັນນິຕິກຳໃຕ້ກົດໝາຍ;

- ປັບປຸງກົງຈັກການຈັດຕັ້ງ, ການກຳນົດສິດ, ໜ້າທີ່ ແລະ ແບບແຜນວິທີເຮັດວຽກຂອງສານປະຊາຊົນເຂດ ໃນການພິຈາລະນາຕັດສິນຄະດີອາຍາ, ແພ່ງ, ການຄ້າ ແລະ ເດັກ ເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນປະຈຸບັນ ເປັນຕົ້ນມາດຕາ 26 ແລະ ມາດຕາ 27;

2. ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ

- ປັບປຸງກົງຈັກ, ກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການດຳເນີນຄະດີປົກຄອງໃຫ້ເປັນລະບົບຄົບຊຸດ;

- ປັບປຸງເນື້ອໃນຂອງກົດໝາຍ ສະບັບນີ້ ຈຳນວນ 14 ມາດຕາ ເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມໃນໄລຍະປະຈຸບັນ; (ລາຍລະອຽດກຳນົດໃນມະຕິຮັບຮອງແລ້ວ);

-ອອກຄຳແນະນຳກ່ຽວກັບການສັ່ງຟ້ອງຜູ້ຖືກຫາຂຶ້ນສານໂດຍກົງ ເພື່ອເປັນບ່ອນອີງໃຫ້ອົງການໄອຍະການປະຊາຊົນແຕ່ລະຂັ້ນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46;

- ສ້າງ ແລະ ປັບປຸງກົນໄກການປະສານງານ ກັບພາກສ່ວນຕ່າງໆ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດພາລະບົດບາດຂອງຕົນໃຫ້ສອດຄ່ອງຕາມທີ່ກຳນົດໄວ້ໃນກົດໝາຍ ເຊັ່ນ: ມາດຕາ 40, 43, 52, 54.

3. ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ

-ຜັນຂະຫຍາຍມາດຕາຂອງກົດໝາຍອອກເປັນນິຕິກຳໃຕ້ກົດໝາຍ ຈຳນວນ 2 ມາດຕາ ໃຫ້ສຳເລັດ ຄື: ມາດຕາ 38 ແລະ ມາດຕາ 60;

- ປັບປຸງເນື້ອໃນຂອງກົດໝາຍສະບັບນີ້ ຈຳນວນ 41 ມາດຕາ ແລະ ມາດຕາອື່ນ ທີ່ເຫັນວ່າ ມີຄວາມຈຳເປັນຕ້ອງໄດ້ມີການປັບປຸງເພີ່ມຕື່ມ ເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມໃນໄລຍະປະຈຸບັນ (ລາຍລະອຽດກຳນົດໃນມະຕິຮັບຮອງແລ້ວ);

- ເພີ່ມທະວີການປະຕິບັດຫຼັກການດຳເນີນຄະດີ ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ໃຫ້ຖືກຕ້ອງ ແລະ ເຂັ້ມງວດ ໂດຍສະເພາະການປະກອບຂໍ້ມູນຫຼັກຖານ, ການເກັບຂໍ້ມູນຫຼັກຖານ, ການພິສູດຫຼັກຖານ, ການໂຕ້ແຍ່ງຫຼັກຖານໃນໄລຍະດຳເນີນຄະດີ ແລະ ໂຕ້ຖຽງຫຼັກຖານໃນທີ່ປະຊຸມສານ;

- ປະຕິບັດກຳນົດເວລາໃນການດຳເນີນຄະດີ ຢູ່ສານແຕ່ລະຂັ້ນ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 30.

4. ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ

-ຜັນຂະຫຍາຍມາດຕາຂອງກົດໝາຍທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ຈຳນວນ 8 ມາດຕາ ໃຫ້ສຳເລັດ ຄື: ມາດຕາ 83, 156, 182.... (ລາຍລະອຽດກຳນົດໃນມະຕິຮັບຮອງແລ້ວ);

- ປັບປຸງເນື້ອໃນຂອງກົດໝາຍສະບັບນີ້ ຈຳນວນ 41 ມາດຕາ ເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນໄລຍະປະຈຸບັນ (ລາຍລະອຽດກຳນົດໃນມະຕິຮັບຮອງແລ້ວ);

- ເພີ່ມທະວີການປະຕິບັດ 16 ຫຼັກການພື້ນຖານໃນການດຳເນີນຄະດີອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ເປັນຕົ້ນ ມາດຕາ 14 ການຮັບປະກັນສິດໃນການຕໍ່ສູ້ຄະດີ, ມາດຕາ 24 ການດຳເນີນຄະດີຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ໂດຍສະເພາະແມ່ນການນຳໃຊ້ວິທີການສືບສວນ-ສອບສວນ, ການເກັບກຳຂໍ້ມູນຫຼັກຖານ ແລະ ການພິສູດຫຼັກຖານ ຕ້ອງຮັບປະກັນຄວາມຖືກຕ້ອງຕາມກົດໝາຍທີ່ໄດ້ກຳນົດໄວ້;

- ເພີ່ມທະວີການປະຕິບັດ 7 ມາດຕະການສະກັດກັ້ນ ເພື່ອຮັບປະກັນຄວາມຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 138, 139, 142 ແລະ 143;

- ອົງການໄອຍະການປະຊາຊົນສູງສຸດ ເອົາໃຈໃສ່ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມມາດຕາ 157 ການສັ່ງຟ້ອງຂຶ້ນສານໂດຍກົງໃຫ້ເປັນຮູບປະທຳ ໂດຍການປະສານສົມທົບກັບອົງການສືບສວນ-ສອບສວນ, ສານປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ;

- ຄົ້ນຄວ້າ ວິທີການ ແລະ ມາດຕະການໃນການຈັດຕັ້ງປະຕິບັດ ມາດຕາ 255 ແລະ 256 ການປະຕິບັດຄຳຕັດສິນປະຫານຊີວິດ.

# ສານປະຊາຊົນສູງສຸດ ລາຍງານການປະເມີນກົດໝາຍ

ຕໍ່ຈາກສະບັບກ່ອນ...

ຊາຊົນສູງສຸດ ໃນການແຕ່ງຕັ້ງ, ຍົກຍ້າຍປົດຕຳແໜ່ງພະນັກງານບໍລິຫານຂອງສານ, ພະນັກງານຕຸລາການບາງຕຳແໜ່ງ ແລະການສັບປ່ຽນບ່ອນປະຈຳການຂອງພະນັກງານໃນລະບົບສານປະຊາຊົນ ຈຶ່ງໄດ້ປັບປຸງບາງມາດຕາຄື ມາດຕາ 2, 3, 21, 37 ແລະ ມາດຕາ 38 ທີ່ພົວພັນເຖິງສິດອຳນາດຂອງສານປະຊາຊົນສູງສຸດ.

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບທຳອິດ ໄດ້ຖືກຮັບຮອງ ແລະ ປະກາດໃຊ້ໃນປີ 1990 ຕາມມະຕິ ສະບັບເລກທີ 09/90/ສປສ, ລົງວັນທີ 29 ພະຈິກ 1990, ປະກອບມີ 6 ພາກ, 14 ໝວດ, 88 ມາດຕາ. ໃນນັ້ນ, ໄດ້ກຳນົດ ຂັ້ນຕອນ ແລະ ວິທີການໃນການດຳເນີນ, ຕັດສິນ ແລະພິພາກສາຄະດີແພ່ງ ໃຫ້ເປັນເອກະພາບ.

ການປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງໃນແຕ່ລະຄັ້ງມີຄື: ຄັ້ງທີ 1 ໃນປີ 2004 ໄດ້ຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປີ 1990 ໃຫ້ປະກອບມີ 11 ພາກ, 15 ໝວດ, 129 ມາດຕາ ໂດຍໄດ້ປັບປຸງຂັ້ນຂອງການດຳເນີນຄະດີ ຈາກ 2 ຂັ້ນ ມາເປັນ 3 ຂັ້ນຄື: ຂັ້ນຕົ້ນ, ຂັ້ນອຸທອນ ແລະຂັ້ນລົບລ້າງ ຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ,ພ້ອມທັງກຳນົດສິດອຳນາດ, ຂັ້ນຕອນແລະ ວິທີການດຳເນີນຄະດີຂອງສານຂັ້ນຕົ້ນ ແລະ ຂັ້ນອຸທອນໃຫ້ພິຈາລະນາດ້ານຫຼັກຖານ, ສ່ວນສານຂັ້ນລົບລ້າງ ມີສິດອຳນາດພິຈາລະນາແຕ່ບັນຫາທາງດ້ານກົດໝາຍເທົ່ານັ້ນ; ຄັ້ງທີ 2 ໃນປີ 2012 ໄດ້ປັບປຸງລະບົບການດຳເນີນຄະດີໃຫ້ສອດຄ່ອງກັບການປັບປຸງການຈັດຕັ້ງຂອງສານປະຊາຊົນ ໂດຍສະເພາະການໂຮມສານປະຊາຊົນເມືອງເປັນສານປະຊາຊົນເຂດ ແລະເພີ່ມສິດອຳນາດໃນການຕັດສິນຄະດີຂອງສານປະຊາຊົນເຂດ, ປັບປຸງຂັ້ນຕອນການດຳເນີນຄະດີນັບແຕ່ຂັ້ນຕອນການຮັບຄຳຮ້ອງຟ້ອງ, ການຄົ້ນຄວ້າ, ເກັບກຳຂໍ້ມູນຫຼັກຖານໃນຄະດີໃຫ້ລະອຽດ, ຄົບຖ້ວນມາແຕ່ເບື້ອງຕົ້ນ, ກຳນົດຫຼັກການ ແລະ ວິທີການໂຕ້ແຍ່ງ ເພື່ອໃຫ້ຄະດີມຄວາມຈະແຈ້ງ, ການເກັບກຳຂໍ້ມູນຫຼັກຖານມີຄວາມຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ,



ການຕັດສິນ ແລະ ພິພາກສາມີຄວາມຖືກຕ້ອງ ແລະ ກຳນົດການຮ່ວມມືສາກົນໃນການດຳເນີນຄະດີແພ່ງຢ່າງລະອຽດ ແລະສອດຄ່ອງກັບສົນທິສັນຍາ ແລະສັນຍາສາກົນທີ່ ສປປ ລາວ ເຂົ້າເປັນພາຄີ ເຊິ່ງກົດໝາຍສະບັບນີ້ ປະກອບມີ 18 ພາກ, 32 ໝວດ, 370 ມາດຕາ.

ກົດໝາຍວ່າດ້ວຍສານປະຊາຊົນ ໄດ້ຖືກຈັດພິມ ແລະແຈກຢາຍ ໃຫ້ພະນັກງານສານແຕ່ລະແຫ່ງເປັນເຄື່ອງມືນຳໃຊ້ ແລະ ໄດ້ແຈກຢາຍໃຫ້ພາກສ່ວນກ່ຽວຂ້ອງອື່ນຈຳນວນໜຶ່ງ, ພ້ອມນັ້ນ ກໍໄດ້ມີຄຳສັ່ງ, ຄຳແນະນຳໃຫ້ສານປະຊາຊົນແຕ່ລະຂັ້ນ ຄັດຈ້ອນເອົາບາງໝວດ, ບາງມາດຕາ, ສ້າງເປັນເອກະສານ ລົງເຜີຍແຜ່ໃຫ້ປະຊາຊົນຮັບຮູ້ໄດ້ຈຳນວນໜຶ່ງ. ເຖິງຢ່າງໃດກໍຕາມ ການຈັດຕັ້ງໂຄສະນາ, ເຜີຍແຜ່ ແລະ ການຍົກສູງສະຕິເຄົາລົບກົດໝາຍວ່າດ້ວຍສານປະຊາຊົນໃຫ້ແກ່ພະນັກງານຢູ່ບັນດາກະຊວງ, ອົງການ, ອຳນາດການປົກຄອງທ້ອງຖິ່ນ ແລະ ປະຊາຊົນບັນດາເຜົ່າ ຍັງເຮັດໄດ້ໜ້ອຍ, ຈຳກັດ, ບໍ່ທັນກວ້າງຂວາງ ແລະ ທົ່ວເຖິງ, ບໍ່ທັນໄດ້ຈັດຕັ້ງກອງປະຊຸມເຜີຍແຜ່ໂດຍກົງໃຫ້ແກ່ບັນດາກະຊວງ-ອົງການ ແລະ ພະແນກການຂັ້ນແຂວງ, ເມືອງ ເຮັດໃຫ້ສັງຄົມ, ປະຊາຊົນ ແລະ ບັນອົງການຈັດຕັ້ງຕ່າງໆ ບໍ່ເຂົ້າໃຈເຖິງພາລະບົດບາດ, ສິດ ແລະໜ້າທີ່ຂອງສານປະຊາຊົນເທົ່າທີ່ຄວນ.

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ໄດ້ຖືກຈັດພິມເປັນປຶ້ມ ຈຳນວນ 30.000 ຫົວ ເພື່ອແຈກຢາຍໃຫ້ພະນັກງານຂອງສານ, ພະນັກງານຂະແໜງຍຸຕິທຳ, ທະນາຍຄວາມ, ບັນດາກະຊວງ, ອົງການ ແລະອົງການປົກຄອງທ້ອງຖິ່ນລວມທັງປະຊາຊົນໄດ້ຮັບຮູ້ ແລະເຂົ້າໃຈການດຳເນີນຄະດີແພ່ງ, ໄດ້ອອກຄຳແນະນຳຈັດຕັ້ງປະຕິບັດ ແລະ ແນະນຳໃຫ້ສານແຕ່ລະຂັ້ນຈັດຕັ້ງໂຄສະນາເຜີຍແຜ່. ພ້ອມນັ້ນ ສານປະຊາຊົນສູງສຸດກໍໄດ້ຈັດຕັ້ງກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ໃຫ້ພະນັກງານຂອງສານປະຊາຊົນ, ພະນັກງານໄອຍະການ, ບັນດາຄູອາຈານສອນກົດໝາຍ, ທະນາຍຄວາມ ແລະ ນັກກົດໝາຍ ຢູ່ 6 ຈຸດໃນຂອບເຂດທົ່ວປະເທດ, ສ້າງແຜນອາດການດຳເນີນຄະດີແພ່ງ, ປຶ້ມຄູ່ມືການດຳເນີນຄະດີແພ່ງແຈກຢາຍໃຫ້ພາກສ່ວນຕ່າງໆ ແລະ ສັງ ຄົມ, ໄດ້ຄັດຈ້ອນເອົາບາງໝວດ, ບາງມາດຕາ ລົງໂຄສະນາເຜີຍແຜ່ທາງໜັງສືພິມ, ວາລະສານ, ເວັບໄຊ, ເພສເຟສບຸກຂອງສານປະຊາຊົນ ແລະ ສື່ອອນລາຍຕ່າງໆ ໂດຍສະເພາະເວັບໄຊ ແລະ ເພສເຟສບຸກຂອງສານປະຊາຊົນສູງສຸດມີຜູ້ເຂົ້າເບິ່ງ ແລະ ຕິດຕາມຫຼາຍກວ່າ 300.000 ຄົນ. ເຖິງຢ່າງໃດກໍຕາມ ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ກໍຄືການໃຫ້ປະຊາຊົນນຳໃຊ້ສິດໃນການດຳເນີນຄະດີຢ່າງຖືກຕ້ອງນັ້ນ ເຫັນວ່າການໂຄສະນາກົດໝາຍດຳເນີນຄະດີແພ່ງ ຍັງບໍ່ແຂງແຮງ ແລະ ທົ່ວເຖິງ ເຮັດໃຫ້ປະຊາຊົນບັນດາເຜົ່າ ບໍ່ເຂົ້າໃຈຕໍ່ລະບຽບກົດໝາຍ, ຂັ້ນຕອນການດຳເນີນຄະດີ, ເປັນສາເຫດໜຶ່ງພາໃຫ້ປະຊາຊົນທີ່ຢູ່ຫ່າງໄກສອກຫຼີກບໍ່ສາມາດເຂົ້າເຖິງຂະບວນການຍຸຕິທຳໄດ້ຢ່າງສະດວກເທົ່າທີ່ຄວນ.

ກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງປີ 2017 ໄດ້ກຳນົດໃຫ້ຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍ ມີ 6 ມາດຕາຄື: ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບສານປະຊາຊົນ; ມາດຕາ 13 ການພິຈາລະນາຄະດີເປັນໝູ່ຄະນະ; ມາດຕາ 31 ໂຄງປະກອບການຈັດຕັ້ງ; ມາດຕາ 32 ສະພາຜູ້ພິພາກສາ; ມາດຕາ 44 ສິດ ແລະ ໜ້າທີ່ຂອງຈ່າສານ; ມາດຕາ 63 ງົບປະມານ ຂອງສານປະຊາຊົນ.

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງປີ 2012 ໄດ້ກຳນົດໃຫ້ຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍຄື: ມາດຕາ 60 ສິດ ແລະ ໜ້າທີ່ຂອງພະນັກງານວິຊາການ; ມາດຕາ 156 ການເກັບເງິນວາງສານ; ມາດຕາ 218 ລະບຽບການລວມຂອງການປະຊຸມສານ.

ກົດໝາຍວ່າດ້ວຍສານປະຊາຊົນ ມາດຕາທີ່ປະຕິບັດບໍ່ໄດ້ ປະກອບມີ: ມາດຕາ 12,

ອ່ານຕໍ່ສະບັບໜ້າ...

# ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 2 ສະບັບ

ຕໍ່ຈາກສະບັບກ່ອນ...

ສະບັບເລກທີ179/ຄປຈ, ລົງວັນທີ 5 ຕຸລາ 2009 ປ່ຽນຊື່ຈາກອົງການໄອຍະການປະຊາຊົນຂັ້ນອຸທອນ ມາເປັນ “ອົງການໄອຍະການປະຊາຊົນພາກ”.

ໂດຍປະຕິບັດຕາມມະຕິຕົກລົງດັ່ງກ່າວ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ໄດ້ຮັບການປັບປຸງເປັນຄັ້ງທີສອງ, ປະກອບມີ IX ພາກ, 9 ໝວດ ແລະ 70 ມາດຕາ ເຊິ່ງໄດ້ກາຍເປັນຂີດໝາຍສຳຄັນແຫ່ງການປັບປຸງ ແລະ ພັດທະນາລະບົບອົງການໄອຍະການປະຊາຊົນ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງຂຶ້ນກວ່າເກົ່າ ເປັນຕົ້ນ ໄດ້ກຳນົດໃຫ້ອົງການໄອຍະການປະຊາຊົນພາກເຊິ່ງມີສິດ ແລະ ໜ້າທີ່ໃນການຄົ້ນຄວ້າ ແລະ ດຳເນີນຄະດີເປັນຂັ້ນອຸທອນ ສຳລັບຄະດີທີ່ຕັດສິນເປັນຂັ້ນຕົ້ນ ໂດຍສານປະຊາຊົນແຂວງ, ນະຄອນຫຼວງ ແລະ ຄົ້ນຄວ້າ, ດຳເນີນຄະດີເປັນຂັ້ນລົບລ້າງ ສຳລັບຄະດີທີ່ພິພາກສາເປັນຂັ້ນອຸທອນ ໂດຍສານປະຊາຊົນແຂວງ, ນະຄອນຫຼວງ ເຊິ່ງຖືກອຸທອນ ໂດຍຄູ່ຄວາມ ຫຼື ຖືກສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງ.

ປີ 2017 ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ໄດ້ຮັບການປັບປຸງເປັນຄັ້ງທີສາມ, ປະກອບມີ IX ພາກ, 9 ໝວດ ແລະ 70 ມາດຕາ. ໃນນັ້ນ,ລະບົບການຈັດຕັ້ງຂອງອົງການໄອຍະການປະຊາຊົນກໍໄດ້ຮັບການປັບປຸງເພີ່ມຕື່ມໂດຍສະເພາະໃນມາດຕາ 18 ວັກ 3 ແລະ 4 ໄດ້ກຳນົດການສ້າງຕັ້ງອົງການໄອຍະການປະຊາຊົນເຂດ ໂດຍເອົາຫຼາຍເມືອງ, ເທດສະບານ, ນະຄອນ ມາໂຮມກັນເປັນເຂດໜຶ່ງ ຕາມສະພາບພູມສາດ, ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຫຼື ມີຄະດີເກີດຂຶ້ນຫຼາຍ. ສຳລັບເມືອງ, ເທດສະບານ, ນະຄອນ ທີ່ບໍ່ມີອົງການໄອຍະການປະຊາຊົນເຂດຕັ້ງຢູ່ນັ້ນ ໃຫ້ມີພະນັກງານໄອຍະການປະຊາຊົນ ຫຼື ພະນັກງານວິຊາການກົດໝາຍ ຂອງອົງການໄອຍະການປະຊາຊົນເຂດ ສາມຫາ ຫ້າຄົນ ປະຈຳຢູ່ຕາມການແຕ່ງຕັ້ງ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເພື່ອປະຕິບັດສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນເຂດ ຕາມທີ່ໄດ້ກຳນົດໄວ້



ໃນກົດໝາຍ.

ເຖິງແມ່ນວ່າກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນໄດ້ມີການປັບປຸງ, ປ່ຽນແປງ ຕາມຄວາມຮຽກຮ້ອງຕ້ອງການໜ້າທີ່ການເມືອງຂອງພັກ-ລັດ ໃນແຕ່ລະໄລຍະກໍຕາມແຕ່ພາລະບົດບາດພື້ນຖານຂອງອົງການໄອຍະການປະຊາຊົນກໍຍັງແມ່ນການຕິດຕາມກວດກາການເຄົາລົບ, ປະຕິບັດກົດໝາຍ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ຕາມກົດໝາຍ. ພ້ອມກັນນັ້ນ, ອົງການໄອຍະການປະຊາຊົນແຕ່ລະຂັ້ນ ໄດ້ຮັບການຍົກສູງຄຸນນະພາບໃນການຄົ້ນຄວ້າ ແລະ ຖືເອົາການພິຈາລະນາຄະດີເປັນໜ້າທີ່ສຳຄັນຕົ້ນຕໍບົນພື້ນຖານຫຼັກການດຳເນີນຄະດີຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ໂດຍຍຶດໝັ້ນ 4 ຮັບປະກັນຄື: ຮັບປະກັນຄວາມຖືກຕ້ອງຕາມກົດໝາຍ, ຍຸຕິທຳ, ໂປ່ງໃສ ແລະ ທັນຕາມກຳນົດເວລາ.

ການປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຄັ້ງທີໜຶ່ງ ແມ່ນເນື່ອງມາຈາກການປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ເຊິ່ງລັດຖະທຳມະນູນສະບັບປັບປຸງ ໄດ້ຖືກຮັບຮອງຕາມມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 25/ສພຊ, ລົງວັນທີ 6 ພຶດສະພາ 2003 ແລະ ມີຜົນບັງຄັບໃຊ້ຕາມລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 32/ປປທ, ລົງວັນທີ 28 ພຶດສະພາ 2003 ເຊິ່ງໄດ້ສົ່ງຜົນໃຫ້ມີການປັບປຸງລະບົບກົດໝາຍ ແລະ ວຽກງານຍຸຕິທຳຢູ່ ສປປ ລາວ; ໃນນັ້ນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາກໍໄດ້ຮັບການປັບປຸງຄັ້ງທີໜຶ່ງ ໃນປີ 2004 ເພື່ອໃຫ້ສອດຄ່ອງຕາມລັດຖະທຳມະນູນແລະສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ພ້ອມທັງເຮັດໃຫ້ການດຳເນີນຄະດີອາຍານັບມື້ເປັນລະບົບຄົບຊຸດ ແລະ ມີມາດຕະຖານດີຂຶ້ນ ເຊິ່ງກົດໝາຍສະບັບດັ່ງກ່າວ ຖືກຮັບຮອງເອົາໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ V, ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 01/ສພຊ, ລົງວັນທີ 15 ພຶດສະພາ 2004, ປະກອບມີ XII ພາກ, 8 ໝວດ ແລະ 122 ມາດຕາ.

ປີ 2012 ກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ຮັບການປັບປຸງເປັນຄັ້ງທີສອງ ເຊິ່ງຖືກຮັບຮອງເອົາໃນກອງປະຊຸມສະພາແຫ່ງຊາດ ສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VII, ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 079/ສພຊ, ລົງວັນທີ 10 ກໍລະກົດ 2012 ແລະ ປະກາດໃຊ້ຕາມລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 236/ປປທ, ລົງວັນທີ 01 ສິງຫາ 2012, ປະກອບມີ XV ພາກ, 31 ໝວດ ແລະ 275 ມາດຕາ ເຊິ່ງໄດ້ກຳນົດບັນດາຫຼັກການພື້ນຖານຂອງການດຳເນີນຄະດີອາຍາໃຫ້ຈະແຈ້ງຂຶ້ນກວ່າເກົ່າ, ການສັ່ງຟ້ອງຜູ້ຖືກຫາຂຶ້ນສານຂອງຫົວໜ້າໄອຍະການປະຊາຊົນ ນອກຈາກການສັ່ງຟ້ອງໂດຍທົ່ວໄປແລ້ວ ຍັງກຳນົດໃຫ້ມີການສັ່ງຟ້ອງຂຶ້ນສານໂດຍກົງອີກ (ຕາມມາດຕາ 157-159) ແລະ ພ້ອມກັນນັ້ນ, ກໍໄດ້ກຳນົດໃຫ້ສານປະຊາຊົນພາກ ແລະ ສານປະຊາຊົນສູງສຸດ ມີສິດ ແລະ ໜ້າທີ່ໃນການພິຈາລະນາຄະດີເປັນຂັ້ນລົບລ້າງ, ກຳນົດໃຫ້ອົງການໄອຍະການປະຊາຊົນເຂດ ແລະ ສານປະຊາຊົນເຂດ ມີສິດ ແລະ ໜ້າທີ່ ພິຈາລະນາຄະດີເປັນຂັ້ນຕົ້ນ, ຄະດີອາຍາທີ່ກົດໝາຍກຳນົດໂທດຕັດອິດສະຫຼະພາບ 3 ປີລົງມາ ແລະ ມີມູນຄ່າຄວາມເສຍຫາຍທາງແພ່ງ 300 ລ້ານກີບລົງມາ. ການປັບປຸງຄັ້ງນີ້ເຫັນວ່າ ເປັນການປ່ຽນແປງຄັ້ງສຳຄັນໃນລະບົບສານປະຊາຊົນ ແລະ ລະບົບອົງການໄອຍະການປະຊາຊົນ ໃນການດຳເນີນຄະດີ ແລະ ພິຈາລະນາຕັດສິນຄະດີ.

ປີ 2017 ກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ຮັບການປັບປຸງເປັນຄັ້ງທີສາມ ເຊິ່ງຖືກຮັບຮອງເອົາໃນກອງປະຊຸມສະພາແຫ່ງຊາດສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII, ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 069/ສພຊ, ລົງວັນທີ 14 ພະຈິກ

ອ່ານຕໍ່ສະບັບໜ້າ...

# ສະພາປະຊາຊົນນະຄອນຫຼວງວຽງຈັນຕິດຕາມກວດກາຢ່າງໃກ້ຊິດ 3 ບັນຫາເຄັ່ງຮ້ອນ

ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 5 ສະພາແຫ່ງຊາດ ຊຸດທີ IX ທ່ານ ບຸນທານ ພຸດທະວົງສາ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ທັງເປັນຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນກ່ຽວກັບບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງນະຄອນຫຼວງວຽງຈັນ ເຊິ່ງທ່ານໄດ້ຍົກຂຶ້ນ 3 ບັນຫາ ຄື: ອັດຕາເງິນເຟີ້, ໂຄງການລົດໄຟລາວ-ຈີນ ແລະ ປາກົດການຫຍໍ້ທໍ້ ເຊິ່ງທ່ານໃຫ້ຮູ້ວ່າ:



ຜ່ານການເຄື່ອນໄຫວຕິດຕາມກວດກາຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 1 ສົມທົບກັບສະມາຊິກສະພາປະຊາຊົນນະຄອນຫຼວງ ໂດຍສະເພາະໃນເວລາລົງພົບປະຜູ້ມີສິດເລືອກຕັ້ງ ເຫັນວ່າບັນຫາຫຼັກໆທີ່ຊາວນະຄອນຫຼວງວຽງຈັນໄດ້ສະເໜີຕໍ່ຜູ້ແທນດັ່ງນີ້:

**1) ບັນຫາທີໜຶ່ງ:** ດັ່ງທີ່ຮູ້ນຳກັນວ່າ ປະເທດເຮົາ ພວມປະສົບກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເປັນຕົ້ນແມ່ນອັດຕາເງິນເຟີ້ ແລະ ຄ່າຄອງຊີບທີ່ເພີ່ມຂຶ້ນ, ເຖິງແມ່ນວ່າລັດຖະບານ ຈະເອົາໃຈໃສ່ແກ້ໄຂ ແລະ ກຳນົດເປັນວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຄວາມຫຍຸ້ງຍາກທາງເສດຖະກິດ-ການເງິນແລ້ວກໍຕາມ ແຕ່ການແກ້ໄຂບັນຫາດັ່ງກ່າວຍັງບໍ່ທັນແຂງແຮງເທົ່າທີ່ຄວນ ນັບແຕ່ຂັ້ນສູນກາງຫາທ້ອງຖິ່ນ. ມາຮອດປັດຈຸບັນເຫັນວ່າບັນຫາດັ່ງກ່າວຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງຂາດໂຕ ໂດຍສະເພາະອັດຕາເງິນເຟີ້ ຍັງມີທ່າອ່ຽງເພີ່ມຂຶ້ນຢູ່ເລື້ອຍໆ ເຊິ່ງສົ່ງຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນໃນທາງກົງ ແລະ ທາງອ້ອມ.

ຕໍ່ກັບບັນຫາດັ່ງກ່າວ ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 1 ໃນນາມເປັນຕົວແທນຂອງຊາວນະຄອນຫຼວງວຽງຈັນ ກໍໄດ້ເອົາໃຈໃສ່ໃນການຕິດຕາມກວດກາບັນຫາດັ່ງກ່າວ ແລະ ໄດ້ສຸມໃສ່ປະກອບຄຳເຫັນໃນວາລະການລາຍງານຂອງລັດຖະບານຕໍ່ກອງປະຊຸມຄັ້ງນີ້ ເຊິ່ງໄດ້ຍົກໃຫ້ເຫັນບັນຫາ, ຂໍ້ຫຍຸ້ງຍາກ ແລະ ໄດ້ເຈາະຈີ້ມ ເພື່ອໃຫ້ລັດຖະບານ, ທະນາຄານກາງ ແລະ ກະຊວງກ່ຽວຂ້ອງ ມີຄຳເຫັນຊີ້ແຈງຕໍ່ກອງປະຊຸມ ໃນນີ້, ສສຊ ປະຈຳເຂດເລືອກຕັ້ງທີ 1 ກໍໄດ້ຍົກໃຫ້ເຫັນກ່ຽວກັບມາດຕະການຕ່າງໆທີ່ລັດຖະບານໄດ້ປະຕິບັດຜ່ານມາ ໂດຍສະເພາະການປ່ອຍພັນທະບັດ 3 ຄັ້ງຜ່ານມານັ້ນ, ຂໍໃຫ້ລັດຖະບານທົບທວນຄືນວ່າ ສາມາດແກ້ໄຂບັນຫາເສດຖະກິດນີ້ໄດ້ຢ່າງກົງຈຸດບໍ? ພ້ອມດຽວກັນນັ້ນ ກໍໄດ້ສະເໜີແນວທາງວິທີການແກ້ໄຂເພື່ອຫຼຸດຜ່ອນຄວາມກົດດັນໃນການໃຊ້ເງິນຕາ ເປັນຕົ້ນແມ່ນສະເໜີໃຫ້ສົ່ງເສີມນະໂຍບາຍລົດໄຟຟ້າ ເພື່ອຫຼຸດການນຳເຂົ້ານ້ຳມັນເຊື້ອໄຟ, ຄົ້ນຄວ້າພິຈາລະນາຄືນການນຳໃຊ້ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາ, ກຳນົດມາດຕະການທີ່ຈະແຈ້ງໃນການແກ້ໄຂບັນຫາເສດຖະກິດ ແລະ ມາດຕະການສົ່ງເສີມການນຳໃຊ້ເງິນກີບໃນສັງຄົມ ເພື່ອເປັນຂໍ້ສະເໜີໃຫ້ລັດຖະບານໄດ້ນຳໄປພິຈາລະນາ.

**2) ບັນຫາທີສອງ:** ບັນຫາການຊົດເຊີຍໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາຂະໜາດໃຫຍ່ທີ່ຈັດຕັ້ງປະຕິບັດຢູ່ນະຄອນຫຼວງ ເປັນຕົ້ນແມ່ນໂຄງການທາງລົດໄຟລາວ-ຈີນ ຕິດພັນກັບໂຄງການທ່າບົກ-ທ່ານາແລ້ງ ເຂດໂລຈິດສ໌ຕິກ ໂດຍສະເພາະຢູ່ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ເຫັນວ່າປັດຈຸບັນໂຄງການໄດ້ຈັດຕັ້ງປະຕິບັດໄປແລ້ວ ແຕ່ການຊົດເຊີຍໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບນັ້ນຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງຂາດໂຕ.

ຕໍ່ບັນຫາດັ່ງກ່າວ, ສສຊ ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງ ກໍບໍ່ໄດ້ປ່ອຍປະລະເລີຍ ໄດ້ເອົາໃຈໃສ່ຊຸກຍູ້ພາກສ່ວນກ່ຽວຂ້ອງມາໂດຍຕະຫຼອດ ເຊິ່ງຜ່ານມາກໍໄດ້ປະສານສົມທົບກັບສະພາແຫ່ງຊາດ, ກະຊວງກ່ຽວຂ້ອງ, ອົງການປົກຄອງນະຄອນຫຼວງ ເພື່ອແກ້ໄຂບັນຫາດັ່ງກ່າວ ແລະ ໄດ້ນຳເຂົ້າພິຈາລະນາໃນກອງປະຊຸມຄະນະປະຈຳສະພາປະຊາຊົນນະຄອນຫຼວງ ເຊິ່ງກອງປະຊຸມກໍໄດ້ມີຄຳເຫັນໃຫ້ຄະນະຮັບຜິດຊອບໂຄງການແກ້ໄຂຄ່າຊົດເຊີຍໃຫ້ແກ່ປະຊາຊົນ ໄກ່ເກ່ຍ ແລະ ຊຳລະໃຫ້ສຳເລັດພາຍໃນ 1 ເດືອນ ນັບແຕ່ມື້ດຳເນີນກອງປະຊຸມ, ຖ້າຫາກແກ່ຍາວເວລາ ເຊິ່ງມີສາເຫດຈາກຜູ້ດຳເນີນໂຄງການແມ່ນຈະຖືກປັບໝາຍຕາມອັດຕາເງິນເຟີ້ຂະແໜງທີ່ດິນໃນແຕ່ລະໄລຍະ ແຕ່ຖ້າການແກ່ຍາວເວລາເຊິ່ງບໍ່ມີສາເຫດຈາກຜູ້ດຳນີນໂຄງການ ຫຼື ສາເຫດຈາກປະຊາຊົນ ແມ່ນຈະບໍ່ມີການປັບໃໝ ເປັນຕົ້ນແມ່ນປະຊາຊົນຍົກລະດັບຄ່າຊົດເຊີຍຈາກທີ່ດິນປະເພດ 4 ເປັນປະເພດ 3.

**3) ບັນຫາທີສາມ:** ກ່ຽວກັບປາກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນແມ່ນບັນຫາຢາເສບຕິດ ເຫັນວ່າ ປັດຈຸບັນຢາເສບຕິດມາໃນຫຼາຍຮູບແບບ ເຊັ່ນ: ປະເພດເຄື່ອງດື່ມຕ່າງໆທີ່ມີສານເສບຕິດເປັນສ່ວນປະກອບ, ນ້ຳກະທ່ອມ ແລະ ອີກບັນຫາໜຶ່ງທີ່ທຳລາຍສຸຂະພາບຂອງໄວໜຸ່ມກໍຄື ຢາສູບໄຟຟ້າ ເຊິ່ງເຫັນວ່າມີການຊື້-ຂາຍ ຢ່າງໂຈ່ງແຈ້ງ ໄວໜຸ່ມສາມາດເຂົ້າເຖິງໄດ້ງ່າຍ.

ຕໍ່ກັບບັນຫາດັ່ງກ່າວ, ສະມາຊິກສະພານະຄອນຫຼວງວຽງຈັນ ກໍໄດ້ເອົາໃຈໃສ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຄົ້ນຄວ້າມາດຕະການສະກັດກັ້ນ ແລະ ແກ້ໄຂ ແລະເຄື່ອນໄຫວຕິດຕາມກວດກາສະຖານທີ່ສຸ່ມສ່ຽງຕ່າງໆ ທີ່ອາດເປັນແຫຼ່ງມົ້ວສຸມຊື້-ຂາຍ ເປັນຕົ້ນແມ່ນສະຖານທີ່ບັນເທີງຕ່າງໆ, ຮ້ານອິນເຕີເນັດ ແຕ່ເຫັນວ່າບັນຫາດັ່ງກ່າວກໍຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງຈິງຈັງ ເຊິ່ງວາລະຕໍ່ໄປ ສສຊ ຈະໄດ້ສຸມໃສ່ຄົ້ນຄວ້າປະກອບຄຳເຫັນຕໍ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ທີ່ນຳມາລາຍງານຕໍ່ກອງປະຊຸມຄັ້ງນີ້.

ໂອກາດດັ່ງກ່າວ, ທ່ານ ບຸນທານ ພຸດທະວົງສາ ໃນນາມເປັນຕົວແທນຕາງໜ້າ ສສຊ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ໄດ້ຝາກຄວາມຢ້ຽມຢາມຖາມຂ່າວມາເຖິງພໍ່ແມ່ປະຊາຊົນບັນດາເຜົ່າ ໂດຍສະເພາະຊາວນະຄອນຫຼວງວຽງຈັນວ່າ: ໃນສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດທີ່ປະເທດເຮົາພວມປະເຊີນຢູ່ເວົ້າລວມ ເວົ້າສະເພາະແມ່ນຊາວນະຄອນຫຼວງວຽງຈັນ ຂໍໃຫ້ພໍ່ແມ່ປະຊາຊົນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ມີຄວາມອົດທົນຜ່ານຜ່າວິກິດການນີ້ໄປພ້ອມກັນ ແລະ ສະເໜີໃຫ້ບັນດາອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ ແລະ ພາກສ່ວນກ່ຽວຂ້ອງເອົາໃຈໃສ່ມີສ່ວນຮ່ວມໃນການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂເສດຖະກິດ-ການເງິນ ແລະ ແກ້ໄຂບັນຫາຢາເສບຕິດຢ່າງແຂງແຮງ ແລະ ສສຊ, ສະມາຊິກສະພານະຄອນຫຼວງ ກໍຈະສຸມໃສ່ຊຸກຍູ້ຕິດຕາມພາກສ່ວນກ່ຽວຂ້ອງ ແລະ ສຸມໃສ່ປະກອບຄຳເຫັນຕໍ່ບັນຫາຕ່າງໆທີ່ນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດໃນຄັ້ງນີ້ຢ່າງຕັ້ງໜ້າ ເພື່ອສະເໜີແນວທາງໃນການແກ້ໄຂ ເພື່ອໃຫ້ລັດຖະບານ, ບັນດາກະຊວງນຳໄປພິຈາລະນາຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບພາລະບົດບາດຂອງແຕ່ລະພາກສ່ວນ.

# ບົດລາຍງານລັດຖະບານ ຄວນສະແດງຕົວເລກທີ່ເປັນລາຍຮັບແຫ່ງຊາດ

ໃນວາລະການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທ່ານ ພອນສານ ວິໄລເມົ້ງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ປະກອບຄຳເຫັນຕໍ່ວຽກງານຂອງລັດຖະບານ ໄລຍະ 6 ເດືອນຕົ້ນປີ 2023 ເຊິ່ງລາຍລະອຽດມີດັ່ງນີ້:

**ບັນຫາທີໜຶ່ງ** ຂ້າພະເຈົ້າຢາກສະເໜີເພື່ອແລກປ່ຽນກ່ຽວກັບບົດລາຍງານຂອງລັດຖະບານ ຢາກສະເໜີໃຫ້ມີການຄົ້ນຄວ້າ ປັບປຸງເບິ່ງຄືນ



ບາງຕົວເລກຂອງບາງພາກສ່ວນ ແລະ ບາງຂະແໜງການ; ອັນທີໜຶ່ງແມ່ນກ່ຽວກັບຕົວເລກດ້ານກະສິກຳ ແລະ ປ່າໄມ້ ເຊິ່ງການສະເໜີລາຍງານສ່ວນຫຼາຍແມ່ນເຈາະຈົງເຫັນແຕ່ຕົວເລກການຜະລິດ ສ່ວນຕົວເລກເປັນເງິນທີ່ເປັນລາຍຮັບແຫ່ງຊາດຍັງບໍ່ເຫັນ. ສະນັ້ນ ຂ້າພະເຈົ້າຢາກສະເໜີວ່າປັບປ່ຽນຈາກຕົວເລກສະຖິຕິກະສິກຳທີ່ຜະລິດໄດ້ເປັນຕົວເລກເປັນເງິນລາຍຮັບເຂົ້າສູ່ລາຍຮັບແຫ່ງຊາດໄດ້ບໍ່ ເພາະວ່າຕະຫຼອດໄລຍະທີ່ຜ່ານມາເຫັນວ່າການສະຫຼຸບສ່ວນຫຼາຍເປັນຮູບແບບນີ້. ອັນທີສອງ ກ່ຽວກັບການສະຫຼຸບຂອງຂະແໜງພະລັງງານ ແລະ ບໍ່ແຮ່ ໂດຍສະເພາະແມ່ນໄຟຟ້າເຫັນວ່າຕົວເລກສະແດງເຖິງແຕ່ການຜະລິດກະແສໄຟຟ້າໄດ້ເທົ່ານີ້ເທົ່ານັ້ນກິໂລວັດໂມງ ເທົ່ານີ້ລ້ານໂມງ ເປັນເງິນເທົ່ານີ້ ແຕ່ບໍ່ທັນເຫັນວ່າໄດ້ເງິນເທົ່າໃດ ມີກຳໄລເທົ່າໃດ ຫຼຸດທຶນເທົ່າໃດ ແລະ ຈະແກ້ໄຂແນວໃດຕໍ່ກັບບັນຫາລາຍຮັບດັ່ງກ່າວ ສະນັ້ນອັນນີ້ຢາກສະເໜີໃຫ້ຄົ້ນຄວ້າເບິ່ງຄືນ. ອັນທີສາມ ຢູ່ໃນການບົດລາຍງານກ່ຽວກັບຕົວເລກຜົນງານຂອງອົງການຈັດຕັ້ງມະຫາຊົນ ບໍ່ທັນເຫັນລັດຖະບານເອົາເຂົ້າຢູ່ໃນບົດດັ່ງກ່າວ ຂ້າພະເຈົ້າໄດ້ຕິດຕາມເບິ່ງແລ້ວ ອົງການຈັດຕັ້ງມະຫາຊົນ ກໍມະບານ, ຊາວໜຸ່ມ, ແມ່ຍິງກໍໄດ້ປະກອບສ່ວນເຂົ້າໃນຂະບວນການພັດທະນາເສດຖະກິດ-ສັງຄົມນີ້ຫຼາຍສົມຄວນ ສະນັ້ນສະເໜີໃຫ້ລັດຖະບານເອົາເຂົ້າຕື່ມ ເພື່ອເປັນຂໍ້ມູນປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງພວກເຮົາ.

**ບັນຫາທີສອງ** ຂ້າພະເຈົ້າຢາກສະເໜີຕໍ່ກັບບັນຫາການແກ້ໄຂບັນຫາເສດຖະກິດ ໂດຍສະເພາະແມ່ນອັດຕາເງິນເຟີ້ຕ່າງໆເບິ່ງຕົວຈິງໃນການຈັດຕັ້ງປະຕິບັດໃນໄລຍະທີ່ຜ່ານມາ ກໍເຫັນວ່າພວກເຮົາຍັງບໍ່ທັນມີມາດຕະການທີ່ເດັດຂາດ ຫຼາຍມາດຕະການທີ່ວາງໄວ້ໃນນະໂຍບາຍວາງຢູ່ໃນທິດທາງແຜນການແຕ່ສະໄໝກອງປະຊຸມທີ່ແລ້ວມາຮອດກອງປະຊຸມສະໄໝນີ້ ກໍເຫັນວ່າຫຼາຍອັນຈະແຈ້ງ ລະບຽບກົດໝາຍກໍໄດ້ມີການກຳນົດຢ່າງຈະແຈ້ງ ແຕ່ພາກການຈັດຕັ້ງປະຕິບັດຕົວຈິງຍັງບໍ່ທັນແທດເຖິງ, ເຖິງວ່າທະນາຄານມີການຍຸບບັນດາຫ້າງຮ້ານແລກປ່ຽນຕ່າງໆ ແຕ່ມາຮອດປັດຈຸບັນພວກເຮົາກໍບໍ່ທັນສາມາດແກ້ໄຂບັນຫາອັດຕາເງິນເຟີ້ໄດ້ຊ້ຳແຮງກວ່ານັ້ນແມ່ນເພີ່ມຂຶ້ນອີກ ອັນນີ້ ພວກເຮົາແກ້ຖືກຈຸດລະບໍ່ ຢາກຕັ້ງບັນຫາວ່າແກ້ຖືກຈຸດແລ້ວບໍ່ ຄັນແກ້ບໍ່ຖືກຈຸດ ຊິເຮັດແນວໃດ ບັນດາມາດຕະການທີ່ລັດຖະບານ ທີ່ທະນາຄານວາງມານີ້ທຸກຄົນກໍວ່າດີໆ ແຕ່ວ່າເວລາຈັດຕັ້ງປະຕິບັດອັດຕາແລກປ່ຽນຕ່າງໆ ຄ່າຄອງຊີບຍັງຂຶ້ນເລື້ອຍໆ ສະນັ້ນ ຕໍ່ກັບບັນຫາມາດຕະການ ທັດສະນະສ່ວນຕົວຂ້າພະເຈົ້າເຫັນວ່າ ອັນທີໜຶ່ງ ຢາກສະເໜີວ່າພວກເຮົາຕ້ອງພ້ອມກັນຫັນລົງຮາກຖານ ເພື່ອແກ້ໄຂຢ່າງຈິງຈັງ ແລະ ເອົາມາດຕະການທາງດ້ານກົດໝາຍສຶກສາອົບຮົມ ຜູ້ໃດທີ່ເປັນຜູ້ລະເມີດແທ້ກໍຕ້ອງໄດ້ປະຕິບັດເຂັ້ມງວດເດັດຂາດ ເຊິ່ງຢູ່ໃນນີ້ລັດຖະບານກໍໄດ້ສະເໜີວ່າມີຢູ່ 3 ອັນ ລັກສະນະເດັດຂາດ ໂປ່ງໃສ ເປັນມືອາຊີບຕາມນະໂຍບາຍຂອງລັດຖະບານ ແຕ່ວ່າຄຳວ່າເດັດຂາດນີ້ ກໍຍັງຢາກໃຫ້ເອົາໃຈໃສ່ສືບຕໍ່ລົງເລິກແທ້ໆ ການຫັນລົງກໍ່ສ້າງຮາກຖານການເມືອງ ຕະຫຼອດໄລຍະທີ່ຜ່ານມາພວກເຮົາໃຊ້ໄດ້ຜົນທີ່ສຸດ ແຕ່ວ່າມາຮອດປັດຈຸບັນນີ້ ສະພາບເງິນເຟີ້ ສະພາບເສດຖະກິດຫຍຸ້ງຍາກ ພວກເຮົາຕ້ອງຫັນໂຕນີ້ເປັນຈຸດໃຈກາງສຸມໃສ່ໃນການແກ້ບັນຫາເສດຖະກິດ ຖ້າພວກເຮົາບໍ່ເຮັດແທ້ທຳຈິງແມ່ນບໍ່ລອດ. ອີກອັນໜຶ່ງ ຂ້າພະເຈົ້າຍັງເຫັນວ່າພວກເຮົານອນຢູ່ໃນທ່າອ່ຽງ ພວກເຮົາຕ້ອງເຂົ້າໃຈວ່າຍຸກໂລກາພິວັດ ເຕັກໂນໂລຊີ ມີຫຼາຍອັນທີ່ປັບປ່ຽນຕໍ່ການດຳລົງຊີວິດຕໍ່ການນຳພາຂອງພວກເຮົາ ດັ່ງນັ້ນ ຫຼາຍອັນພວກເຮົາຈະຕ້ອງໄດ້ຄົ້ນຄວ້າເຕັກນິກວິທະຍາສາດອັນໃໝ່ ໄປສູ່ການແກ້ໄຂ ຖ້າຍັງໝູນໃຊ້ກົນໄກເກົ່າບາງເທື່ອອາດຈະບໍ່ທັນໂລກ; ຍົກຕົວຢ່າງການຄ້າຂາຍມີການຫັນໄປໃຊ້ອອນລາຍ ຫັນໄປໃຊ້ລະບົບດີຈີຕອນແລ້ວ ແຕ່ພວກເຮົາຍັງຈະດຳເນີນກົນໄກເກົ່າ ມັນແກ້ບໍ່ທັນ ສະນັ້ນຕ້ອງມີອັນແກ້ ຕ້ອງມີມາດຕະການແກ້ ຕ້ອງມີວິທະຍາສາດອັນໃໝ່ມາແກ້ ເຊັ່ນ: ຊຸມປີຜ່ານມາມີນະໂຍບາຍປ່ຽນແປງໃໝ່ ມາຮອດປັດຈຸບັນເຫັນສະພາບແນວນີ້ ພວກເຮົາກໍຕ້ອງໄດ້ນຳໃຊ້ຄົ້ນຄວ້າຄືນບົດຮຽນທີ່ລຸ້ນຜູ້ນຳທີ່ໄດ້ສັ່ງສອນພວກເຮົາທີ່ຜ່ານມາ.

**ບັນຫາທີສາມ** ຂ້າພະເຈົ້າຢາກສະເໜີແມ່ນຕໍ່ກັບການປະຕິຮູບລັດວິສາຫະກິດ ການປະຕິຮູບລັດວິສາຫະກິດເປົ້າໝາຍວ່າ ຢາກປະຕິຮູບລັດວິສາຫະກິດ ປາກົດວ່າລາຍງານມາ ສະໄໝກອງປະຊຸມເທື່ອແລ້ວກໍຍັງບໍ່ທັນເຫັນ ແລະ ມາເທື່ອນີ້ ກໍຍັງບໍ່ທັນເຫັນ ຂ້າພະເຈົ້າມາເບິ່ງລວມແລ້ວ ການແກ້ໄຂກ່ຽວກັບການປະຕິຮູບລັດວິສາຫະກິດນີ້ ພວກເຮົາວິຊາການມອງເບິ່ງງ່າຍໆ ບໍ່ຖ້າແກ້ໄຂທີ່ຫຍຸ້ງຍາກປານໃດກໍໄດ້. ອັນທີໜຶ່ງຫຼຸດພະນັກງານ ອັນທີສອງຫຼຸດປະລິມານການຮົ່ວໄຫຼ, ໄຟກໍຮົ່ວໄຫຼໃຫ້ໜ້ອຍລົງ, ນ້ຳປະປາຮົ່ວໄຫຼໃຫ້ໜ້ອຍລົງ, ຫຼຸດເງິນເດືອນພະນັກງານ ກໍຫຼຸດຄ່າບໍລິຫານ ມັນກໍມີກຳໄລແລ້ວ ຫຼຸດແຕ່ 4 ດ້ານນີ້ກໍໄດ້ແລ້ວ. ນອກຈາກນັ້ນ ຈັ່ງເພີ່ມອີກອັນໃດທີ່ຈຳເປັນ ຂ້າພະເຈົ້າຄິດວ່າຈະແກ້ໄຂບັນຫາໄດ້ ບັດນີ້ຫອຍພັດທະນາອັນອື່ນໆ ລັດວິສາຫະກິດນ້ຳປະປາ ໄຟຟ້າຕ່າງໆນີ້ລ້ວນແຕ່ມີບັນຫາ 2-3 ດ້ານນັ້ນໝົດ ຖ້າພວກເຮົາແກ້ໄຂບັນຫາ 4 ດ້ານນີ້ ຂ້າພະເຈົ້າຄິດວ່າຈະໄປໄດ້ດີ.

# ລັດຖະບານ ຕ້ອງສ້າງຄວາມເຊື່ອໝັ້ນ ໃຫ້ປະຊາຊົນ ໃນການແກ້ໄຂບັນຫາຕ່າງໆຂອງຊາດ

ທ່ານ ຈັນທະວົງ ແສນອາມາດມົນຕີ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ໄດ້ປະກອບຄຳເຫັນຕໍ່ແຜນພັດທະນາເສດຖະກິດ-ສັງຄົມ ໃນວາລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງມີລາຍລະອຽດດັ່ງນີ້:



**ຈຸດທີໜຶ່ງ** ໃນ 6 ເດືອນຕົ້ນປີ 2023 ເຫັນວ່າລັດຖະບານໄດ້ມີຄວາມພະຍາຍາມຫຼາຍສົມຄວນຈົນມີໝາກມີຜົນເປັນຕົວເລກຢັ້ງຢືນຫຼາຍອັນເປັນຕົ້ນແມ່ນການເຕີບໃຫຍ່ທາງດ້ານເສດຖະກິດ 4,8 ຖືວ່າເປັນຕົວເລກທີ່ສູງສົມຄວນລື່ນຄາດໝາຍທີ່ສະພາໄດ້ຮັບຮອງ ລວມທັງຕົວເລກຄາດໝາຍລວມຍອດຜະລິດຕະພັນພາຍໃນ, ລາຍຮັບຕໍ່ຫົວຄົນໃນ 6 ປີຜ່ານມາ ແລະ ຕົວເລກອື່ນໆ ສາມາດເຮັດໄດ້ດີ ເຊິ່ງສະແດງເຖິງການຜະລິດກະສິກຳ, ການປູກເຂົ້ານາປີ-ນາແຊງ ແລະ ການຄ້າດ້ານອື່ນໆ ອັນນີ້ຊົມເຊີຍຕໍ່ຄວາມພະຍາຍາມຂອງລັດຖະບານໃນທ່າມກາງສະພາບແວດລ້ອມທີ່ພວກເຮົາຮູ້ນຳກັນແລ້ວວ່າ ມີຄວາມຫຍຸ້ງຍາກທັງພາຍໃນປະເທດ, ພາກພື້ນ ແລະ ສາກົນ.

**ຈຸດທີສອງ** ເຫັນວ່າກໍມີບັນຫາທີ່ເປັນອຸປະສັກສິ່ງທ້າທາຍ ໂດຍສະເພາະມັນເປັນຄວາມຄອງຄອຍ, ຄວາມຮຽກຮ້ອງຕ້ອງການຂອງປະຊາຊົນບັນດາເຜົ່າຈຳນວນຫຼາຍ ກໍຄືພະນັກງານ-ລັດຖະກອນຈຳນວນບໍ່ໜ້ອຍ ໄດ້ສະແດງຄວາມເປັນຫ່ວງເປັນໃຍ ແລະ ຕັ້ງຄຳຖາມຂຶ້ນມາກໍແມ່ນລັດຖະບານຈະນຳພາແກ້ໄຂບັນຫາເງິນເຟີ້, ລາຄາສິນຄ້າ, ຄວາມຫຍຸ້ງຍາກທາງດ້ານຊີວິດການເປັນຢູ່ທີ່ກະທົບຕໍ່ຊີວິດຕົວຈິງຂອງເຂົາເຈົ້າຄືແນວໃດ ບັນຫານີ້ສຳຄັນ ເພາະຈະໝາຍເຖິງຄວາມເຊື່ອໝັ້ນ, ຄວາມໄວ້ວາງໃຈ, ຄວາມຄອງຄອຍວ່າຈະເກີດຂຶ້ນຈິງ ຫຼືບໍ່, ຂ້າພະເຈົ້າກໍເຫັນວ່າ ເບື້ອງລັດຖະບານເຮົາກໍໄດ້ກຳນົດບັນດາແຜນການ, ບັນດາຄາດໝາຍສູ້ຊົນ ພ້ອມດ້ວຍວິທີການ ແລະ ມາດຕະການຈັດຕັ້ງປະຕິບັດ ເຫັນວ່າໂດຍພື້ນຖານກໍເປັນລະບົບຄົບຊຸດດີພໍສົມຄວນ ກໍເຊື່ອໝັ້ນວ່າຖ້າຫາກປະຕິບັດຢ່າງຈິງຈັງຕາມຫຼັກການທີ່ໄດ້ວາງໄວ້ ຂ້າພະເຈົ້າຄິດວ່າກໍມີຄວາມສາມາດແກ້ໄຂໄດ້ ສະນັ້ນ, ການແກ້ໄຂບັນຫາເງິນເຟີ້ ມັນມີຄວາມໝາຍສຳຄັນຫຼາຍເຖິງວ່າເຮົາຈະຜະລິດໄດ້ຫຼາຍ, ຜະລິດຢູ່ພາຍໃນສ່ວນຫຼາຍມັນຄິດໄລ່ມູນຄ່າເປັນເງິນກີບ ແຕ່ຢູ່ໃນສະພາບທີ່ອັດຕາແລກປ່ຽນເໜັງຕີງ ປະເພດວັດຖຸພັນ, ປັດໃຈການຜະລິດຈຳນວນບໍ່ໜ້ອຍພວກເຮົາຕ້ອງນຳເຂົ້າ ເມື່ອມາສົມທຽບການຄ້າຂາຍແມ່ນໃນຕົວພວກເຮົາກໍຫຼຸດທຶນ ເສຍປຽບດ້ານອັດຕາແລກປ່ຽນ ອັນນີ້ຂ້າພະເຈົ້າເຫັນວ່າເສດຖະກິດທີ່ດີ ການເຕີບໂຕທາງດ້ານເສດຖະກິດ ຕ້ອງໃຫຍ່ກວ່າ ຫຼືເທົ່າກັບອັດຕາເງິນເຟີ້ຈຶ່ງດີ; ແຕ່ອັດຕາເງິນເຟີ້ ສະພາກຳນົດ 9% ໃນປີໜຶ່ງແຕ່ວ່າໃນຕົວຈິງປັດຈຸບັນນີ້ມັນເກືອບ 40% ແລ້ວ ສະນັ້ນມັນເປັນສິ່ງທ້າທາຍຫຼາຍ ປະຊາຊົນກໍຢາກເຫັນວ່າ ອີກ 6 ເດືອນຕໍ່ໜ້າ ຈະສາມາດຫຼຸດໄດ້ບໍ່ອັດຕາເງິນເຟີ້ ອັດຕາແລກປ່ຽນຈະສາມາດຄຸມໄດ້ບໍ່.

ຂ້າພະເຈົ້າໄດ້ມີໂອກາດລົງຮາກຖານ ກໍມີຄວາມພູມໃຈທີ່ໄດ້ເປັນ ສສຊ ສະຫວັນນະເຂດ ດິນແດນກວ້າງໃຫຍ່ ມີໂອກາດໄດ້ໄປເມືອງທ່າປາງທອງ ແລະ ເມືອງອາດສະພອນ ເຫັນວ່າປະຊາຊົນຍັງມີມູນເຊື້ອດຸໝັ່ນ ຍັງມີຄວາມສາມັກຄີ ແລະ ເຊື່ອ; ໝັ່ນພັກ-ລັດຂ້າພະເຈົ້າໄດ້ໄປເຫັນອ່າງເກັບນ້ຳຊົນລະປະທານຕື່ມອີກ 2 ບ່ອນ ຢູ່ເຊກີ ແລະ ຢູ່ເຊສາລະລອງ 2 ອັນນັ້ນເພີ່ມສາມາດສະໜອງນ້ຳເພື່ອເຮັດກະສິກຳ 2.500 ເຮັກຕາ ບວກໃສ່ອີກ 2.000 ກວ່າເຮັກຕາ ອັນນີ້ເວົ້າສະເພາະແຕ່ແຂວງສະຫວັນນະເຂດ ຍັງບໍ່ທັນເວົ້າເຖິງບັນດາທົ່ງພຽງອື່ນໆ ສະນັ້ນເມື່ອເບິ່ງຊັບພະຍາກອນທຳມະຊາດອັນຮັ່ງມີນີ້ ຂ້າພະເຈົ້າເຊື່ອໝັ້ນວ່າພວກເຮົາຢັ້ງຢືນວ່າມີທ່າແຮງ, ມີມູນເຊື້ອດຸໝັ່ນ ຂໍສະເໜີໃຫ້ທາງເບື້ອງລັດຖະບານຕ້ອງໄດ້ສົ່ງເສີມ ຕ້ອງໄດ້ຊຸກຍູ້ເຂົາເຈົ້າໃຫ້ມີສ່ວນຮ່ວມຄືດັ່ງທີ່ພວກເຮົາຊ່ວຍກັນຕໍ່ສູ້ຕ້ານ ແລະ ສະກັດກັ້ນໂຄວິດຜ່ານມາ ໝາຍຄວາມວ່າພວກເຮົາຕ້ອງມີຄວາມສາມັກຄີ ຕ້ອງມີການປະສານງານ ຕ້ອງມີກຳລັງແຮງທີ່ເປັນເອກະພາບ ຮ່ວມກັນຈັດຕັ້ງປະຕິບັດ ແລະ ບໍ່ຄວນຈະປະໃຫ້ລັດຖະບານຝ່າຍດຽວເປັນເຈົ້າການໃນການແກ້ໄຂບັນຫາ. ໃນທຸກໆປີ, ພວກເຮົາມີການປະກາດຂະບວນແຂ່ງຂັນຮັກຊາດ ແລະ ພັດທະນາ ຂ້າພະເຈົ້າຈຶ່ງຢາກໃຫ້ຍູ້ແຮງຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາຕໍ່ວຽກງານນີ້ ເພາະວ່າກ່ອນອື່ນໝົດມັນມີຜົນກະທົບທາງດ້ານຈິດຕະສາດ ຕໍ່ປະຊາຊົນລາວບັນດາເຜົ່າ ຖ້າເຮັດໄດ້ດີຈຶ່ງຈະສາມາດດຶງໄດ້ຄວາມເຊື່ອໝັ້ນຄວາມໄວ້ເນື້ອເຊື່ອໃຈຂອງປະຊາຊົນບັນດາເຜົ່າ ກໍຄືພະນັກງານຕ່າງໆຕໍ່ພັກຕໍ່ລັດ ກໍຄືຄະນະລັດຖະບານໃນຊຸດປັດຈຸບັນນີ້ ສະນັ້ນ, ດ້ວຍທ່າແຮງທີ່ພວກເຮົາມີ ຂ້າພະເຈົ້າຢາກເນັ້ນໃຫ້ໃຫ້ສືບຕໍ່ເອົາໃຈໃສ່ພັດທະນາທາງດ້ານກະສິກຳ ຂໍໃຫ້ເອົາໃຈໃສ່ ແລະ ໃຫ້ເນັ້ນສິ່ງທີ່ພວກເຮົາມີທ່າແຮງ ເຮັດກະສິກຳສະອາດເພື່ອຕິດພັນກັບການທ່ອງທ່ຽວ ເພາະນັກທ່ອງທ່ຽວຫຼາຍປະເທດທີ່ມາທ່ອງທ່ຽວປະເທດລາວ ເມື່ອມາແລ້ວເຂົາກໍຢາກມາອີກ ຖ້າເຮົາມີສິ່ງທີ່ດຶງດູດຈິດໃຈ ນອກຈາກທຳມະຊາດ, ວັດທະນະທຳ, ປະຫວັດສາດ ແລະ ອື່ນໆແລ້ວ ຖ້າພວກເຮົາກໍມີສິ່ງດີໆຕໍ່ສຸຂະພາບເຂົາເຈົ້າ ແລະ ອື່ນໆອີກ ກໍຍິ່ງສາມາດດຶງດູດບັນດານັກທ່ຽວທ່ອງຕື່ມອີກ; ສຳລັບການຄຸ້ມຄອງລາຄາສິນຄ້າຢາກສະເໜີທາງເບື້ອງລັດຖະບານເອົາໃຈໃສ່ຕິດຕາມກວດກາ ເລີ່ມຈາກມາດຕະການສຶກສາອົບຮົມໄປສູ່ມາດຕະການບໍລິຫານ ສົ່ງເສີມໃຫ້ທຸກຄົນມີນ້ຳໃຈຮັກຊາດ ຮັກຜະລິດຕະພັນລາວຮັກເງິນກີບ.

## ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ

(ສພຊ) ໂດຍປະຕິບັດຕາມກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ແຜນການຕິດຕາມກວດກາ 6 ເດືອນຕົ້ນປີ 2023 ຂອງຄະນະກຳມະການ ທັງເປັນການລົງຕິດຕາມກວດກາຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ວຽກງານວິຊາສະເພາະຂອງອົງການໄອຍະການປະຊາຊົນແຂວງອຸດົມໄຊ. ຕອນບ່າຍຂອງວັນທີ 10 ກໍລະກົດ 2023 ທີ່ຫ້ອງປະຊຸມອົງການໄອຍະການປະຊາຊົນແຂວງອຸດົມໄຊ ໄດ້ຈັດກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໂດຍການເປັນປະທານຮ່ວມຂອງທ່ານ ທອງຄານ ວັດສະດາກອນ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງອຸດົມໄຊ ແລະ ທ່ານ ນາງ ສົມຫວັງ ໄຊຍະຕິ ຫົວໜ້າອົງການໄອຍະການປະຊາຊົນແຂວງ, ມີພະນັກງານອົງການໄອຍະການປະຊາຊົນແຂວງ, ອົງການໄອຍະການປະຊາຊົນເຂດ 1 ແລະ ຂະແໜງຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນແຂວງເຂົ້າຮ່ວມ.




ໃນກອງປະຊຸມໄດ້ຮັບຟັງການລາຍງານໂດຍຫຍໍ້ ການຈັດຕັ້ງປະຕິບັດວຽກງານຮອບດ້ານຂອງອົງການໄອຍະການປະຊາຊົນແຂວງອຸດົມໄຊ ໃນໄລຍະ 6 ເດືອນຕົ້ນປີ ແລະ ວາງທິດທາງແຜນການ 6 ເດືອນທ້າຍປີ 2023. ຕະຫຼອດໄລຍະ 6 ເດືອນຕົ້ນປີ 2023 ອົງການໄອຍະການປະຊາຊົນແຂວງໄດ້ຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນຢ່າງຕັ້ງໜ້າ, ມີຜົນສຳເລັດຫຼາຍດ້ານ ແລະ ບັນລຸຕາມແຜນທີ່ໄດ້ວາງໄວ້. ພ້ອມດຽວກັນນັ້ນ, ຜູ້ແທນກອງປະຊຸມຍັງໄດ້ມີຄຳຄິດຄຳເຫັນແລກປ່ຽນບົດຮຽນ ແລະ ມີຄຳຖາມເຈາະຈີ້ມເພີ່ມຕື່ມຕໍ່ກັບບາງບັນຫາ ແລະ ບັນດາຂະແໜງທີ່ກ່ຽວຂ້ອງກໍໄດ້ຂຶ້ນຊີ້ແຈງຕໍ່ກອງປະຊຸມ ຕາມຄວາມຮັບຜິດຊອບຂອງຕົນ.

**(ສີແຫວງ ສີບຸນເຮືອງ)**

## ຮອງປະທານ ສພຂ ແຂວງວຽງຈັນ ຕິດຕາມກວດກາຢູ່ເມືອງວຽງຄຳ

(ສພຊ) ກອງປະຊຸມຕິດຕາມກວດກາ ແລະ ເກັບກຳຂໍ້ມູນວຽກງານຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໄດ້ຈັດຂຶ້ນໃນວັນທີ 5 ກໍລະກົດ 2023 ຢູ່ຫ້ອງວ່າການເມືອງວຽງຄຳ ແຂວງວຽງຈັນ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ນາງ ຈັນທະຄອນ ສີອຳພອນ ຮອງປະທານສະພາປະຊາຊົນແຂວງວຽງຈັນ ແລະ ທ່ານ ນາງ ຂັນຄຳ ສຸດຊະນະທົງ ຫົວໜ້າຫ້ອງການສຶກສາ ແລະ ກິລາ ເມືອງວຽງຄຳ ທັງເປັນສະມາຊິກສະພາປະຊາຊົນແຂວງວຽງຈັນ ເຂດເລືອກຕັ້ງເມືອງວຽງຄຳ ຮັບຜິດຊອບວຽກງານວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າເມືອງວຽງຄຳ; ມີບັນດາຫົວໜ້າຫ້ອງການກຸ່ມວັດທະນະທຳ-ສັງຄົມທົ່ວເມືອງເຂົ້າຮ່ວມ.



ທ່ານ ນາງ ຈັນທະຄອນ ສີອຳພອນ ໄດ້ເຈາະຈີ້ມ ແລະ ໃຫ້ພາກສ່ວນກ່ຽວຂ້ອງຂອງເມືອງວຽງຄຳ ຕອບບັນດາຄຳເຈາະຈີ້ມ ກ່ຽວກັບໜ້າວຽກຕົວຈິງ, ຄວາມຮັບຜິດຊອບຂອງຫ້ອງການຕ່າງໆ ເຊັ່ນ: ວຽກງານສຶກສາທິການ ແລະ ກິລາ, ວຽກງານສາທາລະນະສຸກ, ວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ວຽກງານກະສິກຳ ແລະ ປ່າໄມ້ ແລະ ວຽກງານພາຍໃນ ແລະ ອື່ນໆ ແນໃສ່ເຮັດໃຫ້ການເຄື່ອນໄຫວຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ວຽກງານວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າຢູ່ເມືອງວຽງຄຳ ໄດ້ຮັບຜົນສຳເລັດໄປດ້ວຍດີ.



# ຮອງປະທານສະຫະພັນແມ່ຍິງແຂວງບໍ່ແກ້ວ ເນັ້ນ 7 ຂໍ້ຕໍ່ແມ່ຍິງ

(ສພຊ) ທ່ານ ນາງ ຈັນສອນ ວິງຄຳຈັນ ຮອງປະທານສະຫະພັນແມ່ຍິງແຂວງບໍ່ແກ້ວ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມສະຫຼຸບ, ຍ້ອງຍໍບຸກຄົນ 3 ດີໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີໄລຍະ I (2021-2022) ຂອງໜ່ວຍສະຫະພັນແມ່ຍິງສະພາປະຊາຊົນແຂວງບໍ່ແກ້ວ ເມື່ອວັນທີ 6 ກໍລະກົດ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງບໍ່ແກ້ວ ພາຍໃຕ້ການເປັນປະທານຂອງສະຫາຍ ນາງ ສຸກັນຍາ ຈັນສະແຫວງ ຫົວໜ້າໜ່ວຍສະຫະພັນແມ່ຍິງສະພາປະຊົນແຂວງບໍ່ແກ້ວ; ເຂົ້າຮ່ວມມີທ່ານ ບຸນພັດ ສີສົມບັດ ກຳມະການໜ່ວຍພັກ, ເລຂາທິການສະພາປະຊາຊົນແຂວງ ຜູ້ຊີ້ນຳວຽກການອົງການຈັດຕັ້ງມະຫາຊົນ; ມີບັນດາຄະນະໜ່ວຍ ແລະ ສະມາຊິກແມ່ຍິງ ແລະ ຜູ້ຕາງໜ້າອົງການຈັດຕັ້ງຊາວໜຸ່ມ, ກຳມະບານສະພາປະຊາຊົນແຂວງເຂົ້າຮ່ວມ.




ທ່ານ ນາງ ຈັນສອນ ວິງຄຳຈັນ ໄດ້ເນັ້ນໜັກໃຫ້ແມ່ຍິງເອົາໃຈໃສ່ໃນ 7 ຂໍ້ດັ່ງນີ້:

1. ຕ້ອງໄດ້ເອົາໃຈໃສ່ຄົ້ນຄ້ວາ, ເຊື່ອມຊຶມ ແລະ ກຳແໜ້ນພາລະບົດບາດ, ສິດ, ໜ້າທີ່ຂອງຕົນ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ ເພື່ອເປັນບ່ອນອີງໃນການແບ່ງຄວາມຮັບຜິດຊອບໃຫ້ບັນດາສະຫາຍລົງເລິກຊີ້ນຳແຕ່ລະວຽກ ເພື່ອເປັນບ່ອນອີງໃຫ້ບັນດາສະຫາຍໃນການເຄື່ອນໄຫວນຳພາ-ຊີ້ນຳວຽກງານສະຫະພັນແມ່ຍິງ.

2. ຖືເອົາວຽກງານການເມືອງ-ແນວຄິດເປັນກົກ ຕ້ອງເອົາໃຈໃສ່ສຶກສາອົບຮົມທາງດ້ານການເມືອງ-ແນວຄິດ, ເຮັດໃຫ້ສະມາຊິກຮັບຮູ້ເຊື່ອມຊຶມຢ່າງຖືກຕ້ອງຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ບັນດາສົນທິສັນຍາສາກົນຕ່າງໆ ກຳແໜ້ນພາລະບົດບາດສິດ-ໜ້າທີ່ຂອງສະມາຊິກສະຫະພັນແມ່ຍິງ, ເສີມຂະຫຍາຍຄຸນສົມບັດສິນທຳປະຕິວັດ ມີຄວາມເຊື່ອໝັ້ນ ແລະ ຈົງຮັກພັກດີຕໍ່ພັກ, ຕໍ່ຊາດ, ຮັກສາ ແລະ ຮູ້ເສີມຂະຫຍາຍມູນເຊື້ອອັນດີງາມຂອງອົງການຈັດຕັ້ງຂັ້ນຂອງຕົນສືບຕໍ່ໄປ.

3. ເອົາໃຈໃສ່ເຜີຍແຜ່ເຊື່ອມຊຶມເນື້ອໃນຄຳຂວັນ ແລະ ຂໍ້ແຂ່ງຂັນ 3 ດີ ຂອງສະຫະພັນແມ່ຍິງລາວ ໃຫ້ສະມາຊິກສະຫະພັນແມ່ຍິງພາຍໃນໜ່ວຍ ແລະ ເພດຊາຍພາຍໃນຂະແໜງການໜ່ວຍງານຢ່າງທົ່ວເຖິງ ເປັນຕົ້ນ: ພົນລະເມືອງດີ, ພັດທະນາດີ, ສ້າງຄອບຄົວດີ (ຢູ່ໃນພັດທະນາດີມີ ມີພັດທະນາຕົນເອງ, ພັດທະນາອົງການຈັດຕັ້ງສະຫະພັນແມ່ຍິງ ແລະ ພັດທະນາປະເທດຊາດ), ສຳລັບພົນລະເມືອງດີ ທຸກສະຫາຍກໍໄດ້ເປັນພົນລະເມືອງດີໝົດທຸກສະຫາຍ, ແຕ່ຢູ່ໃນຂໍ້ແຂ່ງຂັນໂຕນີ້ ພັດລວມມີແບບແຜນດຳລົງຊີວິດທີ່ດີ: ຄືການພົວພັນໃນຄອບຄົວ ແລະ ສັງຄົມ ໃຫ້ສອດຄ່ອງກັບຮີດຄອງປະເພນີອັນດີງາມຂອງຊາດ ແລະ ລະບຽບກົດໝາຍ, ມີຄວາມສາມັກຄີຮັກແພງ ໂອບເອື້ອອາລີເອື້ອເຟື້ອເພື່ອແຜ່ຊ່ວຍເຫຼືອເຊິ່ງກັນແລະກັນ ພ້ອມກັນກ້າວໜ້າ.

4. ປັບປຸງແບບແຜນວິທີເຮັດວຽກ, ວິທີນຳພາໃຫ້ສອດຄ່ອງກັບຂໍ້ກຳນົດ, ສອດຄ່ອງກັບຄວາມເປັນຈິງການເຄື່ອນໄຫວຂອງອົງການຈັດຕັ້ງຂັ້ນຂອງຕົນ ໃນນັ້ນ, ສິ່ງທີ່ສຳຄັນແມ່ນການນຳພາຕ້ອງຜ່ານການຂຶ້ນແຜນນຳເອົາທິດທາງແຜນການໃນຄັ້ງນີ້ ໄປຜັນຂະຫຍາຍເປັນແຜນການອັນລະອຽດແຕ່ລະໄລຍະມີການນຳພາຈັດຕັ້ງປະຕິບັດຕົວຈິງ, ມີການຕິດຕາມກວດກາສະພາບການນຳພາຂອງໜ່ວຍ, ປະສານສົມທົບລະຫວ່າງອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນທັງມີການລາຍງານຂໍຄຳເຫັນຈາກສາຍຕັ້ງ-ສາຍຂວາງຂອງຕົນເປັນປົກກະຕິ. ກວດກາຄືນສະພາບການຈັດຕັ້ງ, ຊຸກຍູ້ສະມາຊິກເປັນແບບຢ່າງທີ່ດີໃນການປະຕິບັດໜ້າທີ່ວິຊາສະເພາະ, ການປະຕິບັດມະຕິຄຳສັ່ງຂອງຂັ້ນເທິງ, ເຂົ້າຮ່ວມຂະບວນການຕ່າງໆ ພ້ອມທັງກຳແໜ້ນ ແລະ ສັງເກດຕີລາຄາໃຫ້ໄດ້ຂະບວນການເຄື່ອນໄຫວຂອງສະມາຊິກທີ່ມີອັນພົ້ນເດັ່ນ, ອັນທີ່ຍັງຄົງຄ້າງ ເພື່ອສືບຕໍ່ນຳພາ-ຊີ້ນຳ ແລະ ນຳສະເໜີຕໍ່ຄະນະພັກ-ອົງການປົກຄອງໃຫ້ການຊ່ວຍເຫຼືອກໍ່ສ້າງພະນັກງານເພດຍິງ ກໍຄືສະມາຊິກສະຫະພັນແມ່ຍິງ ຮັບປະກັນໃຫ້ສະມາຊິກໄດ້ຮັບການປົກປ້ອງທາງດ້ານສິດຜົນປະໂຫຍດອັນຊອບທຳ ແລະ ຖືກກົດໝາຍ ເຊິ່ງຕ້ອງຂໍຄຳຄິດຄຳເຫັນ, ທິດຊີ້ນຳຈາກຄະນະພັກຂັ້ນຂອງຕົນໃນການຈັດຕັ້ງປະຕິບັດວຽກງານ ແລະ ທີ່ສຳຄັນຄະນະໜ່ວຍສະຫະພັນແມ່ຍິງຕ້ອງໄດ້ມີແຜນດຳເນີນງານຂອງຕົນໃນແຕ່ລະປີ.

5. ສືບຕໍ່ເອົາວຽກງານດັ່ງກ່າວ ປິ່ນອ້ອມທຸກການເຄື່ອນໄຫວຂອງກົມກອງຮັກສາໄດ້ນາມມະຍົດ, ເປັນໜ່ວຍສະຫະພັນແມ່ຍິງ 3 ດີ ໄວ້ໃຫ້ໝັ້ນຄົງຕະຫຼອດໄປ, ຮັກສາໄດ້ມູນເຊື້ອອັນດີງາມ ແລະ ສືບຕໍ່ຊ່ວຍເຫຼືອກໍ່ສ້າງສະມາຊິກສະຫະພັນແມ່ຍິງທີ່ຍັງມີຄວາມຫຍຸ້ງຍາກໃຫ້ສາມາດຮັບຮອງເປັນສະມາຊິກສະຫະພັນແມ່ຍິງ 3 ດີ ຢ່າງຄົບຖ້ວນ ເຮັດໃຫ້ການເຄື່ອນໄຫວວຽກງານຂໍ້ແຂ່ງຂັນ 3 ດີ ປະກອບສ່ວນເຂົ້າໃນການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃນຕໍ່ໜ້າຢ່າງເປັນຂະບວນຟົດຟື້ນ ພ້ອມດຽວກັນນີ້, ຕ້ອງໄດ້ປັບປຸງຄືນບັນດານິຕິກຳທີ່ຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ເປັນຕົ້ນ: ປັບປຸງຄືນຄະນະກຳມະການຮັບຜິດຊອບຂໍ້ແຂ່ງຂັນ 3 ດີ ຂອງສະຫະພັນແມ່ຍິງໜ່ວຍ ສະພາປະຊາຊົນແຂວງ ໃນແທດເໝາະກັບຄວາມເປັນຈິງຂອງກົມກອງຕົນ.

6. ສຳລັບສະມາຊິກສະຫະພັນແມ່ຍິງ, ເອື້ອຍນ້ອງແມ່ຍິງ ໃນສະພາບເງື່ອນໄຂປັດຈຸບັນມີທັງສິ່ງທີ່ເອື້ອອຳນວຍ, ທ້າທາຍ ແລະ ເປັນອຸປະສັກຕໍ່ການພັດທະນາແມ່ຍິງໂດຍສະເພາະແມ່ນຕໍ່ກັບບັນຫາແມ່ຍິງແຕ່ງງານແບບຜິດກົດໝາຍ, ບັນຫາສາສະໜາ ບັນຫາຢາເສບຕິດ, ບັນຫາການເຊື່ອຖືແບບງົມງວາຍ, ການຫຼິ້ນກິນຟູມເຟືອຍ, ການນຸ່ງຖືທີ່ບໍ່ສອດຄ່ອງກັບວັດທະນາທຳຂອງແມ່ຍິງລາວ ສະນັ້ນ, ຕໍ່ກັບບັນຫາດັ່ງກ່າວນີ້ ສະມາຊິກສະຫະພັນແມ່ຍິງພວກເຮົາຕ້ອງໄດ້ເປັນເຈົ້າການໃນການສຶກສາອົບຮົມເປັນເຈົ້າການໃນການບຸກບືນພັດທະນາຕົນເອງຢ່າງຮອບດ້ານ, ເຝິກຝົນຫຼໍ່ຫຼອມຕົນເອງທາງດ້ານຄຸນສົມບັດສິນທຳປະຕິວັດຮ່ຳຮຽນເອົາແບບແຜນການດຳລົງຊີວິດທີ່ດີຂອງໝູ່ເພື່ອນ, ພະນັກງານອາວຸໂສ, ການນຳຂັ້ນຕ່າງໆດຳລົງຊີວິດທີ່ປອດໃສ. ພ້ອມກັນນັ້ນ, ກໍຕ້ອງສູ້ຊົນພັດທະນາຄວາມຮູ້ຄວາມສາມາດຂອງຕົນໃຫ້ສູງຂຶ້ນ, ສຶກສາຂໍ້ມູນໃໝ່ໆ ເພື່ອມາໝູນໃຊ້ເຂົ້າໃນວຽກງານວິຊາສະເພາະຂອງຕົນຢ່າງປະດິດສ້າງ, ມີວິທະຍາສາດ ແລະ ດ້ວຍຄວາມຮັບຜິດຊອບສູງ. ສ້າງໃຫ້ຕົນເອງມີຄວາມຊຳນິຊຳນານທາງດ້ານວິຊາສະເພາະ ສ້າງໃຫ້ການຈັດຕັ້ງຂອງພັກ-ລັດ ມີຄວາມໄວ້ເນື້ອເຊື່ອໃຈ ເຊິ່ງແມ່ນວຽກງານທີ່ສຳຄັນ ແລະ ຕອບສະໜອງໃຫ້ແກ່ຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່.

7. ເພີ່ມທະວີຄວາມສາມັກຄີໃນຖັນແຖວສະມາຊິກໃຫ້ແໜ້ນແຟ້ນກ່ວາເກົ່າ ເອົາໃຈໃສ່ເຂົ້າຮ່ວມດຳເນີນຊີວິດປະຈຳເດືອນ, ເສຍເງິນບຳລຸງເປັນປົກກະຕິ ແລະ ຊ່ວຍເຫຼືອກໍ່ສ້າງເຊິ່ງກັນ ແລະ ກັນ, ພ້ອມກັນຕ້ານ ແລະ ສະກັດກັ້ນແນວຄິດຄັບແຄບ ເຫັນແກ່ຕົນເອງ, ແນວຄິດຢ້ານລົ້ນຢ້ານເຫຼືອ, ແນວຄິດບໍ່ຢາກກໍ່ສ້າງເຊິ່ງກັນ ແລະ ກັນ ແລະ ອື່ນໆ ແນໃສ່ປັບປຸງການຈັດຕັ້ງໃຫ້ເຕີບໃຫຍ່ເຂັ້ມແຂງເລື້ອຍໆໄປ.

**(ນາງ ຂັນຖະໜອມ ແກ້ວມະນີ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

73,18% ບໍ່ເຫັນດີ 18% ບໍ່ອອກສຽງ 3,62%; ກົດໝາຍວ່າດ້ວຍການຈັດຫາງານ (ສ້າງໃໝ່) ຄະແນນສຽງເຫັນດີ 93% ບໍ່ເຫັນດີ 6,99%; ພ້ອມນັ້ນ, ໄດ້ມີການລົງມະຕິສະເພາະມາດຕາ 48 ກອງທຶນການຈັດຫາງານ ຂອງກົດໝາຍວ່າດ້ວຍການຈັດຫາງານ (ສ້າງໃໝ່) ຄະແນນສຽງເຫັນດີ 36,17% ບໍ່ເຫັນດີ 61,7% ບໍ່ອອກສຽງ 2,17%; ກົດໝາຍວ່າດ້ວຍວຽກສາທາລະນະສຸກ (ສ້າງໃໝ່) ຄະແນນສຽງເຫັນດີ 95,1% ບໍ່ເຫັນດີ 2,79% ບໍ່ອອກສຽງ 2,09%; ກົດໝາຍວ່າດ້ວຍທະນາຄານທຸລະກິດ (ປັບປຸງ) ຄະແນນສຽງເຫັນດີ 93% ບໍ່ເຫັນດີ 6,99%; ກົດໝາຍວ່າດ້ວຍສານທະຫານ (ປັບປຸງ) ຄະແນນສຽງເຫັນດີ 93,75% ບໍ່ເຫັນດີ 6,25%; ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ (ປັບປຸງ) ຄະແນນສຽງເຫັນດີ 95,13% ບໍ່ເຫັນດີ 4,16% ບໍ່ອອກສຽງ 0,69%; ກົດໝາຍວ່າດ້ວຍສັດປ່າ (ປັບປຸງ) ຄະແນນສຽງເຫັນດີ 93,79% ບໍ່ເຫັນດີ 4,82% ບໍ່ອອກສຽງ 1,37%; ໄດ້ມີການລົງມະຕິສະເພາະ ມາດຕາ 18 ການຄ້າຂາຍສັດປ່າ ຄະແນນສຽງເຫັນດີ 29,16% ບໍ່ເຫັນດີ 70,13% ບໍ່ອອກສຽງ 0,69%; ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ປັບປຸງ) ຄະແນນສຽງເຫັນດີ 90,14% ບໍ່ເຫັນດີ 9,85%; ກົດໝາຍວ່າດ້ວຍການພິມຈຳໜ່າຍ (ປັບປຸງ) ຄະແນນສຽງເຫັນດີ 96,45% ບໍ່ເຫັນດີ 3,54%.

ພ້ອມນັ້ນ, ກອງປະຊຸມຍັງໄດ້ພິຈາລະນາແລະຮັບຮອງເອົາຮ່າງມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 7 ສະບັບ ຄື: ຮ່າງມະຕິວ່າດ້ວຍການຮັບຮອງເອົາບົດລາຍງານ ກ່ຽວກັບຮ່າງຍຸດທະສາດພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດ ຮອດປີ 2040 ດ້ວຍຄະແນນສຽງເຫັນດີ 91,89% ບໍ່ເຫັນດີ 7,43% ບໍ່ອອກສຽງ 0,67%; ຮ່າງມະຕິວ່າດ້ວຍການຮັບຮອງເອົາບົດລາຍງານ ກ່ຽວກັບຮ່າງຍຸດທະສາດການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030 ດ້ວຍຄະແນນສຽງເຫັນດີ 97,26% ບໍ່ເຫັນດີ 2,73%; ຮ່າງມະຕິວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ດ້ວຍຄະແນນສຽງເຫັນດີ 98% ບໍ່ເຫັນດີ 2%; ຮ່າງມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ໄລຍະ 2 ກອງປະຊຸມທີ່ຜ່ານມາ ແລະ ທິດທາງແຜນການ 6 ເດືອນ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ດ້ວຍຄະແນນສຽງເຫັນດີ 99,33% ບໍ່ເຫັນດີ 0,66%; ຮ່າງມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ທິດທາງການລົງທຶນຂອງລັດ ປະຈຳປີ 2024 ດ້ວຍຄະແນນສຽງເຫັນດີ 99,32% ບໍ່ເຫັນດີ 0,67%; ຮ່າງມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023 ດ້ວຍຄະແນນສຽງເຫັນດີ 100%.

ກອງປະຊຸມຍັງໄດ້ພິຈາລະນາ ແລະ ລົງຄະແນນສຽງຮັບຮອງເອົາການແຕ່ງຕັ້ງສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ ດ້ວຍຄະແນນສຽງເຫັນດີ 98% ບໍ່ເຫັນດີ 2% ປະກອບມີ 4 ທ່ານຄື: ທ່ານ ປອ. ອານົງ ຍອຍສາຍຄຳ ຮອງປະທານສານປະຊາຊົນສູງສຸດ, ທ່ານ ພັອ. ສິງທອງ ຄຳປະສິດ ປະທານສານທະຫານຂັ້ນສູງ, ທ່ານ ທອງຄຳ ສະຫວັນເພັດ ຫົວໜ້າຄະນະສານປົກຄອງ ແລະ ທ່ານ ແສງອາທິດ ຍົດລືໄຊ ຫົວໜ້າຄະນະສານແພ່ງ.

ວາລະພິທີປິດ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຂຶ້ນກ່າວສູນທອນພົດປິດກອງປະຊຸມຢ່າງເປັນທາງການເຊິ່ງເນື້ອໃນຂອງສູນທອນພົດໄດ້ຍົກໃຫ້ເຫັນເຖິງຜົນສຳເລັດ, ຄວາມເອົາໃຈໃສ່ ແລະ ການມີສ່ວນຮ່ວມຢ່າງຕັ້ງໜ້າຂອງສະພາແຫ່ງຊາດ, ຄະນະລັດຖະບານ, ອົງການທີ່ກ່ຽວຂ້ອງກໍຄືບັນດາ ສສຊ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ໃນການຈັດກອງປະຊຸມຄັ້ງນີ້ ເຮັດໃຫ້ກອງປະຊຸມປິດລົງໄດ້ດ້ວຍຜົນສຳເລັດອັນຈົບງາມຕາມລະດັບຄາດໝາຍທີ່ວາງໄວ້.

(ນາງ ປາກາລັກ ພົມມີໄຊ)




# ກົດໝາຍ ວ່າດ້ວຍວິຈິດສິນ

ຕໍ່ຈາກສະບັບກ່ອນ

**ພາກທີ IV**
**ການຄຸ້ມຄອງ, ການປົກປັກຮັກສາ, ການອະນຸລັກ ວິຈິດສິນ**
**ໝວດທີ 1**
**ການຄຸ້ມຄອງວິຈິດສິນ**

**ມາດຕາ 27 ການຄຸ້ມຄອງ**

ລັດ ຄຸ້ມຄອງວິຈິດສິນ ຢ່າງ ລວມສູນ ແລະ ເປັນລະບົບໃນຂອບເຂດທົ່ວປະເທດ ເພື່ອໃຫ້ຜົນງານດ້ານວິຈິດສິນ ໄດ້ຮັບການປົກປ້ອງ ຕາມກົດໝາຍ.

ການຄຸ້ມຄອງວິຈິດສິນ ດຳເນີນດ້ວຍ ການຂຶ້ນທະບຽນ, ການຈຳລອງແບບ, ການສ້າງໃໝ່, ການຄົ້ນຄວ້າ, ວິໄຈ, ການສົ່ງອອກເພື່ອການວິໄຈ ແລະ ການວາງສະແດງ, ການນຳເຂົ້າ, ການໂຄສະນາການເຜີຍແຜ່ ຫຼື ຈຳໜ່າຍ, ການໂອນ, ການຊື້ ຂາຍ, ການເຊົ່າ ແລະ ການສືບທອດ.

ກຳມະສິດ ແລະ ລິຂະສິດ ຕໍ່ວິຈິດສິນທີ່ເປັນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຢູ່ພາຍໃນປະເທດ ໄດ້ຮັບການຄຸ້ມຄອງ ແລະ ປົກປ້ອງຈາກລັດ ຕາມກົດໝາຍ.

**ມາດຕາ 28 ການຂຶ້ນທະບຽນ**

ຜົນງານດ້ານວິຈິດສິນ ທີ່ຢູ່ໃນການຄອບຄອງຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດຂຶ້ນທະບຽນນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ຂະແໜງການຖະແຫຼງຂ່າວ, ວັດທະນະທຳແລະທ່ອງທ່ຽວດຳເນີນການຊອກຄົ້ນ, ເກັບກຳຜົນງານດ້ານວິຈິດສິນປະເພດຕ່າງໆ ເພື່ອປະເມີນຄຸນຄ່າ, ຈັດລະດັບ ແລະ ຂຶ້ນທະບຽນ ພ້ອມກັນນັ້ນກໍຊຸກຍູ້ໃຫ້ຜູ້ຄອບຄອງຜົນງານດ້ານວິຈິດສິນ ສະເໜີຂຶ້ນທະບຽນ ຊຶ່ງພາຍຫຼັງໄດ້ຂຶ້ນທະບຽນແລ້ວ ຜົນງານດັ່ງກ່າວຖືກຮັບຮອງ ເປັນຜົນງານທີ່ຕ້ອງໄດ້ຮັບການປົກປ້ອງ, ປົກປັກຮັກສາ ແລະ ອະນຸລັກໃຫ້ຍືນຍົງ.

ຜົນງານດ້ານວິຈິດສິນ ທີ່ຢູ່ໃນການຄອບຄອງຂອງສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ ໃຫ້ຂຶ້ນທະບຽນນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ຜົນງານດ້ານວິຈິດສິນ ທີ່ເປັນສົມບັດມີ່ງເມືອງ ໃຫ້ຂຶ້ນທະບຽນນຳກະຊວງຖະແຫຼງຂ່າວ, ວັດທະນະ ທຳ ແລະ ທ່ອງທ່ຽວ, ພາຍຫຼັງຂຶ້ນທະບຽນແລ້ວ ຜົນງານດັ່ງກ່າວຖືກຮັບຮູ້ ເປັນຜົນງານດ້ານວິຈິດສິນລະດັບຊາດ ພ້ອມທັງຮັບຮູ້ສິດຄອບຄອງ.

ການຂຶ້ນທະບຽນ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຍື່ນຄຳຮ້ອງຂໍຂຶ້ນທະບຽນ;
2. ການພິຈາລະນາການຂຶ້ນທະບຽນ;
3. ການເກັບຮັກສາເອກະສານຂຶ້ນທະບຽນ;
4. ການປ່ຽນແປງ, ການລຶບລ້າງ ແລະ ການຄັດຄ້ານ ການຂຶ້ນທະບຽນ.

**ມາດຕາ 29 ການຍື່ນຄຳຮ້ອງຂໍຂຶ້ນທະບຽນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍຂຶ້ນທະບຽນຜົນງານດ້ານວິຈິດສິນ ຕ້ອງຍື່ນຄຳຮ້ອງຕໍ່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ໂດຍຜ່ານຫ້ອງການ ຖະແຫຼງຂ່າວ, ວັດທະນະທຳແລະທ່ອງທ່ຽວເມືອງ, ເທດສະບານ, ນະຄອນ ບ່ອນຕົນອາໄສຢູ່ ຫຼື ບ່ອນທີ່ຜົນງານດ້ານວິຈິດສິນຕັ້ງຢູ່.

ອ່ານຕໍ່ສະບັບໜ້າ

# ຕົ້ນປີ 2023 ໄດ້ເຊັນສັນຍາສຳປະທານບໍ່ແຮ່ໃນຮູບແບບທົດລອງ 89 ບໍລິສັດ

ຕໍ່ຈາກສະບັບກ່ອນ...

2. ວຽກຈຸດສຸມການສ້າງຄວາມເຂັ້ມແຂງດ້ານການເກັບລາຍຮັບງົບປະມານ: ລາຍຮັບທັງໝົດ ນັບແຕ່ປີ 2021 ຫາ 5 ເດືອນຕົ້ນປີ 2023 ປະຕິບັດໄດ້ 77.593,69 ຕື້ກີບ ເທົ່າກັບ 43,2% ຂອງແຜນການ 5 ປີ (ລາຍຮັບທັງໝົດແຜນການ 5 ປີ 179.500 ຕື້ກີບ), ໃນນັ້ນ ລາຍຮັບພາຍໃນປະຕິບັດໄດ້ 71.074,80 ຕື້ກີບ, ເທົ່າກັບ 42,6% ຂອງແຜນການ 5 ປີ (ລາຍຮັບພາຍໃນໃນແຜນ 5 ປີ 166.753 ຕື້ກີບ);

3. ວຽກຈຸດສຸມການສົ່ງເສີມການປະຢັດ, ຕ້ານການຟຸມເຟືອຍ, ຍົກສູງປະສິດທິຜົນການລົງທຶນ-ລາຍຈ່າຍ ງົບປະມານ ແລະ ການແກ້ໄຂໜີ້ສິນພາຍໃນ ແລະ ຕ່າງປະທດ: ໄດ້ເອົາໃຈໃສ່ປະຕິບັດດຳລັດ ເລກທີ 205/ລບ ໂດຍໄດ້ຈັດລຽງບູລິມະສິດແຕ່ລະປະເພດລາຍຈ່າຍ ເພື່ອຮັບປະກັນການເບີກຈ່າຍສຳເລັດທັນຕາມກຳນົດເວລາ, ພ້ອມກັນນັ້ນໄດ້ມີການຄຸ້ມຄອງການປະຕິບັດລາຍຈ່າຍຢ່າງຮັດກຸມ ແລະ ປະຢັດ ໂດຍສະເພາະຈຳກັດລາຍຈ່າຍບໍລິຫານ, ຫຼຸດຜ່ອນຈຳນວນໂຄຕ້າລັດຖະກອນໃໝ່ (ຈາກ 2800 ຄົນໃນປີ 2021ແລະ 2022 ມາເປັນ800ຄົນໃນປີ2023); ແນ່ໃສ່ບົນພື້ນຖານຄວາມສົມສ່ວນລະຫວ່າງຄວາມອາດສາມາດຈັດເກັບລາຍຮັບຕົວຈິງ ແລະ ການປະຕິບັດລາຍຈ່າຍ ໂດຍເຮັດໃຫ້ລາຍຮັບພາຍໃນກຸ້ມລາຍຈ່າຍພາຍໃນ ແລະ ມີສ່ວນສະສົມໄວ້ຊຳລະໜີ້ສິນ ແລະ ຮັກສາການຂາດດຸນໃຫ້ຢູ່ໃນລະດັບທີ່ຄວບຄຸມໄດ້;

- ເພື່ອຍົກສູງປະສິດທິຜົນລາຍຈ່າຍງົບປະມານ ໄດ້ປັບປຸງກົນໄກການປະຕິບັດລາຍຈ່າຍດ້ວຍການເຮັດທົດລອງມອບຄວາມຮັບຜິດຊອບໃຫ້ຜູ້ສັ່ງການຫລາຍຂຶ້ນ ເຊິ່ງກະຊວງການເງິນຈະຫັນໄປຄຸ້ມຄອງວຽກງານມະ ຫາພາກ ເພື່ອຫຼຸດຜ່ອນຂັ້ນຕອນອະນຸມັດ ແລະ ລົງເລີກກວດກາຫຼັງຈ່າຍ, ພ້ອມນັ້ນໄດ້ຫຼຸດການອະນຸມັດລາຍຈ່າຍ ເງິນເດືອນ, ເງິນນະໂຍບາຍພະນັກງານ-ລັດຖະກອນຈາກຈາຍເປັນງວດມາເປັນອະນຸມັດໝົດປີ ແລະ ຈັດຕັ້ງປະຕິບັດໄດ້ແລ້ວ 39 ກະຊວງ ອົງການຂັ້ນສູນກາງ;

- ໄດ້ຈັດຕັ້ງປະຕິບັດດຳລັດວ່າດ້ວຍ ລົດຂອງລັດສະບັບເລກທີ 599/ລບ ໂດຍກວດກາຄືນບັນຊີສະຖິຕິລົດຂອງລັດຢູ່



40 ພາກສ່ວນໃນຂັ້ນສູນກາງ ເຊິ່ງມີລົດທັງໝົດ 39.754 ຄັນ, ໄດ້ປ້ອນຂໍ້ມູນເຂົ້າໃນລະບົບຄຸ້ມຄອງຂໍ້ມູນຊັບສິນແຫ່ງລັດ (AMIS) ແລະ ຕິດແຜ່ນກາໝາຍ ແລະ QR code, ຂັ້ນທ້ອງຖິ່ນສຳເລັດການກວດກາຢູ່ 14 ແຂວງ; ສຳເລັດການຖອນລົດເກົ່າທີ່ໃຊ້ການບໍ່ໄດ້ຈາກ ກະຊວງຕ່າງໆຈຳນວນ 63 ຄັນ, ໃນນີ້: ລົດໃຫ່ຍ 52 ຄັນ ເພື່ອສະສາງດ້ວຍການປະມູນຂາຍອອກແບບເປີດກວ້າງ;

- ສຸມໃສ່ປະຕິຮູບ, ປັບປຸງລັດວິສາຫະກິດຍຸດທະສາດແຜນການສືບຕໍ່ດຳເນີນການປະຕິຮູບລັດວິສາຫະກິດ ປະຈຳປີ 2023ຕົວຈິງມີ19ຫົວໜ່ວຍ, ໃນນັ້ນ: 14 ຫົວໜ່ວຍ ຈະຮັກສາການຖືຮຸ້ນ 100% ຫຼື ຖືຮຸ້ນໃນອັດ ຕາສ່ວນໃຫຍ່; 1 ຫົວໜ່ວຍ ຈະຂາຍຮຸ້ນອອກ ແລະ 4 ຫົວໜ່ວຍ ຈະຍຸບເລີກ ຕາມແຜນທີ່ໄດ້ກຳນົດໄວ້ ແລະ ສາມາດສັງລວມຄວາມຄືບໜ້າຂອງການປັບປຸງ 6 ລັດວິສາຫະກິດຍຸດທະສາດ;

- ການແກ້ໄຂໜີ້ສິນສາທາລະນະ ໄດ້ນຳໃຊ້ຫລາຍຮູບແບບໃນການຊຳລະໜີ້ສິນ ເຊັ່ນ: ໄດ້ອອກພັນທະບັດ ດຸນດ່ຽງງົບປະມານຂອງລັດຖະບານຜ່ານຕະຫລາດຫລັກຊັບລາວ, ຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ ເພື່ອຜ່ານສະພາແຫ່ງຊາດຮັບຮອງໃນທ້າຍປີ 2023; ພ້ອມນັ້ນ, ຄົ້ນຄວ້າຈັດຕັ້ງປະຕິບັດໂຄງການສາຍສົ່ງແຫ່ງຊາດ EDL-T ເພື່ອແກ້ສະພາບຄ່ອງ ແລະ ບັນຫາໜີ້ສິນຂອງລັດຖະບານ; ການດັດແກ້ອັດຕາດອກເບ້ຍຂອງສັນຍາເງິນກູ້ຢືມ ແລະ ພັນທະບັດຕ່າງປະເທດຈາກອັດຕາດອກເບ້ຍລອຍໂຕ Lbor ເປັນ Fixed rate ຫຼື ອັດຕາດອກເບ້ຍຄົງທີ່;

- ການຄຸ້ມຄອງ ແລະ ແກ້ໄຂໜີ້ສິນໂຄງການລົງທຶນລັດ (ໜີ້ສິນພາຍໃນ): ແມ່ນສຸມໃສ່ການແກ້ໄຂໜີ້ໂດຍຈັດສັນໃນຮ່ອງປົກກະຕິໃນແຕ່ລະປີ ແລະ ດ້ວຍການຊຳລະໜີ້ສິນຮູບແບບອວ່າຍໜີ້ສາມແຈ, ດ້ວຍການອອກພັນ ທະບັດລັດຖະບານໃນແຕ່ລະໄລຍະ, ປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນໃນການຫັກລົບມູນຄ່າອອກຈາກສາລະບານງົບປະມານ ຈຳນວນ 263 ໂຄງການ, ລວມມູນຄ່າ 1.358,62 ຕື້ກີບ ແລະ 104.891,81 ໂດລາ ແຕ່ສາມາດຫັກລົບມູນຄ່າອອກຈາກສາລະບານງົບປະມານ ໄດ້ຈຳນວນ 139 ໂຄງການ, ມູນຄ່າ 947,97 ຕື້ກີບ. ໄດ້ປະສານສົມທົບ ແລະ ຊຸກຍູ້ບັນດາຂະແໜງການ ແລະ ທ້ອງຖິ່ນ ເພື່ອປະຕິບັດຕາມຂໍ້ຕົກລົງ ສະບັບເລກທີ 2415/ກຜທ, ລົງວັນທີ 23 ທັນວາ 2021 ວ່າດ້ວຍການກຳນົດຫຼັກການ ແລະ ວິທີການເຈລະຈາຕໍ່ລອງມູນຄ່າໂຄງການລົງທຶນຂອງລັດ ທີ່ມູນຄ່າສູງເກີນ 20%. ໃນປີ 2021 ໄດ້ແກ້ໄຂໜີ້ສິນລົງທຶນຂອງລັດດ້ວຍງົບປະມານປົກກະຕິ ຈຳນວນ 148,65 ຕື້ກີບ.

4. ວຽກຈຸດສຸມການສ້າງສະຖຽນລະພາບດ້ານເງິນຕາ: ສຸມໃສ່ຄົ້ນຄວ້າຜັນຂະຫຍາຍນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ໂດຍທະນາຄານຈະອອກນະໂຍບາຍສິນເຊື່ອຖົມຂຸມດອກເບ້ຍ ເພື່ອສ້າງເງື່ອນໄຂໃຫ້ຫົວໜ່ວຍ ວສກ ເຂົ້າເຖິງແຫຼ່ງທຶນໄດ້ໃນອັດຕາທີ່ເໝາະສົມ ແລະ ລັດຖະບານຈະພິຈາລະນາອຸດໜູນອັດຕາດອກເບ້ຍ ແລະ ນະໂຍບາຍສິນເຊື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ເພື່ອໃຫ້ ວສກ ເຂົ້າຫາແຫຼ່ງທຶນຂອງ ທຫລ ໂດຍຜ່ານ ທະນາຄານທຸລະກິດ; ໃນໄລຍະ 2020 ຫາ ເດືອນ ມີນາ 2023 ທະນາຄານແຫ່ງ ສປປ ລາວ ໄດ້ສະໜອງທຶນໃຫ້ກອງທຶນສົ່ງເສີມ SME ຈຳນວນ 500 ຕື້ກີບ (ປີ 2023 ອະນຸມັດ 100 ຕື້ກີບ ຢູ່ໃນຂັ້ນຕອນເຊັນສັນຍາ), ໃນນັ້ນ ສະໜອງໃຫ້ທະນາຄານທຸລະກິດ 474 ຕື້ກີບ ແລະ ທະນາຄານທຸລະກິດໄດ້ປ່ອຍກູ້ໃຫ້ລູກຄ້າໄປແລ້ວ 391,65 ຕື້ກີບ ເທົ່າກັບ 82,63% ຂອງທຶນທັງໝົດທີ່ໄດ້ຮັບ. ນອກນັ້ນ, ຍັງມີກອງທຶນສົ່ງເສີມການເຂົ້າເຖິງ ແຫຼ່ງທຶນໃນ ສປປລາວ (LAFF): ເພື່ອຊ່ອຍເຫຼືອ ວສກ ໃນຊົນນະບົດ ເຊິ່ງໃນເດືອນພຶດສະພາ ປີ 2023 ມີການປ່ອຍກູ້ທັງໝົດຈຳນວນ 30,5 ຕື້ກີບ ໂດຍປ່ອຍຜ່ານຫຼາຍທະນາຄານທຸລະກິດ ແລະ ມາຮອດວັນທີ 25 ພຶດສະພາ 2023 ມີຍອດເຫຼືອຕົ້ນທຶນ ທັງໝົດຈຳນວນ 119,25 ຕື້ກີບ;

-ແກ້ໄຂສະພາບຄ່າເງິນກີບ, ຄັງສຳຮອງເງິນຕາຕ່າງປະເທດ ແລະ ຄວບຄຸມອັດຕາເງິນເຟີ້ ໂດຍໄດ້ປັບເພີ່ມອັດຕາດອກເບ້ຍພື້ນຖານຂອງ ທຫລ ແລະ ເງິນແຮຝາກບັງຄັບ;

- ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມທິດທາງຍືດຍຸ່ນຫຼາຍຂຶ້ນ, ປັບປຸງການຄຸ້ມຄອງຮ້ານແລກປ່ຽນ ໃຫ້ຮັດກຸມຂຶ້ນ, ສະໜອງເງິນຕາຕ່າງປະເທດສຳລັບການນຳເຂົ້ານ້ຳມັນເຊື້ອໄຟຢ່າງເປັນປົກກະຕິ ແລະ ອື່ນໆ.

6. ວຽກຈຸດສຸມການຍົກສູງປະສິດທິພາບການຄຸ້ມຄອງລັດດ້ວຍກົດໝາຍ: ມາຮອດປັດຈຸບັນ ໄດ້ຮັບຮອງກົດໝາຍທີ່ຕິດພັນກັບ 2 ວາລະແຫ່ງຊາດ ມີທັງໝົດ 15 ສະບັບ, ໃນນັ້ນ 11 ສະບັບ ຕິດພັນກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໂດຍສະເພາະນິຕິກຳ ແລະ ນິຕິກຳກຸ່ມກົດໝາຍ ໃນຂະແໜງການເງິນ; ໃນໄລຍະ 5 ເດືອນຕົ້ນປີ, ລັດຖະບານໄດ້ອອກດຳລັດ ຈຳນວນ 3 ສະບັບ ແລະ ຂໍ້ຕົກລົງ 12 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;

ເຖິງຢ່າງກໍຕາມ, ຍັງມີກົດໝາຍໃນຂະແໜງເສດຖະກິດຈຳນວນໜຶ່ງ ຍັງສືບຕໍ່ປັບປຸງຕື່ມ ເຊັ່ນ: ກົດໝາຍ ສົ່ງເສີມການລົງທຶນ, ກົດໝາຍອາກອນທີ່ດິນ, ກົດໝາຍອາກອນສິ່ງແວດລ້ອມ ແລະ ອື່ນໆ ໃນແຕ່ລະຂົງເຂດການຜະລິດ. ສຳລັບວຽກງານການຄຸ້ມຄອງເງິນຕາຕ່າງປະເທດ ໄດ້ຜັນຂະຫຍາຍອອກເປັນຫຼາຍນິຕິກຳລຸ່ມກົດໝາຍ ເຊັ່ນ: ຄົ້ນຄວ້າອອກນິຕິກຳຂັ້ນ ທຫລ ໃນການຄຸ້ມຄອງເງິນຕາຕ່າງປະເທດ ຕິດພັນກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ; ສ້າງບັນດາຄູ່ມື, ແບບຟອມ ແລະ ການຝຶກອົບຮົມໃຫ້ແກ່ ທທກ ທີ່ໃຫ້ບໍລິການທຸລະກິດຊຳລະ ແລະ ຮັບຊຳລະຂອງຜູ້ນຳເຂົ້າ-ສົ່ງອອກ ເພື່ອປະຕິບັດບັນດາຂໍ້ກຳນົດຕ່າງໆໃນນິຕິກຳ;

ນອກຈາກນີ້, ລັດຖະບານ ໄດ້ປັບປຸງກົນໄກການຄຸ້ມຄອງການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ໃຫ້ສອດຄ່ອງກວ່າເກົ່າ ໂດຍໄດ້ລົບລ້າງຄະນະຄຸ້ມຄອງການລົງທຶນຂອງພາຍໃນແລະຕ່າງປະເທດຂັ້ນສູນກາງ ແລະ ທ້ອງຖິ່ນ ທັງປັບປຸງດຳລັດ 02, 03 ທີ່ພົວພັນເຖິງການສ້າງເງື່ອນໄຂໃຫ້ແກ່ການລົງທຶນຂອງພາກສ່ວນຕ່າງໆ ໃຫ້ສະດວກວ່ອງໄວຂຶ້ນກວ່າເກົ່າ.




# ປັນຍາຈາກຄຳທວາຍ

**# ດັ້ນກົບເມກ**

ກິດຈະກຳຍາມມີບຸນ; ຍາມເຕົ້າໂຮມຫຼິ້ນກາງເດີ່ນວັດ ຫຼື ໃນສາລາວັດ ຫຼື ວ່າຕາມພິທີກຳງານສົບ; ງັນເຮືອນດີ ຄົນລາວບູຮານ ນອກຈາກຟັງໝໍລຳ; ຟັງອ່ານໜັງສືຈາກທິດຈານ ນັກປາດຊາວບ້ານແລ້ວ ກໍຍັງມີກິດຈະກຳທີ່ທັງຜູ້ເຖົ້າ-ກັບຫຼານ ຫຼື ບ່າວ-ສາວ ມັກນຳມາຫຼິ້ນ ຄືການທວາຍ ເຊິ່ງມັນເປັນການໃຊ້ສະຕິປັນຍາແກ້ບັນຫາທີ່ຖືກຖາມຂະນະດຽວກັນ ຜູ້ເຂົ້າຮ່ວມທວາຍຍັງຈະຕ້ອງເປັນຄົນທີ່ມັກສະແຫວງຫາ ຄົ້ນຄວ້າອ່ານໜັງສື; ຟັງຄົນເຖົ້າເລົ່ານິທານ ເພື່ອສະສົມຄວາມຮູ້ປັນຍາໄວ້ໃຊ້ໃນສະໜາມທວາຍ.

ກິດຈະກຳໃຊ້ປັນຍາ-ໃຊ້ຄວາມຄິດ ນອກຈາກເວົ້າເປັນຜະຫຍາ ກໍຍັງມີຄຳທວາຍຄຽງຄູ່ກັນມາ. ທ່ານ ຄຳພໍ ພອງສະບາ (ພໍ.ພອງສະບາ) ໄດ້ໃຫ້ທັດສະນະວ່າ: ຄຳທວາຍ ແມ່ນພູມປັນຍາຂອງຊາວບ້ານທີ່ປະດິດແຕ່ງຂຶ້ນ, ຄຳທວາຍແມ່ນສ່ອງແສງວິຖີຊີວິດຈິງ ເປັນວັດທະນະທຳ-ສັງຄົມຂອງລາວ ເພາະຄຳທວາຍສ່ວນໃຫຍ່ທີ່ນຳມາທວາຍກັນ ແມ່ນເວົ້າເຖິງສັດ; ເຄື່ອງໃຊ້ດຳລົງຊີວິດ; ພືກສາຊາດ ຄຳທວາຍແມ່ນການເຝິກສະໝອງ-ລອງປັນຍາ ເພື່ອສ້າງປັນຍາກາດມ່ວນຊື່ນ; ລັກສະນະຄຳທວາຍມີທັງເວົ້າໂຍກ; ເວົ້າສິກກະປົກ; ເວົ້າອຸປະມາອຸປະໄມ; ເວົ້າປີ້ນຄວາມ; ເວົ້າປິດສະໜາເຊື່ອງຊ້ອນ ແລະ ຈຸດພິເສດໜຶ່ງຂອງຄຳທວາຍເວລາລົງທ້າຍຈະຖາມວ່າ: ແມ່ນຫຍັງ?

ຍົກຕົວຢ່າງ: ລາຍໆຄືກັບແກ້ ແປແປຄືປາປ່ານ ປາລິບ້ານເຈົ້າແປເວົ້າວ່າແມ່ນຫຍັງ? ຄຳຕອບຄື ໜັງສືຜູກໃບລານ ແລະ ອີກລັກສະນະໜຶ່ງຂອງຄຳທວາຍ ອາດຖາມຍາວແຕ່ຕອບສັ້ນ ຫຼື ບາງຄຳທວາຍສັ້ນແຕ່ຕອບຍາວກໍມີ; ຍົກຕົວຢ່າງຄຳທວາຍຍາວຕອບສັ້ນ ກົກມັນທໍ່ລຳທຽນ ໃບມັນທໍ່ດ້ຽງທໍ່ບຽນ ໝາກມັນ ລຽນຊາບລາບ ແມ່ນຫຍັງ? ຄຳຕອບຄື: ບົວ.

ຜູ້ຂຽນເຫັນວ່າ: ກິດຈະກຳທາງປັນຍາເຊັ່ນ ຄຳທວາຍ-ຄຳຜະຫຍານັ້ນ ຄວນອານຸຮັກ, ຟື້ນຟູສົ່ງເສີມໃຫ້ແກ່ເຍົາວະຊົນໄດ້ຮຽນຮູ້ໄດ້ສຶກສາພູມປັນຍາລາວ ເພາະມັນຍັງຕິດພັນກັບວິຖີຊີວິດ-ວັດທະນະທຳຂອງຊາດທີ່ເປັນເອກະລັກທາງປັນຍາແບບໜຶ່ງ ບໍ່ຄວນຖືເບົາປ່ອຍປະເພື່ອບໍ່ໃຫ້ລືມຮາກເຫງົ້າທີ່ມາຂອງຕົນເອງ!

# ສະຫະພັນແມ່ຍິງລາວ

**ໂດຍ: ຕົ້ນແປກ**

ເນື່ອງໃນໂອກາດ ສ້າງຕັ້ງວັນແມ່ຍິງລາວ ຄົບຮອບ 68 ປີ (20/7/1955-20/7/2023) ທີ່ຈະມາເຖິງນີ້, ຈະຂໍນຳສະເໜີກ່ຽວກັບທີ່ຕັ້ງ, ພາລະບົດບາດ ແລະ ໜ້າທີ່ ຂອງສະຫະພັນແມ່ຍິງລາວ ເພື່ອເປັນການຂໍ່ານັບຮັບຕ້ອນຢ່າງສຸດໃຈຕໍ່ວັນດັ່ງກ່າວ.

ສະຫະພັນແມ່ຍິງລາວ ແມ່ນອົງການຈັດຕັ້ງມະຫາຊົນໃນລະບົບການເມືອງຂອງລະບອບປະຊາທິປະໄຕ ປະຊາຊົນລາວ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ມີລະບົບສາຍໄຍການພົວພັນແຕ່ສູນກາງຮອດທ້ອງຖິ່ນ, ມີຖານະບົດບາດທຽບເທົ່າກັບອົງການຈັດຕັ້ງຂອງລັດ ແລະ ອົງການຈັດຕັ້ງມະຫາຊົນອື່ນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.

ມີພາລະບົດບາດເປັນຕົວແທນໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກສະຫະພັນແມ່ຍິງ, ແມ່ຍິງ ແລະ ເດັກ; ເສີມຂະຫຍາຍສິດເປັນເຈົ້າຂອງແມ່ຍິງ ແລະ ສົ່ງເສີມຄວາມສະເໝີພາບຍິງ-ຊາຍ; ເຕົ້າໂຮມຄວາມສາມັກຄີ, ປຸກລະດົມແມ່ຍິງເຂົ້າຮ່ວມໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ສຶກສາອົບຮົມແມ່ຍິງບັນດາເຜົ່າໃຫ້ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ມະຕິ, ຄຳສັ່ງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ສົນທິສັນຍາສາກົນ ທີ່ພົວພັນເຖິງການພັດທະນາ ແລະ ການປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກ ທີ່ ສປປ ລາວ ເປັນພາຄີ; ອະນຸຮັກ ແລະ ສົ່ງເສີມມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ຕັ້ງໜ້າເສີມຂະຫຍາຍຄຸນລັກສະນະທີ່ເປັນມູນເຊື້ອຂອງແມ່ຍິງລາວບັນດາເຜົ່າ.

ມີສິດເຂົ້າຮ່ວມເຄື່ອນໄຫວວຽກງານຂອງການຈັດຕັ້ງພັກ-ລັດ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງສັງຄົມອື່ນໆ ຕາມພາລະບົດບາດຂອງຕົນ; ມີສິດຄົ້ນຄວ້າປະກອບຄຳຄິດຄຳເຫັນຕໍ່ແນວທາງນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ສ້າງ ແລະ ປັບປຸງກົດໝາຍ, ກົດລະບຽບ; ມີສິດເຂົ້າຮ່ວມໄກ່ເກ່ຍແກ້ໄຂ, ຕັດສິນບັນຫາ; ຊຸກຍູ້, ຕິດຕາມ ແລະ ກວດກາການເຄື່ອນໄຫວວຽກງານຢ່າງຮອບດ້ານ ນຳຄະນະພັກ-ອົງການປົກຄອງແຕ່ລະຂັ້ນ; ພ້ອມທັງສະເໜີໃຫ້ອົງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂການກະທຳທີ່ບໍ່ຖືກຕ້ອງຕໍ່ສິດ, ຜົນປະໂຫຍດອັນຊອບທຳຂອງແມ່ຍິງ-ເດັກ ຕາມພາລະບົດບາດຂອງຕົນ; ມີສິດໄດ້ຮັບຜົນປະໂຫຍດໃນດ້ານຕ່າງໆ ຕາມນະໂຍບາຍຂອງລັດ.

ມີໜ້າທີ່ຄົ້ນຄວ້າ, ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ, ປະຕິບັດຕາມລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ, ຂໍ້ຕົກລົງ, ລະບຽບການ, ແຜນງານ, ໂຄງການ ເພື່ອພັດທະນາ, ປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກ ສະເໜີຕໍ່ອົງການທີ່ກ່ຽວຂ້ອງພິຈາລະນາ; ມີໜ້າທີ່ໂຄສະນາ, ສຶກສາອົບຮົມແມ່ຍິງລາວບັນດາເຜົ່າໃຫ້ຮັບຮູ້ ເຂົ້າໃຈຕໍ່ແນວທາງຂອງພັກ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ສົນທິສັນຍາສາກົນຕ່າງໆ ທີ່ພົວພັນເຖິງການພັດທະນາ, ການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກ, ມີໜ້າທີ່ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ປະຕິບັດຄວາມສະເໝີພາບຍິງ-ຊາຍ; ປະຕິບັດສິດ ແລະ ພັນທະຂອງພົນລະເມືອງລາວ, ສິດ ແລະ ໜ້າທີ່ຂອງສະມາຊິກສະຫະພັນແມ່ຍິງລາວ; ມີໜ້າທີ່ເປັນເຈົ້າການ ແລະ ປະສານສົມທົບທຸກຂະແໜງການທີ່ກ່ຽວຂ້ອງໃນການຂຶ້ນແຜນບຳລຸງ-ສ້າງຖັນແຖວພະນັກງານ, ສະມາຊິກສະຫະພັນແມ່ຍິງ ດ້ານທິດສະດີການເມືອງ, ວິຊາສະເພາະ, ວິຊາຊີບ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່; ມີໜ້າທີ່ປັບປຸງ ແລະ ຂະຫຍາຍສະມາຊິກ, ການຈັດຕັ້ງສະຫະພັນແມ່ຍິງແຕ່ລະຂັ້ນໃຫ້ກວມເອົາທຸກຂົງເຂດ ທັງພາກລັດ ແລະ ເອກະຊົນ ໃຫ້ໜັກແໜ້ນ, ເຂັ້ມແຂງ ສາມາດປະຕິບັດພາລະບົດບາດ, ໜ້າທີ່ຂອງຕົນ; ມີໜ້າທີ່ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ການສະເໜີສ້າງຕັ້ງສະມາຄົມ, ມູນນິທິຕ່າງໆ ຕາມພາລະບົດບາດ ຂອງສະຫະພັນແມ່ຍິງລາວ; ມີໜ້າທີ່ຄົ້ນຄວ້າ ແລະ ປະຕິບັດຕາມແນວທາງການຕ່າງປະເທດຂອງພັກ, ລັດຖະບານ ໃນການພົວພັນຮ່ວມມືກັບສາກົນ ດ້ວຍຄວາມເປັນເຈົ້າການຢ່າງມີການເລືອກເຟັ້ນ; ມີໜ້າທີ່ຊີ້ນຳ, ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນແມ່ຍິງຂັ້ນຂອງຕົນ, ການຈັດຕັ້ງປະຕິບັດກົດລະບຽບ, ກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ, ກົດໝາຍທີ່ພົວພັນເຖິງການພັດທະນາ ແລະ ການປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກ.

**ຄັດຈາກ: ກົດລະບຽບຂອງສະຫະພັນແມ່ຍິງລາວ ຮັບຮອງໃນກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ ຄັ້ງທີ VII.**

## ຖະແຫຼງ...

(ຕໍ່ຈາກໜ້າ 1)

ແລະ ໜ້າທີ່ ຂອງສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

ຂ້າພະເຈົ້າຕາງໜ້າຄະນະປະຈຳສະພາແຫ່ງຊາດ, ທັງເປັນຫົວໜ້າກອງເລຂານຸການຂອງກອງປະຊຸມ ມີຄວາມຍິນດີ ແລະ ຖືເປັນກຽດແຈ້ງມາຍັງບັນດາທ່ານພະນັກງານ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດຮັບຊາບກ່ຽວກັບຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ດັ່ງນີ້:

**I.** ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ເລີ່ມໄຂຂຶ້ນໃນຕອນເຊົ້າຂອງວັນຈັນ ວັນທີ 26 ມິຖຸນາ 2023 ແລະ ໄດ້ດຳເນີນມາເຖິງຕອນບ່າຍຂອງວັນອັງຄານ ວັນທີ 18 ກໍລະກົດ 2023 ເຊິ່ງໄດ້ໃຊ້ເວລາດຳເນີນກອງປະຊຸມທັງໝົດ 17 ວັນ. ໃນກອງປະຊຸມຄັ້ງນີ້ ນອກຈາກການເຂົ້າຮ່ວມຂອງສະມາຊິກສະພາແຫ່ງຊາດແລ້ວຍັງມີການນຳຂັ້ນສູງຂອງພັກ-ລັດ, ຄະນະລັດຖະບານ, ອົງການຈັດຕັ້ງພັກ-ລັດ ແລະ ແຂກຖືກເຊີນເຂົ້າຮ່ວມຢ່າງພ້ອມພຽງ.

**II.** ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍໄດ້ອອກເປັນມະຕິກອງປະຊຸມດັ່ງນີ້:

1) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023;

2) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023;

3) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບຮ່າງຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035;

4) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບຍຸດທະສາດການຄຸ້ມຄອງນໍ້າ ແລະ ຊັບພະຍາກອນນໍ້າແຫ່ງຊາດ ຮອດປີ 2030;

5) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມ;

6) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

7) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານໃນໄລຍະ 2 ກອງປະຊຸມທີ່ຜ່ານມາ ແລະ ທິດທາງແຜນການ 6 ເດືອນ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ;

8) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍ ຈຳນວນ 10 ສະບັບ.

ອ່ານຕໍ່ໜ້າ 12...




## ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

**3. ຕ້ອງຮັກສາລະບຽບວິໄນ:**

ຜົນປະໂຫຍດຂອງຊາດ ແມ່ນລວມທັງຜົນປະໂຫຍດຂອງພັກຢູ່ໃນນັ້ນ, ຜົນປະໂຫຍດຂອງພັກແມ່ນລວມທັງຜົນປະໂຫຍດຂອງສະມາຊິກຂອງພັກຢູ່ໃນນັ້ນ ເພາະສະນັ້ນ ການຂະຫຍາຍ ແລະ ຄວາມສຳເລັດຜົນຂອງພັກນັ້ນ, ດ້ານໜຶ່ງມັນກໍແມ່ນຄວາມສຳເລັດຂອງຊາດ ແລະ ອີກດ້ານໜຶ່ງ ມັນກໍແມ່ນຄວາມສຳເລັດຂອງສະມາຊິກຂອງພັກດັ່ງດຽວກັນ. ດັ່ງນັ້ນ, ມີແຕ່ພັກສຳເລັດຜົນ ແລະ ມີໄຊຊະນະເມື່ອໃດ ສະມາຊິກຂອງພັກຈຶ່ງຈະສຳເລັດຜົນ ແລະ ມີໄຊຊະນະ ເປັນຍ້ອນແນວນັ້ນ ສະມາຊິກຂອງພັກ ຈຶ່ງຕ້ອງເສຍສະຫຼະຜົນປະໂຫຍດສ່ວນຕົວ ເພື່ອຜົນປະໂຫຍດຂອງພັກ ແລະ ຂອງຊາດຢູ່ສະເໝີ.

ການເຂົ້າພັກ, ເປັນນັກຮົບຕະລຸມບອນນີ້ ບໍ່ມີໃຜບັງຄັບຈັກເທື່ອ. ມັນແມ່ນຄວາມຕື່ນຕົວສະໝັກໃຈ ແລະ ຄວາມຂະຫຍັນຫ້າວຫັນຂອງໃຜລາວ ທີ່ພາໃຫ້ສະໝັກ ຂໍເຂົ້າເປັນສະມາຊິກຂອງພັກ, ແຕ່ລະຄົນຕ້ອງພາກພຽນພະຍາຍາມອົດທົນ ສ້າງຕົວໃຫ້ສົມເປັນຜູ້ໜຶ່ງທີ່ເປັນຕົວແທນຂອງຊາດ, ເປັນຕົ້ນຜູ້ທີ່ເປັນພະນັກງານ ແລະ ຜູ້ນຳຂອງພັກ ກໍຍິ່ງຕ້ອງຕັ້ງຕົວໃຫ້ສົມກັບຄວາມເຊື່ອຖືຂອງພັກ ແລະ ຂອງສະມາຊິກ, ຍິ່ງຕ້ອງເປັນແບບຢ່າງໃຫ້ໝົດທັງສະມາຊິກ ແລະ ປະຊາຊົນໝົດທັງຊາດ ຖືເອົາເປັນແບບຢ່າງ.

ອ່ານຕໍ່ສະບັບໜ້າ...



ສຸກສະບາຍຫາຍໂຣຄ

# ສັນຍານເຕືອນແມ່ຍິງ

#ສາວແວ່ນ



ແມ່ຍິງຫຼາຍໆທ່ານອາດມີຄວາມວິຕົກກັງວົນ ແລະ ຢ້ານການກວດສຸຂະພາບພາຍໃນ ໂດຍສະເພາະການກວດພະຍາດຍິງ ເພື່ອຊອກຫາພະຍາດ ແລະ ຫາວິທີທາງປ້ອງກັນມັນແຕ່ຫົວທີ ຫຼາຍທ່ານເລືອກທີ່ຈະປະຕິເສດທີ່ຈະກວດ; ດັ່ງນັ້ນ, ມື້ນີ້ພວກເຮົາຈຶ່ງຮວບຮວມ 7 ອາການສຳຄັນທີ່ຜູ້ຍິງຄວນຮູ້ ເນື່ອງຈາກມັນເປັນອາການທີ່ບົ່ງບອກວ່າຮ່າງກາຍເຖິງເວລາແລ້ວທີ່ຈະຕ້ອງໄດ້ຜ່ານການກວດພາຍໃນ ມານຳສະເໜີໃຫ້ແກ່ທ່ານໄດ້ຮັບຊາບ:

**1. ມີເລືອດອອກທາງຊ່ອງຄອດ:** ເມື່ອມີເລືອດອອກຈາກຊ່ອງຄອດໂດຍບໍ່ຮູ້ສາເຫດ ແລະ ໝັ້ນໃຈວ່າເລືອດນັ້ນບໍ່ແມ່ນເລືອດປະຈຳເດືອນ ໂດຍສະເພາະ ເມື່ອມີເລືອດອອກຫຼັງຈາກມີເພດສຳພັນ ລວມທັງການມີເລືອດອອກເລັກນ້ອຍຫຼັງຈາກໝົດປະຈຳເດືອນ ຄວນໄປພົບທ່ານໝໍ ເພື່ອກວດພາຍໃນທັນທີ.

**2. ມີອາການຜິດປົກກະຕິໃນຊ່ອງຄອດ:** ໂດຍປົກກະຕິແລ້ວ ການລົງຂາວຈະມີລັກສະນະໃສ ແລະ ມີສີອອກຂາວ ຖ້າມີອາການຜິດປົກກະຕິ ເຊັ່ນ: ລົງຂາວມີສີເຫຼືອງປົນຂຽວ ຫຼື ສີເຫຼືອງຂຸ້ນ ອາດຈະເກີດຈາກເຊື້ອແບັກທີເຣຍ ຖ້າຫາກລົງຂາວເປັນສີນ້ຳຕານ ອາດເກີດຈາກມີເລືອດອອກທາງຊ່ອງຄອດ.

**3. ປະຈຳເດືອນບໍ່ມາ ແລະ ມາກົງກັນ:** ຫາກປະຈຳເດືອນຂາດໄປເປັນເວລາຫຼາຍເດືອນ ຫຼື ບໍ່ມາຕາມປົກກະຕິນັ້ນຖືວ່າເປັນສັນຍານເຕືອນໃຫ້ຜູ້ຍິງມີການກວດສຸຂະພາບພາຍໃນເພດຍິງເຊັ່ນດຽວກັນ.

**4. ຊ່ອງຄອດມີກິ່ນ:** ຖ້າຊ່ອງຄອດມີກິ່ນເໝັນ ເຊິ່ງອາດຈະບໍ່ເຄີຍເປັນມາກ່ອນ ເຊິ່ງກິ່ນເໝັນຈະຄ່ອຍໆຮຸນແຮງຂຶ້ນ ທ່ານຄວນກວດເບິ່ງພາຍໃນທັນທີ ໂດຍສ່ວນໃຫຍ່ແລ້ວ ກິ່ນທີ່ພົບຈະມີ 3 ປະເພດຄື: ກິ່ນຄາວ, ກິ່ນສົ້ມ ແລະ ມີກິ່ນອັບຊື້ນ.

**5. ເຈັບທ້ອງນ້ອຍຊຳເຮື້ອ:** ເມື່ອມີອາການເຈັບທ້ອງ ແລະ ປວດຢ່າງຕໍ່ເນື່ອງ ຢູ່ບໍລິເວນທ້ອງນ້ອຍຕະຫຼອດເວລາ ບໍ່ວ່າຈະເປັນປະຈຳເດືອນຫຼືບໍ່ ແລະ ມີອາການຮຸນແຮງຂຶ້ນເລື້ອຍໆ ຄວນໄປກວດພາຍໃນທັນທີ ເພື່ອໃຫ້ທ່ານໝໍສາມາດກວດຫາສາເຫດຂອງອາການ ແລະ ຮັບການປິ່ນປົວໂດຍດ່ວນ.

**6. ມີບາດແຜບໍລິເວນຊ່ອງຄອດ:** ບາດແຜທີ່ເກີດບໍລິເວນຊ່ອງຄອດນັ້ນ ອາດເກີດຈາກຫຼາຍສາເຫດທີ່ແຕກຕ່າງກັນ ບໍ່ວ່າຈະເປັນບາດແຜບວມ ຫຼື ເປັນຮອຍແປ້ວ ເຊິ່ງເກີດຈາກການອັກເສບ, ຕິດເຊື້ອ ຈາກການສຽດສີໃນເວລາມີເພດສຳພັນ ແລະ ເກີດຈາກຮອຍພະຍາດທີ່ມາຈາກການມີເພດສຳພັນ ໃນເບື້ອງຕົ້ນສາມາດສັງເກດບາດແຜຕົວເອງຜ່ານແວ່ນໄດ້ ຖ້າສັງເກດເຫັນມີບາດແຜຫຼາຍຈຸດ ລວມທັງການອັກເສບ, ໃຄ່ບວມ, ແດງ ແລະ ຮູ້ສຶກແສບຮ້ອນໃນຊ່ອງຄອດ ຄວນໄປຫາໝໍໄວເທົ່າທີ່ຈະໄວໄດ້.

**7. ພົບກ້ອນຢູ່ບໍລິເວນທ້ອງນ້ອຍ:** ທ່ານສາມາດສັງເກດໄດ້ດ້ວຍຕົວມັນເອງ ໂດຍການນອນລົງ ແລ້ວສັງເກດເບິ່ງວ່າທ້ອງໃຫຍ່ຂຶ້ນບໍ່? ຖ້າໃຫຍ່ຂຶ້ນ ໃຫ້ລອງຄຳເບິ່ງ ຫາກຮູ້ສຶກວ່າມີກ້ອນມົນໆ, ແຂງໆ ແລະ ດູນຂຶ້ນມາ ທ່ານຄວນໄປກວດພາຍໃນໄວເທົ່າທີ່ຈະໄວໄດ້ ເພື່ອໃຫ້ທ່ານໝໍບົ່ງມະຕິຕື່ມ.

ຢ່າລືມວ່າ ການກວດສຸຂະພາບ ແມ່ນມີຄວາມສຳຄັນຫຼາຍຕໍ່ສຸຂະພາບຂອງແມ່ຍິງ ບໍ່ຕ້ອງອາຍ ແລະ ບໍ່ຕ້ອງຢ້ານເຈັບ ເມື່ອເຖິງກຳນົດເວລາກວດ ແນະນຳໃຫ້ໄປກວດເພື່ອຮູ້ວ່າສຸຂະພາບ ເຮົາມີຄວາມຜິດປົກກະຕິ ຫຼື ບໍ່ ລວມທັງການສັງເກດອາການຂ້າງເທິງນີ້ກໍມີຄວາມສຳຄັນເຊັ່ນກັນ.

ອາດ ກະວີລາວ

# ຈົດໝາຍຈາກພໍ່

#ເກດແກ້ວ ປົກພັນ

✻ ລູກເອີຍ! ຟັງພໍ່ນີ້ ຈາກ່າວຂານໄຂ ກ່ອນນາ
ຢ່າໄດ້ໄປໂລເລ ຈ່າຍຟຸມເຟືອຍຫຼີ້ນ
ປະຢັດກິນປະຢັດໃຊ້ ອັນໃດພໍຜ່ອນ
ບາງເທື່ອ ຍາມເດືອດຮ້ອນ ໃຜຊິຊ້ວນຊ່ວຍຊູ ເຮົານາ

ພໍ່ແມ່ຫາຮັບຈ້າງ ແບກຫາບຂອງຂາຍ
ເກັບທ້ອນເງິນລາຍວັນ ສົ່ງເສີມລູກເຕົ້າ
ຫວັງພຽງຈອມໃຈເຈົ້າ ຮຽນສູງນຳເພິ່ນ
ແມ່ນເຂີນເຂາະຂາດຂ້ອນ ເງິນໃຫ້ພໍ່ກໍຍອມ

ຢ່າເຮັດຄືຈັ່ງເຈົ້າ ລວຍຮັ່ງເງິນຫຼາຍ
ທຽບລູກຊາຍຄົນເຂົາ ມັ່ງມີຫຼາຍລົ້ນ
ເຮົາຄົນຈົນຄວນຮູ້ ຫຼັກການຈັກຈ່າຍ
ພໍ່ແມ່ຫາຝາກໃຫ້ ຄວນໃຊ້ສິ່ງຈຳເປັນ ໄດເນີ

ໝູ່ຊວນໄປດື່ມເຫຼົ້າ ຄວນຮິ້ນຕອງດູ
ຜູ້ຫາເງິນທາງຫຼັງ ເຫື່ອໄຫຼລາມໜ້າ
ອົດກິນພໍຢາໄສ້ ປະທັງກາຍກໍຕາມຊ່າງ
ທຸກປານໃດຍັງບໍ່ເວົ້າ ຫວັງແຕ່ໃຫ້ລູກເຕົ້າ ຮຽນຈົບໄດ້ດັ່ງໝາຍ

ພໍ່ແມ່ທຸກຍາກໄຮ້ ກໍຍັງຊອກສະແຫວງຫາ
ເງິນທຶນການສຶກສາ ເພື່ອອະນາຄົດເຈົ້າ
ການຮຽນພາເຮົາໃຫ້ ສະຫຼາດແຫຼມຫຼາຍຢ່າງ
ຍູທ່າງເສີມຊ່ວຍສ້າງ ເມືອງບ້ານຮຸ່ງເຮືອງ

ຈາກຈົດໝາຍໜຶ່ງກ້ານ ລູກອ່ານຄວາມໃນ
ພໍ່ຂຽນຈາກໃຈຈິງ ວ່າສອນວອນເວົ້າ
ເປັນລູກເຮົາຄວນຮູ້ ກະຕັນຍູ ອິດູຕົນພໍ່ແມ່
ຍາມເພິ່ນກາຍແກ່ເຖົ້າ ກໍຫວັງເຈົ້າເພິ່ງພາ ລູກເອີຍ!



ສ້ກສາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

\# ສາວຈົ້ມ

✻ ***ເສັດ***ສິ້ນກອງປະຊຸມສະໄໝສາມັນ***ເທື່ອທີ 5*** ຂອງສະພາແຫ່ງຊາດ ຊຸດທີ ***IX*** ຕອນນີ້ບັນຍາກາດພາຍໃນສະພາແຫ່ງຊາດ ກໍງຽບເຫງົາພໍສົມຄວນ ຫຼັງຈາກທີ່ຄຶກຄື້ນມາເປັນເວລາເກືອບເດືອນ ຕອນນີ້ຫຼາຍໆທ່ານກໍຄົງກັບເຖິງເຮືອນເຖິງຊານເປັນທີ່ຮຽບຮ້ອຍແລ້ວ ຈຶ່ງຂໍຖາມຂ່າວຂໍ ນັບດາທ່ານ ***ສສຊ*** ພ້ອມພໍ່ ຄລຊ ພາກເໜືອ-ກາງ-ໃຕ້ ເປັນແນວໃດບໍ່ເຈົ້າ ອິຊາການເຮົາກໍ້າຝ່າຍ ຫຼາຍອາທິດມິດງຽບ ຈາກນີ້ກຽມຄຶກຄື້ນ ເດີນໜ້າເຄື່ອນໄຫວ ***ແລ້ວບໍ່!***

✻ ***ຊົມ***ເຊີຍວັນສ້າງຕັ້ງສະຫະພັນແມ່ຍິງລາວ ທີ ***20 ກໍລະກົດ ຄົບຮອບ 68*** ປີ ນະໂອກາດນີ້ ***ຂໍອວຍພອນໄຊ*** ຂໍໃຫ້ມີຄວາມສຸກ ດັ່ງດຽວໂດຍດ້ານ ຕຳແໜ່ງສູງເງິນຄ່າລົ້ນ ສຸກສົມຫວັງສະໝຸກຈ່າຍ ***ເດີແມ່ເດີ!*** ຜິວກາຍສຸດຜ່ອງເຫຼື້ອມ ງາມເລື້ອຍຕະຫອດໄປ ***ນັ້ນຕ້ອນ!***

## ຊວນຍິ້ມ

\# ແອ່ນຕຸ້ງ

### ປະສົບການດຽວກັນ

ຫຼັງຈາກເສຍຊີວິດ ທ້າວກີກໍໄປພົບຈ່າຍົມພິບານ ເລີຍຖືກຊັກຖາມເລື່ອງປະຫວັດ

**ຈ່າຍົມພິບານ:** ໃນຊີວິດເຄີຍມີບັນຫາໃຫ້ອຸກໃຈແຮງບໍ່?
**ທ້າວກີ:** ມີ
**ຈ່າຍົມພິບານ:** ເລື່ອງຫຍັງ?
**ທ້າວກີ:** ເມຍຕິດບ່າວນ້ອຍ
**ຈ່າຍົມພິບານ:** ເຈົ້າເຮັດແນວໃດ?
**ທ້າວກີ:** ຊິເຮັດແນວໃດໄດ້ແຕ່ໄຫ້
**ຈ່າຍົມພິບານ:** ຂ້ອຍກະເຄີຍພົບບັນຫານີ້ ຕອນເປັນມະນຸດ
**ທ້າວກີ:** ທ່ານເຮັດແນວໃດ
**ຈ່າຍົມພິບານ:** ຮ້ວຍ ກູກະແປງພີໄບກໍລະເອີຍ!
**ທ້າວກີ:** ???



ຄະຕິເຕືອນໃຈ

\#ດອກຫຍ້າ

ຢູ່ໃກ້ເພິ່ນອ່າດີ ໜີໃກ້ເພິ່ນຄິດຮອດ




# ຫຸ່ນ - ຮຸ່ນ

"ຈັ່ງແມ່ນໂຕຫຸ່ນສະແລນເດີ້ແທ້ນໍ ຄາແຕ່ໄປລີງສະໜາມຍາມເຊົ້າມານີ້!"

"ແມ່ນຊັ້ນເບົາະ! ເຮົາກັບໂຕກະຄົນຮຸ່ນດຽວກັນ ແຕ່ຮູບຮ່າງໂຕຫັ້ນນ່າ ປານຫຸ່ນນາງງາມເອົາໂລດ!"

"ໂຕກະຊ່າງຍ້ອງເຮົາຫຼາຍ! ມື້ແລງຊິພາໄປລ້ຽງຊິ້ນດາດເດີ!"

"ຍາມໃດກໍຊີ້ນດາດໆ, ສິງໄສຫຸ່ນເຮົາຈະກັບໄປເປັນກະປຸກຕັງສ້າຍຄືເກົ່າລະນໍ!"

ບຸນຍືນຍືນຍິ້ມຢູ່ຜູ້ດຽວ ທັງລັກແນມເບິ່ງໜ້າສີອວບໆຂອງສອງສາວ, ໃນໃຈກໍວົນວຽນຢູ່ນຳຄຳວ່າ "ຫຸ່ນ" ກັບ "ຮຸ່ນ". ປະໄວ້ດົນບໍ່ໄດ້ ເຂົາຈຶ່ງຮີບຟ້າວມຸ່ງໄປຫາລຸງຄຳໂດຍໄວພະລັນ. ບໍ່ພໍຖາວກໍໄດ້ຄຳຕອບຈາກປາກລຸງຄຳຄືຈັ່ງຊີ້:

ຜ່ານມາ ສັງເກດເຫັນວ່າການຂຽນຄຳວ່າ "ຫຸ່ນ" ແລະ "ຮຸ່ນ" ມັກຂຽນຜິດ ແລະຫຼົງກັນຢູ່ສະເໝີ ຍ້ອນອອກສຽງຄືກັນ. ເພື່ອຫຼີກເວັ້ນຈາກຄວາມຜິດດັ່ງກ່າວ ຈຶ່ງຂໍອະທິບາຍຄວາມໝາຍຂອງຄຳວ່າ "ຫຸ່ນ" ແລະ "ຮຸ່ນ" ດັ່ງນີ້:

"ຫຸ່ນ" ເປັນຄຳນາມ ໝາຍເຖິງ "ຮູບຮ່າງ, ຮູບແບບ, ຮູບປັ້ນ ຫຼືຄວັດເປັນເບົ້າໄວ້ຊົ່ວຄາວ ເຊັ່ນ

- ຫຸ່ນຂອງນາງໄດ້ສ່ວນດີ.
- ເພິ່ນເຮັດຫຸ່ນໄລ່ກາຢູ່ກາງທົ່ງນາ.
- ຫຸ່ນຂອງດວງເຮັ່ງປານຫຸ່ນພະເອກເກົາຫຼີ.

"ຮຸ່ນ" ເປັນຄຳນາມ ໝາຍເຖິງ "ສໍ່າ, ຂະໜາດ, ສະໄໝ, ຄາວ, ຊາວໜຸ່ມໄວບ່າວສາວ ເອີ້ນ ຄົນຮຸ່ນໜຸ່ມ, ຕົ້ນໄມ້ທີ່ຕັດແລ້ວມີກິ່ງງ່າເກີດຂຶ້ນໃໝ່ຮຽກວ່າຮຸ່ນໄມ້".

ແຕ່ໃນພາສາປາກເວົ້າ ຄຳວ່າ "ຮຸ່ນ" ນີ້ ມັກຈະອອກສຽງເປັນ "ລຸ້ນ" ເຊັ່ນ ໄວລຸ້ນ, ລົດລຸ້ນນັ້ນລຸ້ນນີ້, ມືຖືຍີ່ຫໍ້ນີ້ຕົກລຸ້ນແລ້ວ ດັ່ງນີ້ເປັນຕົ້ນ. ຈາກພາສາເວົ້າສິ່ງສະທ້ອນໃຫ້ແກ່ການຂຽນ ເຮົາຈະເຫັນຕາມປ້າຍຕິດພິທີໃນການຮຽນຈົບໃນບາງສະຖາບັນ ແທນທີ່ຈະຂຽນວ່າ "...ນັກສຶກສາຮຸ່ນທີ 2" ແຕ່ພັດຂຽນວ່າ "...ນັກສຶກສາລຸ້ນທີ 2" ດັ່ງນີ້ເປັນຕົ້ນ.




**ເພິ່ນວ່າ 3 ເລື່ອງ ທີ່ໜ້າເສຍໃຈໃນຊີວິດຄື ພົບຄູດີແລ້ວບໍ່ຮຽນ ພົບເພື່ອນທີ່ດີ ແລ້ວບໍ່ຄົບ ແລະ ພົບໂອກາດແລ້ວບໍ່ຄວ້າເອົາໄວ້.**




# ຈີນ ຮຽກຮ້ອງໃຫ້ຈັດບັນຫາຄວາມໝັ້ນຄົງດ້ານທັນຍາຫານເຂົ້າໃນຖານະບຸລິມະສິດຂອງວາລະສາກົນ

ອີງຕາມການລາຍງານຂ່າວເມື່ອວັນທີ 12 ກໍລະກົດ ຜ່ານມາ ໃຫ້ຮູ້ວ່າ: ທ່ານ ຕ້າຍປີງ ຮອງຜູ້ຕາງໜ້າຖາວອນຂອງຈີນປະຈຳອົງການສະຫະປະຊາຊາດ ກ່າວວ່າ: ເພື່ອພິຈາລະນາຄວາມໝັ້ນຄົງດ້ານທັນຍາຫານ ແລະ ຕົວເມືອງ-ຊົນນະບົດພັດທະນາແບບປະສານສົມທົບກັນ ແມ່ນຫົວຂໍ້ສຳຄັນທີ່ປະເທດຕ່າງໆປະເຊີນ, ປະຊາຄົມໂລກຄວນຈັດເອົາບັນຫາຄວາມໝັ້ນຄົງດ້ານທັນຍາຫານໄວ້ຢູ່ໃນຖານະ




ບຸລິມະສິດຂອງວາລະສາກົນ ພ້ອມທັງເສີມຂະຫຍາຍບົດບາດຂອງອົງການອາຫານ ແລະ ການກະເສດ ຫຼື FAO ເພື່ອສະໜັບສະໜູນປະເທດຕ່າງໆຄົ້ນຫາແຜນການແກ້ໄຂທີ່ບັງເກີດຜົນ.

ທ່ານ ຕ້າຍປີງ ໄດ້ປະກອບຄຳເຫັນໃນກອງປະຊຸມວິສາມັນເຜີຍແຜ່ບົດລາຍງານ "ຄວາມໝັ້ນຄົງດ້ານທັນຍາຫານ ແລະ ສະພາບໂພຊະນາການໂລກ ປີ 2023" ວ່າ: ປະຊາຄົມໂລກຕ້ອງສະໜັບສະໜູນປະເທດພວມພັດທະນາເປີດກວ້າງການຜະລິດທັນຍາຫານ, ຊຸກຍູ້ການພັດທະນາແບບຍືນຍົງຂອງກະສິກຳດ້ວຍການປະດິດສ້າງໃໝ່ດ້ານວິທະຍາສາດເຕັກໂນໂລຊີ, ຍົກປະສິດທິພາບດ້ານການຜະລິດກະສິກຳໃຫ້ສູງຂຶ້ນ ບົນພື້ນຖານອະນຸລັກສິ່ງແວດລ້ອມນິເວດ. ປະເທດທີ່ພັດທະນາແລ້ວ ຄວນຍົກເລີກເງິນອຸດໜູນກະສິກຳທີ່ບໍ່ສົມເຫດສົມຜົນ, ປະຕິບັດນະໂຍບາຍເງິນຕາທີ່ມີຄວາມຮັບຜິດຊອບ, ຫຼຸດຜ່ອນຜົນກະທົບຈາກປັດໄຈພາຍນອກ ເຊັ່ນ: ເງິນເຟີ້, ການຂຶ້ນລົງຂອງອັດຕາແລກປ່ຽນເປັນຕົ້ນ ທີ່ມີຕໍ່ຄວາມໝັ້ນຄົງດ້ານທັນຍາຫານຂອງປະເທດພວມພັດທະນາ.

# ອາຊຽນ ຍຶດໝັ້ນຄວາມສາມັກຄີ ແລະ ການເປັນເຈົ້າຕົນເອງ ເພື່ອສະແຫວງຫາການພັດທະນາ

ອີງຕາມການລາຍງານຂ່າວເມື່ອບໍ່ດົນມານີ້ ໃຫ້ຮູ້ວ່າ: ກອງປະຊຸມລັດຖະມົນຕີການຕ່າງປະເທດອາຊຽນ ຄັ້ງທີ 56 ແລະ ກອງປະຊຸມປິ່ນອ້ອມຕ່າງໆໄດ້ໄຂຂຶ້ນຢູ່ນະຄອນຫຼວງຈາກາຕາ ອິນໂດເນເຊຍ ໂດຍໃນທີ່ປະຊຸມ, ບັນດາຜູ້ຕາງໜ້າຂອງຝ່າຍຕ່າງໆທີ່ເຂົ້າຮ່ວມກອງປະຊຸມ ໄດ້ຢືນຢັນວ່າ ຈະຮ່ວມກັນຊຸກຍູ້ການເຊື່ອມໂຍງເຂົ້າເປັນອັນໜຶ່ງອັນດຽວກັນດ້ານ



ເສດຖະກິດຂອງພາກພື້ນ, ຢ້ຳຄືນເຖິງຄວາມຕັດສິນໃຈໃນການປົກປັກຮັກສາສັນຕິພາບ ແລະ ສະຖຽນລະພາບຂອງພາກພື້ນ ທັງເນັ້ນໜັກວ່າ ຕ້ອງຮັກສາຄວາມສາມັກຄີ ແລະ ຄວາມເປັນແກນ.

ລາຍງານໃຫ້ຮູ້ຕື່ມວ່າ: ເຈົ້າໜ້າທີ່ ແລະ ວິຊາການຂອງອາຊຽນເຫັນວ່າ: ອາຊຽນຍຶດໝັ້ນນ້ຳໃຈເອກະລາດ ແລະ ເປັນເຈົ້າຕົນເອງ, ເປີດປະຕູສູ່ພາຍນອກ ແລະ ມີຄວາມໂອບເອື້ອອາລີ, ສຸມໃສ່ດ້ານເສດຖະກິດ, ເອົາໃຈໃສ່ການຮ່ວມມື ໂດຍສະເພາະແມ່ນອາຊຽນ ແລະ ຈີນເປັນຄູ່ການຄ້າໃຫຍ່ທີ່ສຸດຂອງກັນແລະກັນ, ຄວນເພີ່ມທະວີການຮ່ວມມືຕື່ມອີກ, ຫວັງວ່າການພົວພັນຄູ່ຮ່ວມຍຸດທະສາດຮອບດ້ານລະຫວ່າງສອງຝ່າຍຈະໄດ້ຮັບຄວາມຄືບໜ້າໃໝ່ຢ່າງບໍ່ຢຸດຢັ້ງ.

## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ທ່ານສະມາຊິກສະພາແຫ່ງຊາດແລ້ວ ໃນວັນທີ 17 ກໍລະກົດ 2023, ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ພ້ອມກັນລົງຄະແນນສຽງຮັບຮອງເອົາແຕ່ລະກົດໝາຍ ດ້ວຍການເຫັນດີເປັນສຽງສ່ວນຫຼາຍ. ໃນນີ້ມີກົດໝາຍສ້າງໃໝ່ 4 ສະບັບ ແລະ ປັບປຸງ 6 ສະບັບ ເຊິ່ງມີລາຍລະອຽດດັ່ງນີ້:

+ ກົດໝາຍສ້າງໃໝ່ ມີ 4 ສະບັບ:

1) ກົດໝາຍວ່າດ້ວຍອາກອນທີ່ດິນ ເຊິ່ງແມ່ນກະຊວງການເງິນ ເປັນຜູ້ສະເໜີ ໄດ້ຮັບຄະແນນສຽງເຫັນດີ 93,47%;

2) ກົດໝາຍວ່າດ້ວຍເຍົາວະຊົນລາວ ເຊິ່ງແມ່ນສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຜູ້ສະເໜີ ໄດ້ຮັບຄະແນນສຽງເຫັນດີ 73,18%;

3) ກົດໝາຍວ່າດ້ວຍການຈັດຫາງານ ເຊິ່ງແມ່ນກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ສະເໜີ ໄດ້ຮັບຄະແນນສຽງເຫັນດີ93%;

4) ກົດໝາຍວ່າດ້ວຍສາທາລະນະສຸກ ເຊິ່ງແມ່ນກະຊວງສາທາລະນະສຸກເປັນຜູ້ສະເໜີ ໄດ້ຮັບຄະແນນສຽງເຫັນດີ 95,1%.

+ ກົດໝາຍປັບປຸງ ມີ 6 ສະບັບ:

1) ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ເຊິ່ງແມ່ນທະນາຄານແຫ່ງ ສປປ ລາວ ເປັນຜູ້ສະເໜີ ໄດ້ຮັບຄະແນນສຽງເຫັນດີ 93%;

2) ກົດໝາຍວ່າດ້ວຍສານທະຫານ (ສະບັບປັບປຸງ) ເຊິ່ງແມ່ນກະຊວງປ້ອງກັນປະເທດເປັນຜູ້ສະເໜີ ໄດ້ຮັບຄະແນນສຽງເຫັນດີ 93,75%;

3) ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ (ສະບັບປັບປຸງ) ເຊິ່ງແມ່ນກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ສະເໜີ ໄດ້ຮັບຄະແນນສຽງເຫັນດີ 95,13%;

4) ກົດໝາຍວ່າດ້ວຍສັດປ່າ (ສະບັບປັບປຸງ) ເຊິ່ງແມ່ນກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ສະເໜີ ໄດ້ຮັບຄະແນນສຽງເຫັນດີ 93,79%;

5) ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ສະບັບປັບປຸງ) ເຊິ່ງແມ່ນກະຊວງຍຸຕິທຳ ເປັນຜູ້ສະເໜີ ໄດ້ຮັບຄະແນນສຽງເຫັນດີ 90,14%;

6) ກົດໝາຍວ່າດ້ວຍການພິມຈຳໜ່າຍ (ສະບັບປັບປຸງ) ເຊິ່ງແມ່ນກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ສະເໜີ ໄດ້ຮັບຄະແນນສຽງເຫັນດີ 96,45%.

ການພິຈາລະນາ ແລະ ຮັບຮອງເອົາກົດໝາຍ ຈຳນວນ 10 ສະບັບນີ້ ແມ່ນຜົນສຳເລັດທີ່ສຳຄັນໃນການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025 ທັງເປັນການປະກອບສ່ວນສຳຄັນໃນການປັບປຸງ ແລະ ເພີ່ມທະວີພາຫະນະໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຂອງປະເທດເຮົາໃຫ້ເປັນລະບົບຄົບຊຸດຂຶ້ນຕື່ມ ເພື່ອຮັບປະກັນປົກປ້ອງສິດ ແລະ ຜົນປະໂຫຍດຂອງຊາດ, ຂອງລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ ແລະປະຊາຊົນລາວບັນດາເຜົ່າ, ສະກັດກັ້ນ ແລະ ຕ້ານບັນດາປາກົດການຫຍໍ້ທໍ້ທີ່ເປັນພຶດຕິກຳລະເມີດກົດໝາຍຢູ່ໃນສັງຄົມ, ປະກອບສ່ວນໃນການສ້າງລັດເຮົາໃຫ້ເປັນລັດປະຊາທິປະໄຕທີ່ປົກຄອງດ້ວຍກົດໝາຍໃຫ້ເຂັ້ມງວດຂຶ້ນ. ບັນດາກົດໝາຍເຫຼົ່ານັ້ນເຖິງວ່າໄດ້ຮັບຮອງເອົາແລ້ວກໍຕາມ ກຳມາທິການກົດໝາຍ ຍັງຈະໄດ້ສືບຕໍ່ສົມທົບກັບບັນດາກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ, ຄະນະຮັບຜິດຊອບແຕ່ລະກົດໝາຍ ແລະ ພາກສ່ວນທີ່ກ່ຽວຂ້ອງ ປັບປຸງ, ຮຽບຮຽງໃຫ້ສຳເລັດສົມບູນ ເພື່ອລາຍງານຄະນະປະຈຳສະພາແຫ່ງຊາດກ່ອນສະເໜີທ່ານປະທານປະເທດພິຈາລະນາ ອອກລັດຖະດຳລັດປະກາດໃຊ້ຢ່າງເປັນທາງການ ຕາມລະບຽບການທີ່ກຳນົດໄວ້.

ເພື່ອຮັບປະກັນໃຫ້ບັນດາກົດໝາຍທີ່ໄດ້ຮັບຮອງໄປແລ້ວນັ້ນ ໄດ້ຮັບການຈັດຕັ້ງປະຕິບັດເຂົ້າສູ່ຊີວິດຕົວຈິງຂອງສັງຄົມ, ຂ້າພະເຈົ້າຂໍຮຽກຮ້ອງໃຫ້ບັນດາກະຊວງ, ອົງການ, ເຈົ້າໜ້າທີ່, ພະນັກງານຂອງລັດ, ລັດວິສາຫະກິດ, ບໍລິສັດເອກະຊົນ ຕະຫຼອດຮອດທຸກຊັ້ນຄົນໃນສັງຄົມ ຈົ່ງເອົາໃຈໃສ່ອ່ານ, ຄົ້ນຄວ້າ, ເຜີຍແຜ່, ເຊື່ອມຊຶມ ແລະ ກຳແໜ້ນເນື້ອໃນຂອງກົດໝາຍ, ເຂົ້າຮ່ວມການຈັດຕັ້ງປະຕິບັດບັນດາກົດໝາຍເຫຼົ່ານັ້ນໃຫ້ເກີດມີໝາກຜົນເປັນຈິງ, ຫັນເປັນສະຕິ ແລະ ແບບແຜນດຳລົງຊີວິດໃຕ້ກົດໝາຍຂອງແຕ່ລະຄົນ, ຄອບຄົວ, ການຈັດຕັ້ງ, ຫົວໜ່ວຍວິສາຫະກິດ ທັງພາກລັດ ແລະ ເອກະຊົນ.

ຂ້າພະເຈົ້າ ຂໍຖືໂອກາດນີ້ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ຂໍສະແດງຄວາມຍ້ອງຍໍຊົມເຊີຍຢ່າງສຸດອົກສຸດໃຈຕໍ່ບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ໄດ້ເອົາໃຈໃສ່ປະກອບຄຳຄິດຄຳເຫັນຢ່າງຕັ້ງໜ້າ ແລະ ບັນດາກະຊວງ, ອົງການ ທີ່ໄດ້ສຸມໃສ່ສ້າງ ແລະ ປັບປຸງກົດໝາຍ ເຖິງຈະມີສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດພາຍໃນ, ສະພາບການຜັນເປຂອງໂລກ ແລະ ພາກພື້ນ ແຕ່ກໍບໍ່ເປັນອຸປະສັກ, ທຸກພາກສ່ວນລ້ວນແຕ່ມີຄວາມຮັບຜິດຊອບສູງໃນການປະຕິບັດໜ້າທີ່ການເມືອງຂອງຕົນໃຫ້ມີຜົນສຳເລັດຕາມແຜນການ.

ເລົ່າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ໂຄງການບ້ານທ່ອງທ່ຽວ ເພື່ອເກັບກ່ຽວຜົນປະໂຫຍດໃຫ້ຊາວບ້ານ



ນີ້ເປັນບົດທີ 3 ຕິດຕໍ່ກັນ ທີ່ຜູ້ຂຽນອີດສາຊອກຫາມາເລົ່າ ເພື່ອຕໍ່ເຕີມເສີມບົດຮຽນແຮໄວ້ສຳລັບປີທ່ອງທ່ຽວລາວ 2024. ເນື້ອໃນທີ່ຢາກລົງເລິກ ກໍຄືການພັດທະນາທ່ອງທ່ຽວໃຫ້ມີສ່ວນຮ່ວມຈາກຊຸມຊົນຢ່າງກວ້າງຂວາງແລະ ໃຫ້ຊຸມຊົນຕາມພື້ນຖານແຫຼ່ງທ່ອງທ່ຽວ ໄດ້ຮັບຜົນປະໂຫຍດຢ່າງແທ້ຈິງ, ບໍ່ດັ່ງນັ້ນ ກິດຈະການທ່ອງທ່ຽວ ກໍຈະບໍ່ຍືນຍົງຄົງໝັ້ນ ເພາະມີແຕ່ຜູ້ປະກອບການໄດ້ຮັບຜົນປະໂຫຍດ, ສ່ວນຄົນຢູ່ພື້ນຖານພັດໄດ້ແຕ່ກົ້ງໂກບເບິ່ງລ້າໆ.

ຜູ້ຂຽນໄດ້ມີໂອກາດໄປວຽກທາງການຢູ່ປະເທດອິນໂດເນເຊຍຫຼາຍຄັ້ງ ແຕ່ລະຄັ້ງໄດ້ຊອກເວລາຜີກໂຕອອກໄປທ່ອງທ່ຽວຕາມແຜນຂອງປະເທດເຈົ້າພາບ ແລະ ໄດ້ຮຽນຮູ້ບາງບົດຮຽນທີ່ດີ ໃນການພັດທະນາອຸດສະຫະກຳການທ່ອງທ່ຽວ ໂດຍສະເພາະແມ່ນການຫັນການທ່ອງທ່ຽວໃຫ້ເປັນຂອງຊຸມຊົນທ້ອງຖິ່ນ ແລະ ເພື່ອຜົນປະໂຫຍດຂອງຄົນໃນທ້ອງຖິ່ນຢ່າງແທ້ຈິງ. ດ້ວຍວິທີນີ້, ຂະແໜງການທ່ອງທ່ຽວຈຶ່ງຈະຍືນຍົງ, ກິນບໍ່ບົກ-ຈົກບໍ່ແຫ້ງເປັນຈັກເທື່ອ.

ໃນປີ 2016 ລັດຖະບານ **ອິນໂດເນເຊຍ** ໄດ້ຈັດງົບປະມານພັດທະນາການທ່ອງທ່ຽວສູງເຖິງ 89 ພັນຕື້ຣູເປຍ. ຖ້າຈຳບໍ່ຜິດ, ໃນເວລານັ້ນ 1 ໂດລາສະຫະລັດ ແລກໄດ້ປະມານ 13 ພັນຣູເປຍ ນີ້ລະ. ງົບປະມານຈຳນວນມະຫາສານນີ້ ນຳໃຊ້ເພື່ອພັດທະນາໂຄງການການທ່ອງທ່ຽວຂັ້ນບ້ານ ຫຼື ໂຄງການຫັນບ້ານເປັນຫົວໜ່ວຍການທ່ອງທ່ຽວ (Tourism Village Programme) ຂຽນໂຕຫຍໍ້ວ່າ "TVP" ເຊິ່ງມີລາຍລະອຽດການແບ່ງຊັດສ່ວນງົບປະມານດັ່ງນີ້ຄື, ແຕ່ລະບ້ານເປົ້າໝາຍໄດ້ຮັບເງິນຈຳນວນ 1 ຕື້ຣູເປຍເພື່ອໃຊ້ຈ່າຍໃນການພັດທະນາໂຄງລ່າງການທ່ອງທ່ຽວເຊັ່ນ: ເຮືອນພັກ, ຮ້ານຄ້າ, ສູນຜະລິດຕະພັນເຄື່ອງຫັດຖະກຳທີ່ເປັນເອກະລັກຂອງທ້ອງຖິ່ນໃຫ້ນັກທ່ອງທ່ຽວເລືອກຊື້ເປັນສິ່ງລະລຶກ. ຈຸດເນັ້ນສຳຄັນອີກອັນໜຶ່ງ ກໍຄືສ້າງເງື່ອນໄຂ ແລະ ຄວາມອາດສາມາດ ໃນການຮັບນັກທ່ອງທ່ຽວໄປພັກເຊົາຕາມຄົວເຮືອນເອີ້ນວ່າ ໂຮມສະເຕ (Home Stay). ດ້ວຍວິທີນີ້, ຊາວບ້ານກໍຈະມີລາຍໄດ້ໂດຍກົງຈາກແຂກເຊັ່ນ ຄ່າພັກເຊົາ ແລະ ຈາກການຂາຍເຄື່ອງຫັດຖະກຳ. ເພື່ອເຮັດໃຫ້ການແບ່ງປັນງົບປະມານໃຫ້ທົ່ວເຖິງ ແລະ ເປັນທຳພາຍໃນບ້ານ, ນາຍບ້ານມີໜ້າທີ່ຄຸ້ມຄອງ ແລະ ຕິກລົງ ກ່ຽວກັບການນຳໃຊ້ພູດເງິນດັ່ງກ່າວ ໂດຍຜ່ານການປຶກສາຫາລື ກັບລູກບ້ານໃນຄອບຄົວເປົ້າໝາຍ. ສ່ວນທາງເບື້ອງລັດຖະບານນັ້ນມີໜ້າທີ່ເຮັດບົດບາດມະຫາພາກ ຄືໃຫ້ຄຳແນະນຳກ່ຽວກັບທ່າແຮງບົ່ມຊ້ອນຂອງແຕ່ລະບ້ານ ເພື່ອພັດທະນາເປັນແຫຼ່ງທ່ອງທ່ຽວ, ຮັບຜິດຊອບການຝຶກອົບຮົມດ້ານວິຊາການກ່ຽວກັບການໃຫ້ບໍລິການແຂກ ແລະ ອື່ນໆ. ກ່ອນໜ້າມີໂຄງການພັດທະນາການທ່ອງທ່ຽວຂັ້ນບ້ານນີ້, ທາງການອິນໂດເນເຊຍສຸມການພັດທະນາການທ່ອງທ່ຽວສະເພາະແຕ່ຢູ່ໃນບັນດາຕົວເມືອງ ທີ່ມີຊື່ສຽງດ້ານການທ່ອງທ່ຽວມາແລ້ວ ຄືໃນເຂດເມືອງບາຫຼີ, ລົມບົກ, ຢົກຈາກາຕາ ແລະ ແຫຼ່ງອື່ນໆ ອີກຈຳນວນໜຶ່ງ. ແຕ່ພໍມີໂຄງການ TVP ເປັນຕົ້ນມາ, ທາງການໄດ້ຂະຫຍາຍແຫຼ່ງທ່ອງທ່ຽວໃຫຍ່ໆຕື່ມອີກ 10 ແຫ່ງ ເພື່ອເປັນຈຸດເຊື່ອມຕໍ່ໂຄງການ TVP. ສິ່ງທີ່ໜ້າອອນຊອນນຳ ກໍຄືທາງການອິນໂດເນເຊຍໄດ້ຈັດໂຄຕາສິນຄ້າ ຫຼື ຜະລິດຕະພັນທ້ອງຖິ່ນໃຫ້ສົມດູນກັບຄວາມຕ້ອງການຂອງເຂດທ່ອງທ່ຽວແຕ່ລະແຫ່ງຄື: ໃຫ້ຊົມໃຊ້ຜະລິດຕະພັນທີ່ຄົນພາຍໃນຜະລິດໄດ້ເອງ, ອັນໃດຜະລິດໄດ້ຫ້າມນຳເຂົ້າຈາກແຫຼ່ງອື່ນໆ. ເຂດທ່ອງທ່ຽວແຕ່ລະເຂດມີສິດກຳນົດໃຫ້ຮ້ານຄ້າ, ຮ້ານອາຫານນຳໃຊ້ຜະລິດຕະພັນພາຍໃນ ໃນອັດຕາສູງ. ດ້ວຍວິທີນີ້, ຄົນໃນຊຸມຊົນເມືອງທ່ອງທ່ຽວ ຫຼື ບ່ອນທ່ອງທ່ຽວຈຶ່ງໄດ້ຮັບຜົນປະໂຫຍດສູງສຸດຈາກທຸລະກິດການທ່ອງທ່ຽວ.

## ຖະແຫຼງ...

(ຕໍ່ຈາກໜ້າ 9)

8.1 ຮ່າງກົດໝາຍສ້າງໃໝ່ 4 ສະບັບ ຄື:

(1) ຮ່າງກົດໝາຍວ່າດ້ວຍ ວຽກງານສາທາລະນະສຸກ;

(2) ຮ່າງ ກົດໝາຍວ່າດ້ວຍ ການຈັດຫາງານ;

(3) ຮ່າງ ກົດໝາຍວ່າດ້ວຍ ອາກອນທີ່ດິນ;

(4 ) ຮ່າງ ກົດໝາຍວ່າດ້ວຍ ເຍົາວະຊົນລາວ.

8.2 ກົດໝາຍປັບປຸງ 6 ສະບັບ ຄື:

(1) ກົດໝາຍວ່າດ້ວຍທະນາຄານທຸລະກິດ;

(2) ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ;

(3) ກົດໝາຍວ່າດ້ວຍສັດປ່າ;

(4) ກົດໝາຍວ່າດ້ວຍການພິມຈຳໜ່າຍ;

(5) ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

(6) ກົດໝາຍວ່າດ້ວຍສານທະຫານ.

ໃນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ສະພາແຫ່ງຊາດໄດ້ສະເໜີໃຫ້ 20 ພາກສ່ວນ ຂຶ້ນຊີ້ແຈງຕໍ່ຄຳຊັກຖາມກ່ຽວກັບບັນຫາທີ່ພົ້ນເດັ່ນຂອງສັງຄົມ ເຊິ່ງສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ ໄດ້ຍົກຂຶ້ນຢູ່ໃນກອງປະຊຸມປະກອບມີ ທ່ານນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງກະສິກຳ-ປ່າໄມ້, ກະຊວງໂຍທາທິການແລະຂົນສົ່ງ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງຍຸຕິທຳ, ກະຊວງສາທາລະນະສຸກ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ, ສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ ແລະ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ.

**III.** ຄຽງຄູ່ກັບການພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນດັ່ງກ່າວມາຂ້າງເທິງນັ້ນ, ໃນໄລຍະດຳເນີນກອງສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ມີປະຊາຊົນບັນດາເຜົ່າສົ່ງຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນ (156) ຫຼາຍກວ່າ 536 ສາຍ ກວມເອົາ 25 ພາກສ່ວນ ແລະ ບັນຫາທີ່ພົ້ນເດັ່ນທີ່ສັງຄົມມີຄວາມສົນໃຈຫຼາຍ ເຊັ່ນ: ບັນຫາໄພເງິນເຟີ້, ຄ່າຄອງຊີບ ແລະ ການຄຸ້ມຄອງລາຄາສິນຄ້າ, ການອະນຸຍາດໃຫ້ສຳປະທານທີ່ດິນ, ການຂຸດຄົ້ນແຮ່ທາດຊະຊາຍ, ດ່ານພາສີສາກົນຢູ່ທ້ອງຖິ່ນ (ການເກັບເງິນນຳລົດບັນທຸກສິນຄ້າ, ກວດກາການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່), ເງິນເດືອນຂອງພະນັກງານ-ລັດຖະກອນ, ການກໍ່ສ້າງເສັ້ນທາງ, ການຂາຍສິນຄ້າໃຫ້ເປັນເງິນກີບ ແລະ ການແລກປ່ຽນເງິນຕາ, ການປາບປາມຢາເສບຕິດ, ຂໍ້ຂັດແຍ່ງທີ່ດິນ ແລະ ຄ່າຊົດເຊີຍຈາກໂຄງການລົງທຶນລັດ (ເສັ້ນທາງລົດໄຟ, ສ້າງສະໜາມຝຶກຊ້ອມການທະຫານຂອງກະຊວງປ້ອງກັນປະເທດ, ເຂື່ອນໄຟຟ້ານ້ຳອູ), ບັນຫາສິ່ງແວດລ້ອມ (ການປ່ອຍນ້ຳເສຍຂອງໂຮງງານອຸດສະຫະກຳເຂດພັດທະນາກວມລວມໄຊເສດຖາ) ເງິນອຸດໜູນນະໂຍບາຍຕໍ່ພະນັກງານເສຍອົງຄະ ແລະ ມາດຖານການຮຽນ-ການສອນຂອງໂຮງຮຽນເຂດຊົນນະບົດ ເຊິ່ງພົວພັນເຖິງການຄຸ້ມຄອງບໍລິຫານລັດ, ການພັດທະນາເສດຖະກິດ-ສັງຄົມ, ການພັດທະນາທີ່ມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມຕໍ່ກັບຄຳຄິດເຫັນຂອງປະຊາຊົນທີ່ສົ່ງມາທາງໂທລະສັບສາຍດ່ວນດັ່ງກ່າວ ກອງເລຂາກອງຊປະຊຸມຈະໄດ້ສັງລວມ ແລະ ມອບໃຫ້ກຳມາທິການທີ່ກ່ຽວຂ້ອງ ເພື່ອປະສານສົມທົບພາກສ່ວນກ່ຽວຂ້ອງຄົ້ນຄວ້າແກ້ໄຂໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

ອີກເທື່ອໜຶ່ງຕາງໜ້າຄະນະປະຈຳສະພາແຫ່ງຊາດ, ຂ້າພະເຈົ້າຂໍຂອບໃຈມາຍັງບັນດາທ່ານພະນັກງານ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າທຸກຊັ້ນຄົນໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ທີ່ໄດ້ຕິດຕາມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້.

ຂໍສະແດງຄວາມຂອບໃຈ ແລະ ຊົມເຊີຍຢ່າງຈິງໃຈມາຍັງພາກສ່ວນສື່ມວນຊົນທຸກສຳນັກຂ່າວ ລວມທັງໂທລະພາບແຫ່ງຊາດ, ວິທະຍຸກະຈາຍສຽງແຫ່ງຊາດ ແລະ ສື່ສິ່ງພິມປະເພດຕ່າງໆ ທີ່ໄດ້ຕິດຕາມຢ່າງໃກ້ຊິດ ເພື່ອເກັບກຳຂ່າວ ແລະ ເຜີຍແຜ່ຢ່າງທັນການກ່ຽວກັບການດຳເນີນກອງປະຊຸມໃນຄັ້ງນີ້ໃຫ້ແກ່ສັງຄົມໄດ້ຮັບຊາບຢ່າງທົ່ວເຖິງ.

ທະນາຄານພັດທະນາລາວ
LDB Bank
ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED
ອຸດສາຫະກຳ ຈົ່ງຈູ້
中鉅實業
ຮ້ານຄຳພູວົງ
PV
PHOUVONG JEWELRY
SCNG
SOMCHAYNEUK GROUP

**ຜູ້ຊີ້ນຳ :**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ :**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ທອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ນາງ ນິດຕາ ຄຸນປາກດີ